**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VII (2021-2025) ແຂວງ ໄຊຍະບູລີ



ພະແນກແຜນການ ແລະ ການລົງທຶນ, ທັນວາ ປີ 2020

# ພາກສະເໜີລວມ

ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ່ VII (2021-2025) ຂອງແຂວງໄຊຍະບູລີ ເປັນແຜນຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ່ XI ຂອງພັກ, ມະຕິກອງປະຊຸມໃຫຍ່ ຄັ້ງທີ່ VII ຂອງອົງຄະນະພັກ ແຂວງໄຊຍະບູລີ ຊຶ່ງເປັນແຜນສືບຕໍ່ຈັດຕັ້ງປະຕິບັດຍຸດທະສາດການພັດທະນາເສດຖະກິດ-ສັງຄົມ 10 ປີ (2016-2025) ແລະ ວິໄສທັດຮອດປີ 2030 ເພື່ອສ້າງບາດລ້ຽວໃຫ່ມໃນການພັດທະນາເສດຖະກິດ-ສັງຄົມຢ່າງແຂງແຮງໝັ້ນທ່ຽງ ແລະ ຍືນຍົງ ໂດຍອີງໃສ່ທ່າແຮງ ແລະ ຄວາມອາດສາມາດບົ່ມຊ້ອນຂອງແຂວງ ເພື່ອກໍານົດທິດທາງລວມ , ຄາດ ໝາຍສູ້ຊົນ, ເປົ້າໝາຍການພັດທະນາເສດຖະກິດ-ສັງຄົມ, ວຽກງານຈຸດສຸມ ແລະ ໂຄງການບູລິມະສິດບົນພື້ນຖານການຂຸດຄົ້ນແຫຼ່ງທຶນຕ່າງໆ ດ້ວຍນະໂຍບາຍສົ່ງເສີມການລົງທຶນເອກະຊົນພາຍໃນ ແລະ ຕ່າງປະເທດ, ເພື່ອສ້າງພື້ນ ຖານໂຄງລ່າງດ້ານເສດຖະກິດ-ສັງຄົມ ແກ້ໄຂຄວາມທຸກຍາກຂອງປະຊາຊົນຢ່າງມີຈຸດສຸມ ເຊິ່ງມີເປົ້າໝາຍຫຼັກແມ່ນສ້າງໃຫ້ໄດ້ອັດຕາການເຕີບໂຕທາງດ້ານເສດຖະກິດ ທີ່ມີຄຸນນະພາບສົມດູນ ແລະ ຍືນຍົງ, ພັດທະນາເສດຖະກິດໄປຄຽງຄູ່ກັບການພັດ ທະນາສັງຄົມ, ການປົກປັກຮັກສາສິ່ງແວດລ້ອມ ແລະ ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບແນ່ໃສ່ໃຫ້ປະ ເທດຊາດກໍ່ຄືແຂວງໄຊຍະບູລີ ຫຼຸດພົ້ນອອກຈາກຄວາມດ້ອຍພັດທະນາໃນປີ 2025

ໂຄງປະກອບຂອງແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VII (2021-2025) ແບ່ງອອກເປັນ 2 ພາກຄື: ພາກສະຫຼຸບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VI (2016-2020) ເຊິ່ງຍົກໃຫ້ເຫັນຜົນສໍາເລັດພົ້ນເດັ່ນ ແລະ ບາງບັນຫາທີ່ຕ້ອງໄດ້ສືບຕໍ່ແກ້ໄຂ ແລະ ພາກແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ່ VII (2021-2025) ເຊິ່ງໄດ້ກໍານົດທິດທາງລວມ, ເປົ້າໝາຍຂອງການພັດທະນາ, ມາດຕະການ ແລະ ກົນໄກການ ຈັດຕັ້ງປະຕິບັດ.

ບັນຫາໃຫ່ມໃນແຜນພັດທະນາເສດຖະກິດ-ສັງຄົມ 5ປີ ຄັ້ງທີ່ VII (2021-2025) ແມ່ນການເຊື່ອມສານລະຫວ່າງແຜນພັດທະນາເສດຖະກິດ-ສັງຄົມກັບແຜນຈັດສັນທີ່ດິນ, ເປັນແຜນທີ່ໄດ້ນໍາໃຊ້ຂໍ້ມູນດ້ານພື້ນທີ່ຈາກແຜນຈັດສັນທີ່ດິນ, ການຄຸ້ມຄອງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມແບບຮອບດ້ານຂອງແຂວງເຂົ້າຕື່ມ.

ແຜນພັດທະນາຄັ້ງນີ້ຍັງໄດ້ກໍານົດຂອບການຕິດຕາມ ແລະ ປະເມີນຜົນ ເຊິ່ງເປັນບ່ອນອີງໃຫ້ຂະແໜງການ ແລະ ບັນດາເມືອງ ໃນການຕິດຕາມຊຸກຍູ້, ຕິດຕາມປະເມີນຜົນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມໃນແຕ່ລະໄລຍະ, ມີຂໍ້ມູນແຜນທີ່, ຕາຕະລາງຊ້ອນທ້າຍທີ່ສະແດງໃຫ້ເຫັນຕົວເລກຄາດໝາຍສູ້ຊົນດ້ານເສດຖະກິດ-ສັງຄົມ, ຂໍ້ມູນສະຖິຕິຂອງຂະແໜງການ, ໂຄງການລົງທຶນບູລິມະສິດພາກລັດ ແລະ ເອກະຊົນ, ພ້ອມກັນນັ້ນໄດ້ສ້າງແຜນທີ່ສະແດງໃຫ້ເຫັນເຖິງທີ່ຕັ້ງພູມສັນຖານ, ການປົກຄອງແຜນທີ່ຈັດສັນທີ່ດິນ ໃນອານາຄົດ ແລະ ຄວາມຕ້ອງການ ເພື່ອການພັດທະນາໃນອານາຄົດຂອງແຂວງໄຊຍະບູລີ.

# ສາລະບານ


ພາກທີ I ສະຫຼຸບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 5 ປີ (2016-2020)................. 1

I. ສະພາບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 5 ປີ (2016-2020). ...................... 1

1. ສະພາບແວດລ້ອມພາຍນອກ. ........................................................................................ 1

2. ສະພາບແວດລ້ອມພາຍໃນ........................................................................................... 1

II. ຜົນສຳເລັດການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 5 ປີ (2016-2020). .................... 2

1. ດ້ານເສດຖະກິດມະຫາພາກ. ....................................................................................... 2

2. ດ້ານການຜະລິດ, ການບໍລິການທີ່ເປັນຫຼັກແຫລ່ງໃຫ້ແກ່ລະບົບເສດຖະກິດຂອງແຂວງ. .................. 3

1). ຂະແໜງກະສິກຳ ແລະ ປ່າໄມ້. .......................................................................................... 3

2). ຂະແໜງອຸດສາຫະກຳ ແລະ ການຄ້າ. ................................................................................. 5

3). ຂະແໜງພະລັງງານ ແລະ ບໍ່ແຮ່............................................................................................ 6

4). ຂະແໜງໂຍທາທິການ ແລະ ຂົນສົ່ງ. ..................................................................................... 7

5). ຂະແໜງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ .................................................... 7

6). ຂະແໜງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ.................................................. 8

7). ຂະແໜງວິທະຍາສາດ ແລະ ເຕັກໂນໂລຊີ.............................................................................. 8

3. ດ້ານວັດທະນະທຳ-ສັງຄົມ. ............................................................................................. 9

1). ຂະແໜງສຶກສາ ແລະ ກິລາ. ................................................................................................ 9

2). ຂະແໜງສາທາລະນະສຸກ. .................................................................................................. 9

3). ຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ. ..................................................10

4). ຂະແໜງແຮງງານ ແລະ ສະຫວັດດີການສັງຄົມ. ..............................................................10

4. ການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ. ................................................. 11

5. ການບໍລິຫານລັດ. ........................................................................................................ 11

6. ການຈັດຕັ້ງປະຕິບັດເປົ້າໝາຍການພັດທະນາແບບຍືນຍົງ, ການເຕີບໂຕສີ ຂຽວ, ເງື່ອນໄຂການຫຼຸດພົ້ນອອກຈາກປະເທດດ້ອຍພັດທະນາ. ....................................................................... 12

III.ຕີລາຄາລວມການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 5 ປີ (2016-2020).................13

1. ຜົນສຳເລັດ: ................................................................................................................ 13

2. ດ້ານຈຸດອ່ອນ ແລະ ຂໍ້ຄົງຄ້າງ ....................................................................................... 14

3. ສາເຫດທີ່ພາໃຫ້ມີຂໍ້ຄົງຄ້າງ:............................................................................................. 14

4. ບາງບົດຮຽນທີ່ຖອດຖອນໄດ້: ........................................................................................ 15

ພາກທີ II ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VII (2021-2025).................................15

I. ສະພາບແວດລ້ອມທີ່ອຳນວຍ, ທ່າແຮງ ແລະ ສິ່ງທ້າທາຍ. ....................................................16

1. ສະພາບສາກົນ ແລະ ພາກພື້ນ. ..................................................................................... 16

2. ສະພາບພາຍໃນ. ........................................................................................................ 16

3. ທ່າແຮງຂອງແຂວງ. ..................................................................................................... 16

4. ສິ່ງທ້າທາຍ. ................................................................................................................ 17

II. ທິດທາງລວມຂອງແຜນພັດທະນາເສດຖະກິດ-ສັງຄົມວຽກຈຸດສຸມ 5 ປີ ຄັ້ງທີ VII (2021-2025).........17

1. ທິດທາງລວມ. ............................................................................................................. 18

2. ເປົ້າໝາຍໃຫຍ່. ............................................................................................................ 18

3. ແຜນວຽກຈຸດສຸມແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VII (2021-2025). ............... 18
ເປົ້າໝາຍທີ່ 01: ເສດຖະກິດເຕີບໂຕມີຄຸນະພາບ ແລະ ຍືນຍົງ. ...................................................18
ເປົ້າໝາຍທີ່ 02: ຊັບພະຍາກອນມະນຸດໃຫ້ມີຄຸນະພາບ .............................................................23
ເປົ້າໝາຍທີ່ 03: ຍົກສູງຊີວິດການເປັນຢູ່ທາງດ້ານວັດຖຸ ແລະ ຈິດໃຈຂອງປະຊາຊົນໃຫ້ດີຂຶ້ນ.....................27
ເປົ້າໝາຍທີ່ 04: ພັດທະນາໄປຕາມທິດສີຂຽວ ເປັນມິດກັບສິ່ງແວດລ້ອມ. ........................................30
ເປົ້າໝາຍທີ່ 05: ພັດທະນາຕາມທິດການຮ່ວມມື, ເຊື່ອມໂຍງ-ເຊື່ອມຈອດ ກັບບັນດາແຂວງ ແລະ ປະເທດໃກ້ຄຽງ. 33
ເປົ້າໝາຍທີ່ 06: ການຄຸ້ມຄອງ-ບໍລິຫານລັດໃຫ້ມີປະສິດທິພາບ ຕາມທິດການຄຸ້ມຄອງລັດດ້ວຍກົດໝາຍ. ......35
III. ມາດຕະການ ແລະ ກົນໄກໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VII. ......36
1. ມາດຕະການຈັດຕັ້ງປະຕິບັດ. ........................................................................ 36
2. ກົນໄກການຈັດຕັ້ງປະຕິບັດ. ......................................................................... 38
3. ການຕິດຕາມ ແລະ ປະເມີນຜົນ. .................................................................... 38

# ພາກທີ I
# ສະຫຼຸບຕີລາຄາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ຂອງແຂວງ 5 ປີ (2016-2020)

## I. ສະພາບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 5 ປີຂອງແຂວງ (2016-2020).

### 1. ສະພາບແວດລ້ອມພາຍນອກ.

ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ແມ່ນໄລຍະທີ່ມີຄວາມທ້າທາຍຫຼາຍດ້ານ ຢູ່ໃນລະດັບພາກພື້ນສາກົນ ແລະ ສະພາບພາຍໃນຂອງປະເທດເຮົາ ໄດ້ສົ່ງຜົນກະທົບທາງກົງ ແລະ ທາງອ້ອມ ຕໍ່ການການພັດທະນາເສດຖະກິດ-ສັງຄົມຂອງແຂວງ ເປັນຕົ້ນແມ່ນ: 1) ບັນຫາສະຖຽນລະພາບທາງດ້ານເສດຖະກິດ-ການເມືອງຄວາມບອບບາງທາງດ້ານເສດຖະກິດມະຫາພາກ; 2) ການປ່ຽນແປງລາຄາຂອງສິນຄ້າ; 3) ຂໍ້ຂັດແຍ່ງຜົນປະໂຫຍດດ້ານການຄ້າ ແລະ ເສດຖະກິດ ລະຫວ່າງປະເທດມະຫາອຳນາດ; 4) ໄພພິບັດທຳມະຊາດ ແລະ 5) ການລະບາດຂອງເຊື້ອພະຍາດຕ່າງໆ.

ໃນປະຈຸບັນ ແມ່ນການລະບາດຂອງພະຍາດອັກເສບປອດຈາກເຊື້ອຈຸລະໂລກສາຍພັນໃໝ່ COVID-19 ທີ່ແຜ່ຂະຫຍາຍວົງກວ້າງ, ເຊິ່ງໄດ້ກາຍເປັນມະຫັນຕະໄພທີ່ສົ່ງຜົນກະທົບຕໍ່ການດ□າລົງຊີວິດ, ເສດຖະກິດ ຂອງຫຼາຍປະເທດໃນໂລກ ກໍ່ຄືເສດຖະກິດຂອງປະເທດເຮົາ ແລະ ຕໍ່ການພັດທະນາເສດຖະກິດສັງຄົມຂອງແຂວງ.

### 2. ສະພາບແວດລ້ອມພາຍໃນ.

ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 5 ປີ (2016-2020) ໄດ້ດຳເນີນໄປໃນສະພາບເສດຖະກິດ-ສັງຄົມຂອງແຂວງ ແລະ ປະເທດເຮົາຍັງສືບຕໍ່ພົບຄວາມຫຍຸ້ງຍາກທາງດ້ານການເງິນ-ເງິນຕາ ແລະ ບັນຫາໄພພິບັດທາງທຳມະຊາດທີ່ເກີດຈາກພາຍຸຊັນຕິນ (Son-Tinh) ໃນປີ 2018 ແລະ ພາຍຸເບບິນກາ (Bebinca) ໃນປີ 2019, ການລະບາດຂອງພະຍາດສັດ ແລະ ສັດຕູພືດ ຢູ່ຫລາຍບໍລິເວນຂອງແຂວງ ໄດ້ສ້າງຄວາມເສຍຫາຍຕໍ່ການຜະລິດ ຂອງປະຊາຊົນ, ນອກຈາກນັ້ນແລ້ວ ໃນທ້າຍ ປີ 2019 ເປັນຕົ້ນມາແຂວງພວກເຮົາຍັງໄດ້ຮັບຜົນກະທົບຢ່າງຫນັກຫນ່ວງຈາກການລະບາດຂອງເຊື້ອພະຍາດອັກເສບປອດ ເຊື້ອຈຸນລະໂລກ ສາຍພັນໃຫມ່ COVID-19.

ເຖິງຢ່າງໃດກໍ່ຕາມ, ພາຍໃຕ້ການຊີ້ນຳ-ນຳພາຢ່າງໃກ້ຊິດຂອງຄະນະພັກ, ອົງການປົກຄອງທຸກຂັ້ນ ບວກກັບຄວາມບຸກບືນສູງ ຂອງບັນດາຂະແໜງການ, ອົງການປົກຄອງຂັ້ນເມືອງ-ຂັ້ນບ້ານ, ຄວາມເປັນເຈົ້າການຂອງປະຊາຊົນບັນດາເຜົ່າ, ການສະໜັບສະໜູນຂອງບັນດາຫົວໜ່ວຍການຜະລິດ, ທຸລະກິດ, ຜູ້ປະກອບການ ແລະ ອົງການຈັດຕັ້ງສາກົນຕ່າງໆ ໄດ້ເຮັດໃຫ້ການພັດທະນາພື້ນຖານເສດຖະກິດ-ສັງຄົມຂອງແຂວງ ຂະຫາຍຕົວຢ່າງຕໍ່ເນື່ອງ, ໂຄງການລົງທຶນຂະໜາດໃຫຍ່ໄດ້ຮັບການຈັດຕັ້ງປະຕິບັດມີຜົນສຳເລັດ ສາມາດນຳເອົາຜົນປະໂຫຍດມາໃຫ້ແກ່ປະຊາຊົນ ເປັນຕົ້ນ: ໂຄງການໄຟຟ້າພະລັງຄວາມຮ້ອນຫົງສາ, ໂຄງການໄຟຟ້າພະລັງນໍ້າ ເຂືອນນໍ້າຂອງ, ເສັ້ນທາງຫລວງແຫ່ງຊາດ, ທາງຫຼວງຂອງແຂວງທີ່ເປັນແລວທາງເສດຖະກິດເຊື່ອມໂຍງສູ່ອານຸພາກພື້ນ-ສາກົນ ແລະ ອື່ນໆ. ສິ່ງເຫຼົ່ານັ້ນ, ເປັນຂີດໝາຍແຫ່ງການຫັນປ່ຽນຈາກການພັດທະນາທີ່ເຄີຍອາໄສຊັບພະຍາກອນທຳມະຊາດເປັນຕົ້ນຕໍໄປສູ່ການເສີມຂະຫຍາຍທ່າແຮງ ຂອງແຂວງດ້ວຍການພັດທະນາຕາມທິດຍືນຍົງ, ສີຂຽວ ຫັນໄປສູ່ທັນສະໄໝ ແລະ ນຳໃຊ້ຜົນສຳເລັດທາງດ້ານວິທະຍາສາດ-ເຕັກໂນໂລຊີເຂົ້າສູ່ການຜະລິດ, ທຸລະກິດ ອັນໄດ້ເຮັດໃຫ້ເສດຖະກິດຂອງແຂວງຂະຫາຍຕົວດ້ວຍຈັງວະການເຕີບໂຕຕໍ່ເນື່ອງ, ຊີວິດການເປັນຢູ່ ຂອງປະຊາຊົນດີຂຶ້ນເທື່ອລະກ້າວ, ສັງຄົມມີຄວາມສະຫງົບ ແລະ ມີສະຖຽນລະພາບໜັກແໜ້ນ, ຄວາມທຸກຍາກຂອງປະຊາຊົນຫຼຸດລົງ. ຜົນສຳເລັດພົ້ນເດັ່ນສະແດງອອກດັ່ງລຸ່ມນີ້:

## II. ຜົນສໍາເລັດການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 5 ປີ (2016-2020).

### 1. ດ້ານເສດຖະກິດມະຫາພາກ.

#### 1).ການເຕີບໂຕທາງດ້ານເສດຖະກິດ.

ໃນໄລຍະ 5 ປີ (2016-2020) ເສດຖະກິດຂອງແຂວງ ສືບຕໍ່ຂະຫຍາຍຕົວຢ່າງຕໍ່ເນື່ອງ ສະເລ່ຍຢູ່ໃນລະດັບ 6,7% ຕໍ່ປີ, ລວມຍອດຜະລິດຕະພັນພາຍໃນ GDP ເພີ່ມຂຶ້ນ ຈາກ 7.710 ຕື້ກີບໃນປີ 2015 ມາເປັນ 10.706 ຕື້ກີບ ໃນປີ 2020. ສະເລ່ຍຕໍ່ຫົວຄົນ ເພີ່ມຂຶ້ນ ຈາກ 2.413 ໂດລາສະຫະລັດ ໃນປີ 2015 ມາເປັນ 3.031 ໂດລາ (ອັດຕາແລກປ່ຽນ 8.600 ກີບ/1ໂດລາສະຫະລັດ) ໃນປີ 2020 ເພີ່ມຂຶ້ນ 618 ໂດລາສະຫະລັດ. (ແຜນການ 3.710 ໂດລາສະຫະລັດ, ຫຼຸດຄາດໝາຍ 679 ໂດລາສະຫະລັດ).

- ໂຄງປະກອບເສດຖະກິດ: ຫັນປ່ຽນໄປຕາມທິດຫັນເປັນອຸດສາຫະກໍາ ແລະ ທັນສະໄໝ ເທື່ອລະກ້າວ ເຊິ່ງສະແດງອອກ: ຊັດສ່ວນຂະແໜງກະສິກໍາໃນໂຄງປະກອບເສດຖະກິດໄດ້ຫຼຸດລົງ ຈາກ 33,5% ໃນປີ 2015 ມາເປັນ 26,3% ໃນປີ 2020 (ແຜນການ 26,8%), ຊັດສ່ວນອຸດສາຫະກໍາ ເພີ່ມຂຶ້ນ ຈາກ 33,2% ໃນປີ 2015 ມາເປັນ 35,9% ໃນປີ 2020 (ແຜນການ37,7%) ແລະ ຊັດສ່ວນຂະແໜງບໍລິການເພີ່ມຂຶ້ນ ຈາກ 33% ປີ 2015 ມາເປັນ 37,8% ໃນປີ 2020 (ແຜນການ 35,5%); ໃນນີ້, ຂະແໜງກະສິກ□າ ເພີ່ມຂຶ້ນໂດຍສະເລ່ຍ 3%, ຂະແໜງ ອຸດສາຫະກ□າ ເພີ່ມຂຶ້ນໂດຍສະເລ່ຍ 9,6% ແລະ ຂະແໜງບໍລິການ ເພີ່ມຂຶ້ນໂດຍສະເລ່ຍ 6,5%.

- ອັດຕາເງິນເຟີ້: ໄດ້ເໜັງຕີງຢູ່ໃນລະດັບທີ່ກໍານົດໄວ້ຕາມແຜນ 5 ປີ (ຕໍ່າກ່ວາອັດຕາການຂະຫຍາຍຕົວຂອງເສດຖະກິດ) ໂດຍສະເລ່ຍ ຢູ່ໃນລະດັບ 2,85% ຕໍ່ປີ. ປັດໄຈຕົ້ນຕໍທີ່ສົ່ງຜົນກະທົບເຮັດໃຫ້ເງິນເຟີ້ເພີ່ມຂຶ້ນແມ່ນຍ້ອນເກີດໄພທໍາມະຊາດ, ການລະບາດຂອງພະຍາດ ທີ່ກະທົບຕໍ່ການຜະລິດກະສິກໍາ ແລະ ການບໍລິການ, ເຊິ່ງເຮັດໃຫ້ລາຄາສິນຄ້າປະເພດພືດຜັກ ແລະ ຊີ້ນ ເພີ່ມສູງຂຶ້ນ ນອກຈາກນີ້ ການຜະລິດພາຍໃນຍັງບໍ່ທັນຕອບສະໜອງຄວາມຕ້ອງການຂອງສັງຄົມ, ສິນຄ້າອຸປະໂພກ-ບໍລິໂພກ ຈໍານວນໜຶ່ງແມ່ນນໍາເຂົ້າຈາກຕ່າງປະເທດມີລາຄາສູງຂຶ້ນຍ້ອນການອ່ອນຄ່າຂອງເງິນກີບ.

- ອັດຕາແລກປ່ຽນ: ເງິນກີບທຽບໃສ່ສະກຸນເງິນຕາຕ່າງປະເທດ ສະກຸນຫຼັກເໜັງຕີງຢູ່ໃນເກນທີ່ຄວບຄຸມໄດ້ຄື: ເງິນກີບທຽບໃສ່ເງິນໂດລາສະຫະລັດ ສະເລ່ຍປີ 2016 ອ່ອນຄ່າ 0,36 %; ປີ 2017 ອ່ອນຄ່າ 2,03%; ປີ 2018 ແຂງຄ່າ 0,03% ແລະ ປີ 2019 ອ່ອນຄ່າ 3,59%; ເງິນກີບທຽບໃສ່ບາດມີການເໜັງຕີງເພີ່ມຂຶ້ນ ປີ 2016 ແຂງຄ່າ 3,27%, ປີ 2017 ອ່ອນຄ່າ 5,68%, ປີ 2018 ອ່ອນຄ່າ 6,62% ແລະ ປີ 2019 ອ່ອນຄ່າ 7,59%. ສາຍເຫດມາຈາກ: ການຂາດດຸນການຄ້າ, ການຜະລິດສິນຄ້າພາຍໃນບໍ່ແຂງແຮງ ແລະ ບໍ່ພຽງພໍກັບຄວາມຕ້ອງການຂອງຕະຫຼາດ ບວກກັບປັດໄຈພາຍນອກທີ່ສະກຸນເງິນໂດລາສະຫະລັດ ແລະ ເງິນບາດໄທແຂງຄ່າຂຶ້ນໃນຕະຫຼາດສາກົນ;

ປັດໃຈທີ່ຊຸກຍູ້ການຂະຫຍາຍຕົວເສດຖະກິດສ່ວນໃຫຍ່ມາຈາກ ຂະແໜງອຸດສາຫະກໍາ ແລະ ຂະແໜງກະສິກໍາ ໂດຍສະເພາະການສົ່ງອອກຜົນຜະລິດກະສິກໍາ ແລະ ອຸດສາຫະກໍາ ສ່ວນຂະແໜງບໍລິການ ມີທ່າຂະຫຍາຍຕົວດີ ແຕ່ປະກອບສ່ວນຕໍ່ເສດຖະກິດຍັງບໍ່ທັນແຂງແຮງ.

ສາເຫດຕົ້ນຕໍ: ການຂະຫຍາຍຕົວຂອງເສດຖະກິດບໍ່ສະໝໍ່າສະເໝີ ແລະ ບໍ່ບັນລຸໄດ້ຕາມແຜນການວາງໄວ້ຍ້ອນວ່າ: ການປ່ຽນແປງໂຄງປະກອບການຜະລິດກະສິກໍາບໍ່ທັນແຂງແຮງ ປັດໃຈອື່ນອີກແມ່ນໄດ້ຮັບຜົນກະທົບຈາກໄພທໍາມະຊາດ, ພະຍາດລະບາດ; ອຸດສາຫະກໍາປຸງແຕ່ງ ແລະ ການບໍລິການຂະຫຍາຍຕົວຊ້າ ໂດຍສະເພາະແມ່ນ: ການບໍລິການທີ່ພັກພາອາໄສ, ການບໍລິການຮ້ານອາຫານ ແລະ ຮ້ານບັນເທີງຕ່າງໆ ທີ່ຕິດພັນກັບການທ່ອງທ່ຽວ.

ເຖິງວ່າການຂະຫຍາຍຕົວຂອງເສດຖະກິດຈະບໍ່ບັນລຸຕາມແຜນທີ່ວາງໄວ້ ແຕ່ເປັນການເຕີບໂຕຂອງເສດຖະກິດທີ່ມາຈາກການຜະລິດຕົວຈິງ ເຊິ່ງເປັນພື້ນຖານອັນໜັກແໜ້ນໃຫ້ແກ່ການພັດທະນາເສດຖະກິດໃນຕໍ່ໜ້າມີການເຕີບໂຕທີ່ມີຄຸນະພາບ, ມີຈຸດສຸມ, ຍືນຍົງ ແລະ ສີຂຽວ.

**2). ການດຸ່ນດ່ຽງງົບປະມານແຫ່ງລັດ.**

**ດ້ານລາຍຮັບ: ສາມາດປະຕິບັດລາຍຮັບງົບປະມານ** ໄດ້ທັງໝົດ 3.697,14 ຕື້ກີບ, ເທົ່າກັບ 84,86%, ຂອງແຜນ (ແຜນການ 4.356,40 ຕື້ກີບ) ກວມເອົາ 7,9% ຂອງ GDP ໃນນີ້:

- ລາຍຮັບພູດສູນກາງ: ປະຕິບັດໄດ້ 2.686 ຕື້ກີບ, ເທົ່າກັບ 85,74% ຂອງແຜນການ (ແຜນການ 3,132 ຕື້ກີບ) ກວມເອົາ 5,8% ຂອງ GDP.
- ລາຍຮັບພູດທ້ອງຖິ່ນ: ປະຕິບັດໄດ້ 1.009,34 ຕື້ກີບ, ເທົ່າກັບ 82,48% ຂອງແຜນການ (ແຜນ 1.223,68 ກີບ) ກວມເອົາ 2,1% ຂອງ GDP.

**ດ້ານລາຍຈ່າຍ**: ປະຕິບັດໄດ້ 2.332,34 ຕື້ກີບ, ເທົ່າກັບ 86,77%,ຂອງແຜນ (ແຜນ2.687,91ຕື້ກີບ). **ດຸ່ນດ່ຽງຈາກສູນກາງ**: ປະຕິບັດໄດ້ 1.335,15 ຕື້ກີບ, ລື່ນແຜນ 12,9% (ແຜນ1.182,57ຕື້ກີບ).

**3). ການດຸ່ນດ່ຽງນາເຂົ້າ-ສົ່ງອອກ.**

ໄດ້ປັບປຸງກົນໄກລະບົບການຄ້າລະຫວ່າງປະເທດ ໂດຍສະເພາະອຳນວຍຄວາມສະດວກທາງດ້ານການອະນຸຍາດນຳເຂົ້າ-ສົ່ງອອກສິນຄ້າໃຫ້ແກ່ພາກທຸລະກິດ ເຮັດໃຫ້ການນຳເຂົ້າມີທ່າອຽງເພີ່ມຂຶ້ນ.

- **ການສົ່ງອອກ:** ປະຕິບັດໂດຍລວມ 179,35 ລ້ານໂດລາ ທຽບໃສແຜນ 5 ປີ ປະຕິບັດໄດ້ 29,95% ຂອງແຜນການ (ແຜນ 5ປີ 456 ລ້ານໂດລາສະຫະລັດ), ສິນຄ້າທີ່ສົ່ງອອກຫຼາຍກວ່າໝູແມ່ນ ພືດກະສິກຳ 111,60 ລ້ານໂດລາສະຫະລັດ, ເຄື່ອງປ່າຂອງດົງມູນຄ່າ 4,7 ລ້ານໂດລາສະຫະລັດ.

- **ການນຳເຂົ້າ:** ປະຕິບັດໂດຍລວມ 180,42 ລ້ານໂດລາ ທຽບໃສແຜນ 5 ປີ ປະຕິບັດໄດ້ 63,7% ຂອງແຜນການ (ແຜນ 5 ປີ 283 ລ້ານໂດລາສະຫະລັດ) ສິນຄ້ານຳເຂົ້າຫຼາຍກວ່າໝູແມ່ນ: ນ້ຳມັນເຊື້ອໄຟ ມີມູນຄ່າ 97,3 ລ້ານໂດລາສະຫະລັດ, ອຸປະກອນໄຟຟ້າ, ເຄື່ອງກໍ່ສ້າງ ແລະ ສິນຄ້າບໍລິໂພກ ມີມູນຄ່າ 63,9 ລ້ານໂດລາສະຫະລັດ ແລະ ສິນຄ້າອື່ນໆ ມູນຄ່າ 19,11 ລ້ານໂດລາສະຫະລັດ.

- **ດຸ່ນດ່ຽງການຄ້າ**: ຂາດດຸນ 1,07 ລ້ານໂດລາສະຫະລັດ.

**4). ການດຸ່ນດ່ຽງແຮງງານ ແລະ ການສ້າງວຽກເຮັດງານທາ.**

ການດຸ່ນດ່ຽງແຮງງານຕາມທິດຫັນເປັນອຸດສະຫະກຳ ແລະ ທັນສະໄໝ ຕາມອັດຕາສ່ວນໂຄງປະກອບແຮງງານ ທົ່ວແຂວງມີກຳລັງແຮງງານ ທັງໝົດ 294.218 ຄົນ, ຍິງ 137.916 ຄົນ ໃນນັ້ນ: ຂົງເຂດກະສິກຳ 217.265 ຄົນ ກວມເອົາ 73,8% (ແຜນການໃຫ້ຫລຸດລົງເປັນ 70% ໃນປີ 2020); ຂົງເຂດອຸດສາຫະກຳ ຈຳນວນ 27.295 ຄົນ ກວມເອົາ 9,3% (ແຜນການໃຫ້ເພີ່ມຂຶ້ນເປັນ 18% ໃນປີ 2020) ແລະ ຂົງເຂດບໍລິການ 46.763 ຄົນ ກວມເອົາ 15,9% (ແຜນການໃຫ້ເພີ່ມຂຶ້ນເປັນ 12% ໃນປີ 2020), ມີຜູ້ຫວ່າງງານ 2.745 ຄົນ ກວມເອົາ 1%. (ແຜນ 5 ປີ ອັດຕາການຫວ່າງງານໃນລະຫວ່າງ 1,5-2% ຂອງກຳລັງແຮງງານ).

**5). ການລົງທຶນເພື່ອການພັດທະນາ**

ສາມາດລະດົມທຶນທົ່ວສັງຄົມໄດ້ທັງໝົດ 12.032,9 ຕື້ກີບ ເທົ່າກັບ 70,24% ຂອງແຜນ (ແຜນການ 17.130 ຕື້ກີບ) ກວມເອົາ 25,71% ຂອງ GDP.

- ທຶນຈາກງົບປະມານລັດ ປະຕິບັດໄດ້ 423,62 ຕື້ກີບ ກວມເອົາ 3,52% ຂອງການລົງທຶນທັງໝົດ.
- ທຶນຊ່ວຍເຫຼືອລ້າ ແລະ ກູ້ຢືມ ປະຕິບັດໄດ້ 982,24 ຕື້ກີບ ກວມເອົາ 8,16% ຂອງການລົງທຶນທັງໝົດ.
- ທຶນຂອງເອກະຊົນທັງພາຍໃນ ແລະ ຕ່າງປະເທດໃນກິດຈະການສຳປະທານ ແລະ ກິດຈະການທົ່ວໄປ ໄດ້ທັງໝົດ 7.122,66 ຕື້ກີບ ກວມເອົາ 59,19% ຂອງການລົງທຶນລວມ.
- ສິນເຊື່ອທະນາຄານ ປະຕິບັດໄດ້ 3.504,39 ຕື້ກີບ ກວມເອົາ 29,12% ຂອງການລົງທຶນທັງໝົດ.

## 2. ດ້ານການຜະລິດ, ການບໍລິການທີ່ເປັນຫຼັກແຫລ່ງໃຫ້ແກ່ລະບົບເສດຖະກິດຂອງແຂວງ.

**1). ຂະແໜງກະສິກຳ ແລະ ປ່າໄມ້.**

- **ການຜະລິດເຂົ້າ:** ໄດ້ສຸມທຸກກຳລັງແຮງ ໃນການຊຸກຍູ້ ຫັນການຜະລິດກະສິກຳໄປສູ່ ອຸດສາຫະກຳ ແລະ
ທັນສະໄໝເທື່ອລະກ້າວ ໂດຍສຸມໃສ່ການນຳໃຊ້ເຕັກນິກ ແລະ ເຕັກໂນໂລຊີໃໝ່ເຂົ້າໃນການຜະລິດ ເພື່ອຍົກສະມັດ ຕະພາບໃຫ້ສູງຂຶ້ນ ແລະ ຫຼຸດຜ່ອນຕົ້ນທຶນການຜະລິດ ເວົ້າລວມແລ້ວ ການຜະລິດເຂົ້າຮັບປະກັນການບໍລິໂພກພາຍໃນ ແລະ ຕອບສະໜອງໃຫ້ບັນດາແຂວງອ້ອມຂ້າງຈຳນວນໜຶ່ງ, 5 ປີຜ່ານມາສາມາດຜະລິດໄດ້ທັງໝົດ 907.194 ໂຕນ ( ປີ 2016 ຜະລິດໄດ້ 200.802 ໂຕນ, ປີ 2017 ຜະລິດໄດ້ 193.084 ໂຕນ, ປີ 2018 ຜະລິດໄດ້ 181.304 ໂຕນ, ປີ 2019 ຜະລິດໄດ້ 152.022 ໂຕນ, ປີ 2020 ຄາດວ່າຈະຜະລິດໄດ້ 180.000 ໂຕນ). ເມື່ອງທຽບໃສ່ 5 ປີຜ່ານມາເຫັນວ່າ ເນື້ອທີ່ປູກເຂົ້າ ຫຼຸດລົງ 883 ເຮັກຕາ, ຜົນຜະລິດຫຼຸດລົງ 44.730 ໂຕນ ແລະ ໃສ່ແຜນການ 5 ປີ (231.000 ໂຕນ) ແມ່ນສາມາດປະຕິບັດໄດ້ພຽງ 66% ສາເຫດທີ່ເຮົາບໍ່ສາມາດບັນລຸໄດ້ຕາມແຜນທີ່ວາງໄວ້ ຍ້ອນວ່າ ລະບົບຊົນລະປະທານບໍ່ຮັບການພັດທະນາໄປຕາມແຜນ, ການເຮັດຊົນລະກະເສດບໍ່ກວ້າງຂວາງ, ການຫັນປ່ຽນດິນນາເປັນດິນປະເພດອື່ນ, ການຫັນໄປປູກພືດຊະນິດອື່ນທີ່ໃຫ້ເສດຖະກິດດີກວ່າ ແລະ ໄດ້ຮັບຜົນກະທົບຈາກໄພພິບັດທາງທຳມະຊາດເປັນຕົ້ນແມ່ນ ໄພແຫ້ງແລ້ງ-ນ້ຳຖ້ວມ, ສັດຕູພືດ, ພະຍາດລະບາດ.

- **ການປູກພືດສະບຽງອາຫານ**: ການຜະລິດພືດສະບຽງແມ່ນມີການຂະຫຍາຍຕົວດີ, ໂດຍສະເພາະພືດທີ່ຊົມໃຊ້ເປັນອາຫານຫຼັກ ແມ່ນມີຄວາມພຽງພໍໃນການບໍລິໂພກ; ຮອດປະຈຸບັນມີເນື້ອທີ່ປູກພືດສະບຽງອາຫານຕ່າງໆ 18.812 ເຮັກຕາ, ທຽບໃສ່ປີ 2015 ເນື້ອທີ່ເພີ່ມຂຶ້ນ 2.925 ເຮັກຕາ, ທຽບໃສ່ແຜນ 5 ປີ ເພີ່ມຂຶ້ນ 12%; ຜົນຜະລິດ 140.624 ໂຕນ ທຽບໃສ່ ປີ 2015 ເພີ່ມຂຶ້ນ 64.950 ໂຕນ, ທຽບໃສ່ແຜນ 5 ປີ ປະຕິບັດໄດ້ 88%, ໃນນີ້:

+ ສາລີຫວານ: ເນື້ອທີ່ 2.719 ເຮັກຕາ, ທຽບໃສ່ປີ 2015 ເພີ່ມຂຶ້ນ 1.812 ເຮັກຕາ, ທຽບໃສ່ຄາດໝາຍເພີ່ມຂຶ້ນ 1% (2.684 ເຮັກຕາ), ຜົນຜະລິດໄດ້ 26.664 ໂຕນ, ເພີ່ມຂຶ້ນ 22.404 ໂຕນ, ທຽບໃສ່ຄາດໝາຍປະຕິບັດໄດ້ 90%.
+ ເຜືອກມັນ: ເນື້ອທີ່ 925 ເຮັກຕາ, ທຽບໃສ່ 2015 ເພີ່ມຂຶ້ນ 189 ເຮັກຕາ, ທຽບໃສ່ຄາດໝາຍໄດ້ 82%, (1.127 ເຮັກຕາ) ຜົນຜະລິດໄດ້ 6.902 ໂຕນ, ເພີ່ມຂຶ້ນ 3.075 ໂຕນ, ທຽບໃສ່ຄາດໝາຍໄດ້ 54%.
+ ໄມ້ໃຫ້ໝາກ: ເນື້ອທີ່ໃຫ້ຜົນ 2.342 ເຮັກຕາ, ທຽບໃສ່ 2015 ເພີ່ມຂຶ້ນ 700 ເຮັກຕາ ທຽບໃສ່ຄາດໝາຍລື່ນ 13% (2.068 ເຮັກຕາ); ຜົນຜະລິດ 14.054 ໂຕນ, ເພີ່ມຂຶ້ນ 5.415 ໂຕນ ທຽບໃສ່ແຜນການປະຕິບັດໄດ້ 81%.
+ ພືດຜັກຕ່າງໆ: ເນື້ອທີ່ 12.826 ເຮັກຕາ, ທຽບໃສ່ 2015 ເນື້ອທີ່ເພີ່ມຂຶ້ນ 224 ເຮັກຕາ, ທຽບໃສ່ຄາດໝາຍລື່ນ 17%. (10.957 ເຮັກຕາ); ຜົນຜະລິດໄດ້ 93.004 ໂຕນ, ເພີ່ມຂຶ້ນ 34.056 ໂຕນ ທຽບໃສ່ຄາດໝາຍປະຕິບັດໄດ້ 93%.

- **ການປູກພືດເປັນສິນຄ້າ**: ຮອດປະຈຸບັນມີເນື້ອທີທັງໝົດ 112.000 ເຮັກຕາ, ທຽບໃສ່ 2015 ເນື້ອທີ່ເພີ່ມຂຶ້ນ 3.852 ເຮັກຕາ, ທຽບໃສ່ຄາດໝາຍປີ 2020 ປະຕິບັດໄດ້ 98% (114.300 ເຮັກຕາ), ຜົນຜະລິດ 1.240.000 ໂຕນ ທຽບໃສ່ປີ 2015 ຜົນຜະລິດເພີ່ມຂຶ້ນ 462.638 ໂຕນ, ທຽບໃສ່ຄາດໝາຍ 2020 ປະຕິບັດໄດ້ 78% (ແຜນ 1.590.000ໂຕນ). ***ປັດໄຈພົ້ນເດັ່ນ***: ໄດ້ຊຸກຍູ້ສົ່ງເສີມນັກລົງທຶນພາຍໃນ ແລະ ຕ່າງປະເທດລົງ ທຶນປູກພືດເປັນສິນຄ້າ ຕິດພັນກັບຄວາມຕ້ອງການຂອງຕະຫຼາດ (ຮູບແບບ2+3) ເປັນຕົ້ນ: ເຂົ້າ, ຖົ່ວເຫຼືອງຝັກສົດ, ໄມ້ໃຫ້ໝາກ, ໝາກໂມ, ກ້ວຍຫອມ ແລະ ອື່ນໆ.

+ ມັນຕົ້ນ: ມີເນື້ອທີ 28.486 ເຮັກຕາ, ທຽບໃສ່ 2015 ເພີ່ມຂຶ້ນ 17.002 ເຮັກຕາ ທຽບໃສ່ຄາດໝາຍລື່ນ4% (27.436 ເຮັກຕາ). ຜົນຜະລິດທັງໝົດ 872.385 ໂຕນ ເພີ່ມຂຶ້ນ 520.626 ໂຕນ ທຽບໃສ່ຄາດໝາຍໄດ້ 97%.

+ ສາລີແຂງ: ມີເນື້ອທີ 37.707 ເຮັກຕາ ທຽບໃສ່ 2015 ຫຼຸດລົງ 13.434 ເຮັກຕາ ທຽບໃສ່ຄາດໝາຍ ປະຕິບັດໄດ້ 92% (40.916 ເຮັກຕາ). ຜົນຜະລິດທັງໝົດ 189.343 ໂຕນ ຫຼຸດລົງ 99.552 ໂຕນ ທຽບໃສ່ຄາດໝາຍໄດ້ 86%.
+ ໝາກເດືອຍ: ມີເນື້ອທີ 22.238 ເຮັກຕາ ທຽບໃສ່ 2015 ຫຼຸດລົງ 16.022 ເຮັກຕາ, ທຽບໃສ່ຄາດໝາຍ ໄດ້ 94% (23.700 ເຮັກຕາ). ຜົນຜະລິດທັງໝົດ 62.083 ໂຕນ ຫຼຸດລົງ 46.564 ໂຕນ ທຽບໃສ່ ຄາດໝາຍໄດ້ 80%
+ ສຳລັບເນື້ອທີ່ປູກຢາງພາລາໃນທົ່ວແຂວງ: ມີເນື້ອທີ່ປູກທັງໝົດ 8.941,84 ເຮັກຕາ, ມາຮອດປະຈຸບັນມີ ເນື້ອທີ່ສາມາດປາດຢາງ ໄດ້ແລ້ວ 7.235,83 ເຮັກຕາ, ສະມັດຕະພາບ 1,56 ໂຕນ/ເຮັກຕາ.

ທົ່ວແຂວງມີກຸ່ມຜະລິດທັງໝົດ 373 ກຸ່ມ, ເພີ່ມຂຶ້ນ108 ກຸ່ມ, **ສິ່ງທີ່ເປັນປັດໃຈໃໝ່:** ໄດ້ສ້າງກຸ່ມຜະລິດ ແນວພັນເຂົ້າ 10 ກຸ່ມ, ກຸ່ມປູກພືດສະອາດ 5 ກຸ່ມ ແລະ ປັດໃຈພົ້ນເດັ່ນ ໄດ້ສ້າງຕົວແບບສະຫະກອນສົ່ງເສີມ ກະສິກຳ 1 ສະຫະກອນ.

**- ການລ້ຽງສັດ ແລະ ການປະມົງ:** ເພື່ອຄໍ້າປະກັນທາງດ້ານສະບຽງອາຫານເຫັນວ່າ ການລ້ຽງສັດມີການ ຂະຫຍາຍຕົວເຊິ່ງສະແດງອອກໃນປີ 2019 ຈຳນວນສັດລ້ຽງຂະຫຍາຍຕົວ 13,38%, ທຽບໃສ່ປີ 2015 ເພີ່ມຂຶ້ນ 7,66%, ທຽບໃສ່ແຜນການ 5 ປີ (ຝູງສັດຂະຫຍາຍຕົວສະເລ່ຍ 7%) ຖືວ່າປະຕິບັດໄດ້ລື່ນແຜນ 91% ຝູງສັດ ໃຫຍ່ທັງໝົດ 482.448 ໂຕ, ເພີ່ມຂຶ້ນ 140.398 ໂຕ, ສາມາດຕອບສະໜອງການບໍລິໂພກພາຍໃນໄດ້ 50,68 ກິໂລ/ຄົນ/ປີ ທຽບໃສ່ປີ 2015 ເພີ່ມຂຶ້ນ 4,45 ກິໂລ/ຄົນ/ປີ ທຽບໃສ່ແຜນ (55 ກິໂລ/ຄົນ/ປີ) ສາມາດປະຕິບັດ ໄດ້ 92%, ການສັກຢາປ້ອງກັນພະຍາດສັດ ສາມາດສັກໄດ້ ສະເລ່ຍ 20% ຂອງຈຳນວນຝູງສັດໃນແຕ່ລະປີ. ໃນ ປີ 2019 ມີຟາມລ້ຽງສັດທັງໝົດ 101 ຟາມ ທຽບໃສ່ 5 ປີຜ່ານມາຟາມລ້ຽງ ສັດເພີ່ມຂຶ້ນ 12 ຟາມ. ສາມາດ ຜະລິດໄຂ່ໄດ້ 24.597.350 ໜ່ວຍ ທຽບ ໃສ່ປີ 2015 ເພີ່ມຂຶ້ນ 10.312.710 ໜ່ວຍ, ໃນ 5 ປີ ສົ່ງສັດອອກ ເປັນສິນຄ້າໄດ້ທັງໝົດ 264.159 ໂຕ, ໃນນັ້ນ: ຄວາຍ 31.911 ໂຕ, ງົວ 46.003 ໂຕ, ໝູ 186.245 ໂຕ. ການ ລ້ຽງປາກະຊັງເພີ່ມຂຶ້ນຈາກ 93 ກະຊັງ ມາເປັນ 189 ກະຊັງ.

**ອັນທີ່ພົ້ນເດັ່ນແມ່ນ:** ການລ້ຽງສັດໃຫຍ່ດ້ວຍວິທີການຂຸນ, ການທອມ ເພື່ອສົ່ງອອກ, ການລ້ຽງປາກະຊັງ ສາມາດຕອບສະໜອງພາຍໃນນັບມື້ນັບເພີ່ມຂຶ້ນ.

**- ຊົນລະປະທານ:** ຜ່ານມາໄດ້ສຸມທຶນເຂົ້າໃສ່ວຽກງານພັດທະນາພື້ນຖານໂຄງລ່າງຊົນລະປະທານ ເພື່ອ ຮັບປະກັນການສະໜອງນໍ້າ ທົດເນື້ອທີການຜະລິດ, ມາຮອດປະຈຸບັນທົ່ວແຂວງມີຊົນລະປະທານຖາວອນທັງໝົດ 356 ແຫ່ງ, ເພີ່ມຂຶ້ນ 12 ແຫ່ງ, ເນື້ອທີ່ຮັບນໍ້າຊົນລະປະທານເພີ້ມຂຶ້ນຈາກ 9.980 ເຮັກຕາ ມາເປັນ 11.429 ເຮັກຕາໃນປະຈຸບັນເພີ່ມຂຶ້ນ 1.448 ເຮັກຕາ ປະຕິບັດໄດ້ 73,26% ຂອງແຜນການ ແລະ ເນື້ອທີ່ສະໜອງນໍ້າ ລະດູແລ້ງເພີ້ມຂຶ້ນຈາກ 4.790 ເຮັກຕາ ມາເປັນ 5.437 ເຮັກຕາໃນປະຈຸບັນ ເພີ່ມຂືນ 647 ເຮັກຕາ ປະຕິບັດໄດ້ 54,37% ຂອງແຜນການ.

**- ດ້ານປ່າໄມ້**: ໄດ້ຖືວຽກດັ່ງກ່າວນີ້ເປັນບຸລິມະສິດສຳຄັນ ແລະ ເອົາໃຈໃສ່ຄຸ້ມຄອງຊັບພະຍາກອນປ່າໄມ້ ຕາມລະບຽບກົດໝາຍ ແນໃສ່ການປົກປັກຮັກສາປ່າໄມ້ໃຫ້ຍືນຍົງ ແລະ ເນື້ອທີ່ປົກຫຸ້ມປ່າໄມ້ທົ່ວແຂວງປີ 2017 ຢູ່ໃນລະດັບ 71%. ແຕ່ຜົນການສຳຫຼວດໃນທ້າຍປີ 2019 ເຫັນວ່າອັດຕາການປົກຫຸ້ມຂອງປ່າໄມ້ ທົ່ວແຂວງ ຢູ່ໃນ ລະດັບ 57,47% ແຕ່ຕົວເລກຍັງບໍ່ທັນຮັບຮອງຢ່າງເປັນທາງການ, ກວມອັດຕາສ່ວນໃຫຍ່ແມ່ນ: ປ່າສະຫງວນ, ປ່າ ປ້ອງກັນ, ປ່າຜະລິດ, ປູກໄມ້ໄດ້ 2.778 ກວ່າເຮັກຕາ, (ທຽບໃສ່ແຜນການປະຕິບັດໄດ້ລື່ນແຜນ 11%), ຟື້ນຟູປ່າ ໄມ້ທຳມະຊາດໄດ້ທັງໝົດ 75.598 ກວ່າເຮັກຕາ (ທຽບໃສ່ແຜນການປະຕິບັດໄດ້ລື່ນແຜນ 70%), ຂຶ້ນທະບຽນ ສວນປູກໄມ້ໄດ້ 7.170 ກວ່າເຮັກຕາ (ທຽບໃສ່ເນື້ອທີ່ປູກໄມ້ ຂຶ້ນທະບຽນໄດ້ພຽງແຕ່ 63,27%).

2). **ຂະແໜງອຸດສາຫະກຳ ແລະ ການຄ້າ.**

ການພັດທະນາວຽກງານອຸດສາຫະກຳ ແລະ ການຄ້າ ກໍ່ມີບາດກ້າວການຂະຫຍາຍຕົວເພີ່ມຂຶ້ນຢ່າງຕໍ່ເນື່ອງ ຕາ ໜ່າງການຄ້າ ໄດ້ຂະຫຍາຍຈາກຕົວເມືອງລົງສູ່ເຂດຊົນນະບົດຫ່າງໄກສອກຫລີກຫລາຍຂຶ້ນ. ທົ່ວແຂວງມີຕະຫລາດ 40 ແຫ່ງ ເພີ່ມຂຶ້ນ 9 ແຫ່ງ, ສາມາດສ້າງລາຍຮັບໃຫ້ປະຊາຊົນ ຈາກການແລກປ່ຽນຊື້ຂາຍ ຫລາຍຂຶ້ນ; ນອກນີ້ຍັງ

ໄດ້ຊຸກຍູ້ສົ່ງເສີມ ພູມປັນຍາການຜະລິດທີ່ເປັນເອກະລັກຂອງທ້ອງຖິ່ນ ແລະ ມີຜະລິດຕະພັນໄດ້ຖືກຮັບຮອງກາໝາຍສິນຄ້າໂອດ່ອບ (ODOP) 13 ປະເພດ ຢູ່ໃນ 6 ເມືອງ ຄື: ເມືອງ ໄຊຍະບູລີ, ເມືອງພຽງ, ເມືອງໄຊສະຖານ, ເມືອງບໍ່ແຕນ, ເມືອງຊຽງຮ່ອນ ແລະ ເມືອງຫົງສາ.

ການປຸງແຕ່ງຜະລິດຕະພັນພາຍໃນ ໄດ້ມີບາດກ້າວຂະຫຍາຍຕົວເພີ່ມຂຶ້ນໃນແຕ່ລະປີ ເຊິ່ງໃນທົ່ວແຂວງມີໂຮງງານອຸດສາຫະກໍາ ແລະ ຫັດຖະກໍາຈໍານວນ 2.186 ແຫ່ງ, ມີທຶນທັງໝົດ 1.117,70 ຕື້ກີບ, ທຽບໃສ່ ປີ 2015 ເພີ່ມຂຶ້ນ 13,38%, ມີໂຮງງານຂະໜາດໃຫຍ່ 52 ແຫ່ງ, ຂະໜາດກາງ 56 ແຫ່ງ ແລະ ຂະໜາດນ້ອຍ 2.078 ແຫ່ງ,ມູນຄ່າການຜະລິດດ້ານອຸດສາຫະກໍາ ແລະ ຫັດຖະກໍາ ບັນລຸ 986,77 ຕື້ກີບ, ທຽບໃສ່ 5 ປີຜ່ານມາເພີ່ມຂຶ້ນ 21,97% ແລະ ມູນຄ່າການຈໍາໜ່າຍຜະລິດຕະພັນດ້ານອຸດສາຫະກໍາ ແລະ ຫັດຖະກໍາ ບັນລຸ 1.236,48 ຕື້ກີບ, ທຽບໃສ່ 5 ປີຜ່ານມາເພີ່ມຂຶ້ນ 21,43% ໃນ 5 ປີຜ່ານມາ ມີໂຮງງານທີ່ໄດ້ສ້າງຕັ້ງໃໝ່ ມີທັງໝົດ 79 ແຫ່ງ ເປັນຕົ້ນ: ໂຮງງານປູນຊີເມັນ, ໂຮງງານປຸຍຊີວະພາບ, ໂຮງງານອົບແຫ້ງສາລີ-ໝາກເດືອຍ ແລະ ນໍ້າດື່ມ. ມູນຄ່າການຈໍລະຈອນສິນຄ້າ ພາຍໃນ ມີມູນຄ່າ 569,47 ຕື້ກີບ, ໂດຍສະເລ່ຍຕໍ່ປີ 142,36 ຕື້ກີບ ຕໍ່ປີ

ໄດ້ສຸມໃສ່ໃນການສ້າງສະພາບແວດລ້ອມດ້ານລະບຽບຫລັກການ ແລະ ການຄຸ້ມຄອງສິ່ງທີ່ໄດ້ອໍານວຍໃຫ້ແກ່ການສ້າງຕັ້ງ ແລະ ດໍາເນີນທຸລະກິດຂະໜາດນ້ອຍ-ກາງ ໂດຍຫຼຸດຂັ້ນຕອນ ແລະ ເວລາ, ສ້າງເງື່ອນໄຂໃຫ້ແກ່ການສົ່ງເສີມ ແລະ ດຶງດູດການລົງທຶນຈາກພາຍໃນ ແລະ ຕ່າງປະເທດ. ຮອດປະຈຸບັນທົ່ວແຂວງມີຫົວໜ່ວຍທຸລະກິດທັງໝົດ 10.071 ຫົວໜ່ວຍ, ມີທຶນຈົດທະບຽນທັງໝົດ 4.003,4 ຕື້ກ່ວາກີບ; ໃນນີ້, ຂະແໜງທີ່ມີການລົງທຶນຫລາຍກ່ວາໝູ່ແມ່ນຂະແໜງການຄ້າ ມີຈໍານວນ 4.936 ຫົວໜ່ວຍ ມີທຶນຈົດທະບຽນ 1.383,4 ຕື້ກີບ; ໄດ້ເອົາໃຈໃສ່ຕິດຕາມຄຸ້ມຄອງລາຄາສິນຄ້າໃນທ້ອງຕະຫລາດ ໂດຍສະເພາະສິນຄ້າຍຸດທະສາດທີ່ລັດຄຸ້ມຄອງ 199 ລາຍການ ເຮັດໃຫ້ລາຄາສິນຄ້າໃນທ້ອງຕະຫຼາດ ຢູ່ໃນເກນປົກກະຕິ.

**3). ຂະແໜງພະລັງງານ ແລະ ບໍ່ແຮ່**

ໄດ້ສຸມໃສ່ຂະຫຍາຍຕາຂ່າຍໄຟຟ້າໄປສູ່ຊົນນະບົດ ເປັນຕົ້ນ: ຂະຫຍາຍສາຍສົ່ງໄຟຟ້າແຮງສູງ 115 kv ໄດ້ 526,44 Km ທຽບໃສ່ປີ 2015 ເພີ່ມຂຶ້ນ 232,79 Km; ລະບົບຕາຂ່າຍໄຟຟ້າແຮງກາງ (34,5 kvແລະ 22 kv) ທັງໝົດ 2.231,63 km ທຽບໃສ່ປີ 2015 ເພີ່ມຂຶ້ນ 221,81 km; ຕາຂ່າຍແຮງຕ□່າ 0,4 kv ໄດ້ 1.124,51 km ທຽບໃສ່ປີ 2015 ເພີ່ມຂຶ້ນ 78,46 km. ຮອດປະຈຸບັນມີໄຟຟ້າເຂົ້າເຖິງບ້ານ 430 ບ້ານ ກວມເອົາ 100% ຂອງຈໍານວນບ້ານທັງໝົດໃນທົ່ວແຂວງ, ທຽບໃສ່ ປີ 2015 ເພີ່ມຂຶ້ນ 15 ບ້ານ. ໃນນີ້, ມີບ້ານທີ່ໃຊ້ໄຟຟ້າໃນລະບົບຂອງໄຟຟ້າລາວ ກວມ 424 ບ້ານ ເທົ່າກັບ 98,6% ຂອງຈໍານວນບ້ານທັງໝົດ; ມີຄອບຄົວທີ່ໄດ້ຊົມໃຊ້ໄຟຟ້າແລ້ວ ທັງໝົດ 76.786 ຄອບຄົວ ເທົ່າກັບ 98,35% ຂອງຈໍານວນຄອບຄົວທັງໝົດ ທຽບໃສ່ ປີ 2015 ເພີ່ມຂຶ້ນ 5.622 ຄອບຄົວ. ໃນນີ້, ຊົມໃຊ້ໄຟຟ້າໃນລະບົບຂອງໄຟຟ້າລາວ 76.457 ຄອບຄົວ ເທົ່າກັບ 97,9% ຂອງຈໍານວນຄອບຄົວທັງໝົດ ທຽບໃສ່ ປີ 2015 ເພີ່ມຂຶ້ນ 5.778 ຄອບຄົວ ແລະ ຊົມໃຊ້ໄຟຟ້ານອກລະບົບ (ໄຟຟ້າແສງຕາເວັນ ແລະ ໄຟຟ້າພະລັງງານນ□້າຂະໜາດນ້ອຍ) ມີ 6 ບ້ານ ຈໍານວນ 329 ຄອບຄົວ.

ໄດ້ຄຸ້ມຄອງ, ຕິດຕາມ, ກວດກາ, ຊຸກຍູ້ ສົ່ງເສີມ ການສຶກສາ-ສໍາຫຼວດ ແລະ ກໍ່ສ້າງໂຄງການຜະລິດໄຟຟ້າຢູ່ພາຍໃນແຂວງ ມີ 19 ໂຄງການ, ຄາດຄະເນລວມກໍາລັງຕິດຕັ້ງທັງໝົດ 6.886,2 MW. ໃນນັ້ນ, ຂັ້ນສູນກາງຄຸ້ມຄອງ 8 ໂຄງການ ລວມກໍາລັງຕິດຕັ້ງ 6.803 MW ແລະ ຂັ້ນແຂວງຄຸ້ມຄອງ 11 ໂຄງການ ລວມກໍາລັງຕິດຕັ້ງ 83,2 MW. ອັນພົ້ນເດັ່ນ: ສໍາເລັດການກໍ່ສ້າງໂຄງການແຫຼ່ງຜະລິດໄຟຟ້າ 3 ແຫ່ງ ປະຈຸບັນໄດ້ດໍາເນີນຜະລິດ ແລະ ຈໍາໜ່າຍໄຟຟ້າແລ້ວຄື: ໂຮງງານພະລັງງານໄຟຟ້າຄວາມຮ້ອນຫົງສາ ມີກໍາລັງຕິດຕັ້ງ 1.878 MW; ໂຄງການເຂື່ອນໄຟຟ້ານໍ້າຂອງໄຊຍະບູລີ ມີກໍາລັງຕິດຕັ້ງ 1.285 MW ແລະ ໂຄງການໄຟຟ້າຂະໜາດນ້ອຍນໍ້າຕວງ 30 kw ຢູ່ບ້ານນໍ້າງຶມ ເມືອງພຽງ. ສ່ວນໂຄງການກໍ່ສ້າງເຂື່ອນໄຟຟ້ານໍ້າຮຸ່ງ 1 ມີກໍາລັງຕິດຕັ້ງ 15 MW ມີຄວາມຄືບໜ້າ 74%.

ໄດ້ເອົາໃຈໃສ່ຄຸ້ມຄອງ, ຕິດຕາມ ບັນດາໂຄງການລົງທຶນ ດ້ານທໍລະນີສາດ ແລະ ບໍ່ແຮ່ ທີ່ເຄື່ອນໄຫວຢູ່ພາຍໃນແຂວງ, ມາຮອດປະຈຸບັນ ມີໂຄງການລົງທຶນດ້ານແຮ່ທາດທີ່ສູນກາງ ແລະ ທ້ອງຖິ່ນຄຸ້ມຄອງ ທັງໝົດ 27 ໂຄງການ , ໃນນັ້ນ: ຢູ່ໃນໄລຍະສໍາຫລວດ 6 ໂຄງການ; ຢູ່ໃນໄລຍະສຶກສາຄວາມເປັນໄປໄດ້ ທາງດ້ານເສດຖະກິດ-ເຕັກນິກ 1 ໂຄງການ ແລະ ຢູ່ໃນໄລຍະ ການຂຸດຄົ້ນ 20 ໂຄງການ, ທຽບໃສ່ປີ 2015 ເພີ່ມຂຶ້ນ 5 ໂຄງການ; ກິດຈະການ

ຂຸດຄົ້ນແຮ່ທອງ, ແຮ່ຄຳ ແລະ ແຮ່ເງິນ ຢູ່ບ້ານປາງຄຳ ເມືອງປາກລາຍ ຂອງບໍລິສັດ MPG ມາຍນິງຈຳກັດ ມີຄວາມຄືບໜ້າໃນການກໍ່ສ້າງໂຮງງານ 95%.

**4). ຂະແໜງໂຍທາທິການ ແລະ ຂົນສົ່ງ.**

ພື້ນຖານໂຄງລ່າງໄດ້ຮັບການປັບປຸງ ແລະ ພັດທະນາໃຫ້ດີຂຶ້ນ ເປັນຕົ້ນໄດ້ຍົກລະດັບເສັ້ນທາງຫຼວງແຫ່ງຊາດ ແລະ ເສັ້ນທາງຫຼວງຂອງແຂວງ ສາມາດເຊື່ອມຕໍ່ກັບອານຸພາກພື້ນ ແລະ ບັນດາແຂວງໃນທົ່ວປະເທດ. ໄດ້ກໍ່ສ້າງປັບປຸງເສັ້ນທາງເຊື່ອຕໍ່ແຂວງ-ເມືອງ, ເມືອງ-ກຸ່ມບ້ານ ສາມາດອຳນວຍຄວາມສະດວກໃຫ້ແກ່ການຂົນສົ່ງສິນຄ້າ ແລະ ການບໍລິການ. ທົ່ວແຂວງມີເສັ້ນທາງຍາວທັງໝົດ: 3.304,02 ກມ; ໃນນີ້: ທາງເບຕົງມີ 7 ກມ, ທຽບໃສ່ປີ 2015 ເພີ່ມຂຶ້ນ 100%, ທາງປູອັດສະຟານມີ 85,35 ກມ, ທຽບໃສ່ປີ 2015 ເພີ່ມຂຶ້ນ 13,92 ກມ, ເທົ່າກັບ 2,6%, ທາງປູຢາງສອງຊັ້ນມີ 1.071,67 ກມ, ທຽບໃສ່ປີ 2015 ເພີ່ມຂຶ້ນ 336,51 ກມ, ເທົ່າກັບ 31,4%, ທົ່ວແຂວງມີເສັ້ນທາງບົກເຂົ້າເຖິງແລ້ວ 429 ບ້ານ; ໃນນີ້, ສາມາດທຽວໄດ້ສອງລະດູ 376 ບ້ານ ກວມເອົາ 87%, ທຽບໃສ່ປີ 2015 ເພີ່ມຂຶ້ນ 5,6%.

ໄດ້ເອົາໃຈໃສ່ປົກປັກຮັກສາລະບົບນິເວດວິທະຍາຕາມລຳນ້ຳຂອງ ແລະ ນ້ຳເຫືອງ ກໍ່ສ້າງຕ້ານຕາຝັ່ງເຈື່ອນ (ຊາຍແດນລາວ-ໄທ) ສຳເລັດແລ້ວ 4 ຈຸດ, ລວງຍາວ 2.740 ກມ, ທຽບໃສ່ປີ 2015 ເພີ່ມຂຶ້ນ 26,6%.

ລະບົບການຂົນສົ່ງໄດ້ຮັບການປັບປຸງໃຫ້ເປັນລະບົບທີ່ທັນສະໄໝ ແລະ ມີຄວາມສະດວກວ່ອງໄວ, ກໍ່ສ້າງສະຖານີ ຂົນສົ່ງໂດຍສານ ສຳເລັດ 12 ແຫ່ງ ເທົ່າກັບ 83,3% ຂອງແຜນ, ເປີດສາຍຂົນໂດຍສານພາຍໃນ ແລະ ຕ່າງແຂວງ ສຳເລັດ 4 ສາຍທາງ ເທົ່າກັບ 25% ຂອງແຜນ 5 ປີ ແລະ ເປີດສາຍຂົນສົ່ງໂດຍສານຕ່າງປະເທດ ສຳເລັດ 1 ສາຍທາງ, ຄຸ້ມຄອງ ແລະ ຂຶ້ນທະບຽນພາຫະນະທັງໝົດ 16.218,00 ຄັນ, ເທົ່າກັບ 100% ຂອງແຜນທຽບໃສ່ໄລຍະ 5 ປີຜ່ານມາເທົ່າກັບ 100%, ສອບເສັງ ແລະ ອອກໃບຂັບຂີ່ໄດ້ 5.210 ໃບ.

ເອົາໃຈໃສ່ຄຸ້ມຄອງການກໍ່ສ້າງ ແລະ ພັດທະນາຜັງເມືອງ ເຮັດໃຫ້ຫຼາຍຕົວເມືອງກາຍເປັນເມືອງສີຂຽວ, ສະອາດສວຍງາມ, ໄດ້ປັບປຸງຜັງເມືອງສຳເລັດ 6 ຕົວເມືອງ, ຜັງດ່ານ, ຜັງບ້ານພັດທະນາ ແລະ ບ້ານໃຫຍ່ກາຍເປັນຕົວເມືອງນ້ອຍ ຕາມທິດນຳ 3 ສ້າງ. **ອັນພົ້ນເດັ່ນ**: ຍົກລະດັບດ່ານປະເພນີດ່ານປາງມອນເປັນດ່ານສາກົນ ແລະ ໄດ້ລະດົມທຶນຮອນຈາກປະຊາຊົນເຂົ້າຮ່ວມການກໍ່ສ້າງເສັ້ນທາງເບຕົງ ທາງຮ່ອມພາຍໃນບ້ານ ໃນ 7 ເມືອງ ຈຳນວນ 50 ເສັ້ນລວງຍາວ 7 ກມ, ມູນຄ່າ 3,3 ຕື້ກີບ.

ໄດ້ປັບປຸງ ແລະ ຂະຫຍາຍລະບົບນ້ຳປະປາສຸຂາພິບານ ຈຳນວນ 2 ເມືອງ ແລະ 9 ພື້ນທີ່ ພາຍໃນກຸ່ມບ້ານພັດທະນາ ແລະ ຈຸດສຸມຕ່າງໆ; ຮອດປະຈຸບັນທົ່ວແຂວງມີນ້ຳປະປາຊົມໃຊ້ແລ້ວ 10 ເມືອງ ເພີ່ມຂຶ້ນ 1 ເມືອງ ແລະ 13 ພື້ນທີ່ເຂດບ້ານໃຫຍ່ພັດທະນາ. **ອັນພົ້ນເດັ່ນ**: ໄດ້ລະດົມພາກເອກະຊົນເຂົ້າມາມີສ່ວນຮ່ວມໃນການພັດທະນານ້ຳປະປາຊຸມຊົນ (ທຶນຊ່ວຍເຫຼືອລ້າ ຈາກ ມູນນິທິ ອິດມິດເວດ), ປະຈຸບັນປະຊາກອນໄດ້ຊົມໃຊ້ນ້ຳປະປາທັງໝົດ 78,98% ຂອງປະຊາກອນໃນຕົວເມືອງ ແລະ ກວມເອົາ 33,01% ຂອງປະຊາກອນໃນທົ່ວແຂວງ, ທຽບໃສ່ປີ 2015 ເພີ່ມຂຶ້ນ 9 ພື້ນທີ່.

- ວຽກງານອົງການພັດທະນາ ແລະ ບໍລິຫານຕົວເມືອງ: ຄຸ້ມຄອງ ແລະ ປົກປັກຮັກສາສິ່ງແວດລ້ອມ, ສິ່ງສາທາລະນະປະໂຫຍດ ເຊັ່ນ: ໄຟຟ້າເບື້ອງທາງ, ສວນສາທາລະນະ, ລະບົບເສັ້ນທາງ, ຮ່ອງລະບາຍນ້ຳ ຮັບປະກັນບໍ່ໃຫ້ມີຜົນກະທົບຕໍ່ສິ່ງແວດລ້ອມ. ພ້ອມກັນນັ້ນ, ໄດ້ສ້າງນິຕິກຳຄຸ້ມຄອງ ຕົວເມືອງໃຫ້ມີຄວາມສະຫງົບ ແລະ ເປັນລະບຽບຮຽບຮ້ອຍ.

**5). ຂະແໜງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ**

- ໄດ້ເອົາໃຈໃສ່ຄຸ້ມຄອງ, ປົກປັກຮັກສາ ແລະ ນຳໃຊ້ຊັບພະຍາກອນທຳມະຊາດຢ່າງມີປະສິດທິຜົນ, ມີຄວາມຍືນຍົງ, ບໍ່ສົ່ງຜົນກະທົບຕໍ່ສິ່ງແວດລ້ອມ.
- ສຳຫຼວດຈັດສັນທີ່ດິນ 8 ປະເພດ ຂັ້ນບ້ານສຳເລັດ 168 ບ້ານ, ເທົ່າກັບ 86,15% ຂອງແຜນການ 5 ປີ, ຮອດປະຈຸບັນທົ່ວແຂວງຈັດສັນທີ່ດິນຂັ້ນເມືອງສຳເລັດ 2 ເມືອງ, ຂັ້ນບ້ານສຳເລັດ 262 ບ້ານ, ເທົ່າກັບ 61% ຂອງບ້ານທັງໝົດ; ເກັບກຳຂໍ້ມູນສຳມະໂນທີ່ດິນໄດ້ທັງໝົດ 297.941 ຕອນດິນ, ເນື້ອທີ່ 210.256 ເຮັກຕາ, ທຽບໃສ່ປີ 2015 ເພີ່ມຂຶ້ນ 11.043 ຕອນ; ຂຶ້ນທະບຽນທີ່ດິນ ແລະ ອອກໃບຕາດິນ ໄດ້ທັງໝົດ 47.280 ຕອນ,

ປະຕິບັດໄດ້ເກີນແຜນ 58% (ແຜນການ 30.000 ຕອນ), ມາຮອດປະຈຸບັນທົ່ວແຂວງສາມາດອອກໃບຕາດິນໄດ້ທັງໝົດ 105.850 ຕອນ, ເທົ່າກັບ 35% ຂອງຈຳນວນສຳມະໂນທີ່ດິນໃນທົ່ວແຂວງ. ສ້າງຈຸດຄວບຄຸມສຳລັບການນຳໃຊ້ກ້ອງທີ່ທັນສະໄໝເຂົ້າໃນການສຳຫຼວດວັດ ແທກຂຶ້ນທະບຽນທີ່ດິນໄດ້ 153 ຈຸດ, ເທົ່າກັບ 100% ຂອງແຜນການ.

- ໄດ້ກວດກາຄືນການເຊົ່າ-ສຳປະທານທີ່ດິນສຳເລັດໃນທົ່ວແຂວງ ມີທັງໝົດ 279 ໂຄງການ ມີ 420 ຕອນ, ເນື້ອທີ່ 192.728,29 ເຮັກຕາ, ໃນນັ້ນ: ກິດຈະການເຊົ່າ ມີ 159 ໂຄງການ ມີ 278 ຕອນ, ເນື້ອທີ່ 124,58 ເຮັກຕາ, ສຳປະທານມີ 120 ໂຄງການ ມີ 142 ຕອນ, ເນື້ອທີ່ 192.603,71 ເຮັກຕາ.
- ສຳຫຼວດເກັບກຳຂໍ້ມູນຂຶ້ນບັນຊີ ເພື່ອຄຸ້ມຄອງສາຍນ້ຳພາຍໃນແຂວງ ທັງໝົດ 169 ສາຍນ້ຳ, ແບ່ງອອກເປັນ 12 ອ່າງຮັບນ້ຳ; ສ້າງແຜນຍຸດທະສາດການຄຸ້ມຄອງອ່າງຮັບນ້ຳ 10 ປີ (2016-2025), ແຜນຄຸ້ມຄອງອ່າງຮັບນ້ຳແບບເຊື່ອມສານ 5 ປີ (2016-2020); ໃນນັ້ນ, ໄດ້ສຸມໃສ່ ຄຸ້ມຄອງ 4 ອ່າງຮັບນ້ຳບູລິມະສິດຄື: ອ່າງນ້ຳຄອບ, ອ່າງນ້ຳຮຸ່ງ, ອ່າງນ້ຳພູນ ແລະ ອ່າງນ້ຳຮອຍ. ໄດ້ສຳເລັດການສ້າງສະຖານີເຕືອນໄພແຜ່ນດິນໄຫວ 2 ແຫ່ງ ຢູ່ເມືອງຫົງສາ ແລະ ເມືອງ ປາກລາຍ; ສຳເລັດການກໍ່ສ້າງສະຖານີອຸທົກກະສາດ 2 ແຫ່ງ ຢູ່ ຈຸດນ້ຳຮຸ່ງ ເມືອງ ໄຊຍະບູລີ ແລະ ຈຸດນ້ຳຂອງ ເມືອງປາກລາຍ.
- ໄດ້ເອົາໃຈໃສ່ຕິດຕາມກວດກາການຈັດຕັ້ງປະຕິບັດ ແຜນຄຸ້ມຄອງສິ່ງແວດລ້ອມ ຂອງບັນດາໂຄງການ ທີ່ດຳເນີນຢູ່ພາຍໃນແຂວງ. ອອກໃບຢັ້ງຢືນດ້ານສິ່ງແວດລ້ອມ 1.925 ຫົວໜ່ວຍ ປະຕິບັດເກີນແຜນ 32%. ສ້າງບ້ານຕົວແບບດ້ານສິ່ງແວດລ້ອມ 17 ບ້ານ ເທົ່າກັບ 70,8% ຂອງບ້ານເທດສະບານແຂວງ.

#### 6). ຂະແໜງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ.

ເພື່ອຮັບປະກັນການບໍລິການດ້ານໄປສະນີໃຫ້ສາມາດເຂົ້າເຖິງປະຊາຊົນໃນຕົວເມືອງ ແລະ ຊົນນະບົດ ໄດ້ເອົາໃຈໃສ່ ຄຸ້ມຄອງ ແລະ ແຈກຢາຍໄປສະນີພັນໃຫ້ມີຄວາມວ່ອງໄວ, ຖືກຕ້ອງທັນເວລາ ແລະ ເປັນລະບົບຄົບຊຸດຕາມຫຼັກການຂອງອົງການໄປສະນີລາວ, ສາມາດເຊື່ອມໂຍງກັບອົງການໄປສະນີພາກພື້ນ ແລະ ສາກົນ, ເຊິ່ງປະຈຸບັນມີໜ່ວຍບໍລິການໄປສະນີທັງໝົດຢູ່ 4 ເມືອງຄື: ເມືອງຊຽງຮ່ອນ, ເມືອງຫົງສາ, ເມືອງປາກລາຍ ແລະ ເມືອງພຽງ. ມີຈ່າມໄປສະນີ 13 ແຫ່ງ; ໃນນັ້ນ, ຈ່າມຂົນສົ່ງ 8 ແຫ່ງ, ສາຂາຈຳໜ່າຍສະແຕມ 6 ແຫ່ງ, ມີຕູ້ໄປ 22 ຕູ້.

ຕາໜ່າງດ້ານໂທລະຄົມມະນາຄົມໄດ້ຮັບການປັບປຸງ ແລະ ຂະຫຍາຍຕົວເຂົ້າເຖິງເຂດຫ່າງໄກສອກຫຼີກ, ທົ່ວແຂວງມີສະຖານີຮັບສົ່ງສັນຍານໂທລະສັບທັງໝົດ 869 ສະຖານີ. ໃນນັ້ນ, 2G ມີ 337 ສະຖານີ, 3G ມີ 262 ສະຖານີ ແລະ 4G ມີ 270 ສະຖານີ; ມີບ້ານສາມາດຮັບສັນຍານໂທລະສັບໄດ້ 423 ບ້ານກວມເອົາ 98,8% ຂອງບ້ານທັງໝົດ, ເປີດນຳໃຊ້ເບີໂທລະສັບຕັ້ງໂຕະ ແລະ ມືຖືໄດ້ທັງໝົດ 318,895 ເລກໝາຍ, ສະເລ່ຍ 100 ຄົນຕໍ່ 78 ເລກໝາຍ ທຽບໃສ່ປີ 2015 ປະຕິບັດເພີ່ມຂຶ້ນ 8,3%; ຂະຫຍາຍສາຍກາບໄຍແກ້ວ (Optical Firber Cable) ໄດ້ທັງໝົດ 6.101,6 ກມ ເພີ່ມຂຶ້ນ 130,50 ກມ ເທົ່າກັບ 20,7% ກວມເອົາ 11ເມືອງໃນທົ່ວແຂວງ.

#### 7). ຂະແໜງວິທະຍາສາດ ແລະ ເຕັກໂນໂລຊີ

ໄດ້ເອົາໃຈໃສ່ຄົ້ນຄ້ວາ, ນຳໃຊ້ວິທະຍາສາດ ແລະ ເຕັກໂນໂລຊີ ເພື່ອຮັບໃຊ້ເຂົ້າໃນການພັດທະນາເສດຖະກິດ-ສັງຄົມ, ໄດ້ສຳເລັດການສຳຫຼວດ ແລະ ກຳນົດຂອບເຂດສ່ວນອຸທິຍານພຶກສາສາດຜາຊ້າງ-ຜາຂີ້ໝິ້ນ, ສັນແກ້ວອຸດອນ. ຄຸ້ມຄອງເຄື່ອງໝາຍການຄ້າໄດ້ທັງໝົດ 94 ເຄື່ອງໝາຍ. ໃນນີ້, ສະເໜີຈົດທະບຽນແລ້ວ 24 ເຄື່ອງໝາຍ; ອານຸມັດແລ້ວ 7 ເຄື່ອງໝາຍ, ຄຸ້ມຄອງກວດກາຄຸນນະພາບຜະລິດຕະພັນສິນຄ້າ ໄດ້ທັງໝົດ 860 ລາຍການ; ກວດສອບ-ສອບທຽບຫົວໜ່ວຍວັດແທກຊິງຊັ່ງກົນລະສາດ 1.468 ໜ່ວຍ; ຊິງຊັ່ງເອເລັກໂຕນິກ 114 ໜ່ວຍ; ພາຫະນະວັດແທກຊັ່ງຜອງປໍ້ານ້ຳມັນ 433 ປໍ້າ ມີ 973 ຫົວຈ່າຍ; ໝໍ້ນັບກະແສໄຟຟ້າ 244.349 ໜ່ວຍ, ໝໍ້ນັບນ້ຳປະປາ 53.458 ໜ່ວຍ; ກວດສອບສິນຄ້າຫຸ້ມຫໍ່ 20 ຜະລິດຕະພັນ; ກວດສອບຄຸນນະພາບນ້ຳມັນເຊື້ອໄຟນຳເຂົ້າດ່ານສາກົນ ມີບໍລິມາດທັງໝົດ 838 ລ້ານລິດ, ມີມູນຄ່າ 438,04 ລ້ານໂດລາສະຫະລັດ.

ໄດ້ຊຸກຍູ້ສົ່ງເສີມການນຳໃຊ້ພະລັງງານທົດແທນ ແລະ ວັດສະດຸໃໝ່ເຂົ້າໃນການດຳລົງຊີວິດເຊັ່ນ: ຄົ້ນຄວ້າການຜະລິດ ແລະ ນຳໃຊ້ບໍ່ອາຍແກັສຈາກຂີ້ເຖົ່າລອຍ, ອານຸລັກພັນສັດບົກ-ສັດນໍ້າ ແລະ ພືດທີ່ເປັນຢາທີ່ໃກ້ຈະສູນພັນ.

**ອັນພົ້ນເດັ່ນແມ່ນ**: ໄດ້ຊຸກຍູ້ສົ່ງເສີມຫົວຄິດປະດິດສ້າງ ພູມປັນຍາທ້ອງຖິ່ນທີ່ເປັນນະວັດຕະກ□າໃໝ່ເຂົ້າສູ່ການຜະລິດ ເພື່ອສ້າງມູນຄ່າເພີ່ມຂອງສິນຄ້າ ແລະ ບໍລິການ ແນໃສ່ພັດທະນາຕໍ່ຍອດເຕັກໂນໂລຊີ ໃຫ້ເກີດມີນະວັດຕະກຳໃໝ່ທີ່ທັນສະໄໝ.

## 3. ດ້ານວັດທະນະທຳ-ສັງຄົມ.

### 1). ຂະແໜງສຶກສາ ແລະ ກິລາ.

ໄດ້ສຸມໃສ່ປະຕິບັດວຽກງານຈຸດສຸມຂອງແຜນຍຸດທະສາດການສຶກສາ ແລະ ຍຸດທະສາດການພັດທະນາຊັບພະຍາກອນມະນຸດ ເພື່ອພັດທະນາຄົນໃຫ້ມີຄວາມຮູ້ ແລະ ຄວາມສາມາດ ນັບແຕ່ຊັ້ນອະນຸບານຈົນເຖິງອະຊີວະສຶກສາ ແລະ ວິທະຍາໄລ, ໂດຍການນຳໃຊ້ຫຼັກສູດການຮຽນ-ການສອນ ໃຫ້ຮັບປະກັນທາງດ້ານປະລິມານ ແລະ ຄຸນນະພາບ; ມີນະໂຍບາຍໃຫ້ແກ່ພະນັກງານຄູ-ອາຈານທີ່ສອນດີ-ສອນເກັ່ງ ແລະ ນັກຮຽນ-ນັກສຶກສາ ຜູ້ທີ່ຮຽນດີມີວິໄນ; ໄດ້ເອົາໃຈໃສ່ກໍ່ສ້າງສ້ອມແປງພື້ນຖານໂຄງລ່າງ ເພື່ອຂະຫຍາຍໂອກາດການສຶກສາໃຫ້ທົ່ວເຖິງ ເຊິ່ງເຮັດໃຫ້ວຽກງານການສຶກສາມີຜົນສຳເລັດຫຼາຍດ້ານ.

ຕາໜ່າງການສຶກສາໄດ້ຮັບການຂະຫຍາຍຕົວ ນັບແຕ່ຕົວເມືອງຮອດຊົນນະບົດ; ປະຈຸບັນ ມີໂຮງຮຽນອະນຸບານທັງໝົດ 311 ແຫ່ງ ທຽບໃສ່ສົກປີ 2015-2016 ເພີ່ມຂຶ້ນ 63 ແຫ່ງ, ມີນັກຮຽນ 3-5 ປີ 17.110 ຄົນ ຍິງ 8.388 ຄົນ ເພີ່ມຂຶ້ນ 4.616 ຄົນ, ມີໂຮງຮຽນປະຖົມ 398 ແຫ່ງ ທຽບໃສ່ສົກຮຽນ 2015-2016 ເພີ່ມຂຶ້ນ 1 ແຫ່ງ, ມີນັກຮຽນຊັ້ນປະຖົມສຶກສາທັງໝົດ 38.249 ຄົນ ຍິງ 18.595 ຄົນ ຫຼຸດລົງ 2.664 ຄົນ, ມີໂຮງຮຽນມັດທະຍົມຕອນຕົ້ນ 36 ແຫ່ງ ມີນັກຮຽນ 24.794 ຄົນ ຍິງ 12.330 ຄົນຫຼຸດລົງ 329 ຄົນ, ມີໂຮງຮຽນມັດທະຍົມສົມບູນ 66 ແຫ່ງ ມີນັກຮຽນທັງໝົດ 11.303 ຄົນ ຍິງ 5.438 ຄົນຫຼຸດລົງ 473 ຄົນ. ໄດ້ສືບຕໍ່ຈັດຕັ້ງບຳລຸງມັດທະຍົມຕອນປາຍ ໃຫ້ແກ່ກຳລັງປະກອບອາວຸດ ແລະ ປະຊາຊົນ 5 ເມືອງ (ຄອບ, ຊຽງຮ່ອນ, ພຽງ, ປາກລາຍ ແລະ ບໍ່ແຕນ).

ຄຸນະພາບການສຶກສາໄດ້ຮັບການປັບປຸງຢ່າງຕັ້ງໜ້າ, ການແຂ່ງຂັນສອນດີ-ຮຽນເກັ່ງ ໄດ້ກາຍເປັນຂະບວນການຢ່າງກວ້າງຂວາງ ເຮັດໃຫ້ມີນັກຮຽນສາມາດເປັນຕົວແທນປະເທດລາວ ເຂົ້າຮ່ວມແຂ່ງຂັນຄວາມຮູ້ວິທະຍາສາດກ່ຽວກັບສິ່ງແວດລ້ອມຢູ່ ສປ ຈີນ 2 ຄັ້ງ ຍາດໄດ້ຫຼຽນເງິນປີ 2016 ແລະ ໄດ້ຫຼຽນທອງໃນປີ 2017. ພ້ອມນີ້ຍັງໄດ້ເຂົ້າຮ່ວມການແຂ່ງຂັນສອບເສັງນັກຮຽນເກັ່ງລະດັບຊາດຊັ້ນ ມ7 ສາມາດຍາດໄດ້ອັນດັບທີ່ 1 ວິຊາຟີຊິກສາດ (ສົກຮຽນ 2016-2017) ແລະ ວິຊາຄະນິດສາດ (ສົກຮຽນ 2017-2018); ໄດ້ຂະຫຍາຍຫຼັກສູດສາມັນວິຊາຊີບເຂົ້າໃນໂຮງຮຽນມັດທະຍົມສຶກສາສົມບູນຊົນເຜົ່າ, ໂຮງຮຽນເຕັກນິກວິຊາຊີບແບບປະສົມແຂວງ ໄດ້ຮັບການປະເມີນຢັ້ງຢືນເປັນໂຮງຮຽນມາດຕະຖານຄຸນະພາບລະດັບຊາດ.

ວຽກງານພະລະ-ສິລະປະສຶກສາ ແລະ ກິລາກາຍະກຳ ກໍ່ໄດ້ຮັບຄວາມເອົາໃຈໃສ່ ສາມາດປະກາດໂຮງຮຽນຕົວແບບປອດສິ່ງເສບຕິດໄດ້ 84 ແຫ່ງໃນທົ່ວແຂວງ; ໄດ້ເຂົ້າຮ່ວມການແຂ່ງຂັນກິລານັກຮຽນມັດທະຍົມສຶກສາທົ່ວປະເທດ ຄັ້ງທີ VI ທີ່ແຂວງບໍລິຄຳໄຊ, ສາມາດຍາດໄດ້ 2 ຫຼຽນຄຳ, 6 ຫຼຽນເງິນ 7 ຫຼຽນທອງ. ເຂົ້າຮ່ວມແຂ່ງຂັນກິລາແຫ່ງຊາດທີ່ແຂວງອຸດົມໄຊ ສາມາດຍາດໄດ້ 3 ຫຼຽນຄຳ, 7 ຫຼຽນເງິນ ແລະ 9 ຫຼຽນທອງ; ໄດ້ສ້າງຕັ້ງກອງທຶນກິລາກາຍະກຳ ເພື່ອຮັບໃຊ້ໃຫ້ແກ່ການເຄື່ອນໄຫວຢ່າງເປັນປົກກະຕິ.

### 2). ຂະແໜງສາທາລະນະສຸກ.

ວຽກງານສາທາລະນະສຸກໄດ້ຮັບການຂະຫຍາຍຕົວ ແລະ ພັດທະນາຢ່າງຕໍ່ເນື່ອງ ທາງດ້ານພື້ນຖານໂຄງລ່າງ ແລະ ຄຸນນະພາບການບໍລິການປິ່ນປົວຂອງແພດໝໍໃນທົ່ວແຂວງ.

ໄດ້ປະຕິບັດນະໂຍບາຍສາທາລະນະສຸກ ທົ່ວປວງຊົນ ຕາມທິດຖືເອົາ ການອະນາໄມກັນພະຍາດ ແລະ ສົ່ງເສີມສຸຂະພາບເປັນຕົ້ນຕໍ, ຖືເອົາການປິ່ນປົວ ແລະ ສະໜອງບໍລິການສຸຂະພາບຢ່າງທົ່ວເຖິງ, ມີຄຸນນະພາບ, ຍຸຕິທຳ ແລະ ສະເໝີພາບເປັນສຳຄັນ; ປະຕິຮູບລະບົບສາທາລະນະສຸກຢ່າງຮອບດ້ານ, ສ້າງລະບົບບໍລິການສຸຂະພາບທີ່

ດີຖືເອົາຜູ້ຮັບບໍລິການເປັນໃຈກາງ; ໄດ້ຂະຫຍາຍຕາໜ່າງການບໍລິການດ້ານສາທາລະນະສຸກໄປເຖິງເຂດຊົນນະບົດຫ່າງໄກສອກຫຼີກ ເຮັດໃຫ້ການເຂົ້າເຖິງການບໍລິການກວມ 100%, ເອົາໃຈໃສ່ຈັດຕັ້ງປະຕິບັດມາດຖານການສ້າງບ້ານສາທາລະນະສຸກແບບຢ່າງ ໃຫ້ຮັບປະກັນທາງດ້ານຄຸນນະພາບ, ມາຮອດປະຈຸບັນ ມີບ້ານສາທາລະນະສຸກແບບຢ່າງທັງໝົດ 399 ບ້ານ ເທົ່າກັບ 92,79% ຂອງຈຳນວນບ້ານທັງໝົດ, ທຽບໃສ່ປີ 2015 ເພີ່ມຂຶ້ນ 32 ບ້ານ ເທົ່າກັບ 8,7% ທຽບໃສ່ແຜນປະຕິບັດໄດ້ລື່ນຄາດໝາຍ, ອາຍຸຍືນສະເລ່ຍ 69 ປີ.

ຂະຫຍາຍຕາໜ່າງການບໍລິການກອງທຶນປະກັນສັງຄົມພາກລັດ, ພາກວິສາຫະກິດ ແລະ ມີກອງທຶນປະກັນສຸຂະພາບ ລົງເຖິງໂຮງໝໍນ້ອຍໃນທົ່ວແຂວງ, ປັບປຸງຄຸນນະພາບການປິ່ນປົວຢູ່ແຕ່ລະຂັ້ນ ໃຫ້ກ້າວໄປສູ່ທັນສະໄໝເທື່ອລະກ້າວ; ມີໂຮງໝໍຊຸມຊົນ ສາມາດຜ່າຕັດໄດ້ 4 ແຫ່ງ ທຽບໃສ່ປີ 2015 ເພີ່ມຂຶ້ນ 1 ແຫ່ງ; ປະຈຸບັນມີໂຮງໝໍນ້ອຍທັງໝົດ 77 ແຫ່ງ; ໃນນີ້, ໂຮງໝໍນ້ອຍ ປະເພດ ກ ມີ 22 ແຫ່ງ; ປະເພດ ຂ 55 ແຫ່ງ.

**3). ຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ.**

ໄດ້ພັດທະນາວຽກງານຖະແຫຼງຂ່າວ-ສື່ມວນຊົນໃຫ້ມີຄຸນນະພາບໃໝ່, ທັນສະໄໝ, ວ່ອງໄວ ຕອບສະໜອງຄວາມຕ້ອງການຂອງສັງຄົມ, ໂດຍຫັນປ່ຽນຈາກລະບົບອານາລ໋ອກໄປສູ່ລະບົບດີຈີຕອນ ສາມາດເຊື່ອມຕໍ່ກັບບັນດາແຂວງ ແລະ ສູນກາງ ມີຄວາມສະດວກວ່ອງໄວຂຶ້ນ; ໄດ້ປັບປຸງເນື້ອໃນ, ຮູບແບບລາຍການເພື່ອໂຄສະນາ, ເຜີຍແຜ່ແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ, ວັນສຳຄັນທາງດ້ານປະຫວັດສາດຂອງພັກ-ຂອງຊາດ, ຂະ ບວນການພັດທະນາເສດຖະກິດ-ສັງຄົມ, ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ມີຄວາມວ່ອງໄວທັນເຫດ ການ; ຜະລິດໃບຂ່າວປະຈ□າອາທິດໄດ້ 4.400 ສະບັບ, ເຄື່ອນໄຫວເກັບກຳຂ່າວ ແລະ ຜະລິດຂ່າວພາຍໃນແຂວງ 17.460 ຂ່າວ, ສະເລ່ຍ 3.492 ຂ່າວຕໍ່ປີ, ສົ່ງຂ່າວໃຫ້ບັນດາສຳນັກໜັງສືພິມ ແລະ ວາລະສານຕ່າງໆ 1.325 ຂ່າວ, ສົ່ງໃຫ້ວິທະຍຸກະຈາຍສຽງແຫ່ງຊາດໄດ້ 6.020 ຂ່າວ ແລະ ສົ່ງໃຫ້ໂທລະພາບແຫ່ງຊາດໄດ້ 600 ຂ່າວ. ທົ່ວແຂວງມີ ສະຖານນີວິທະຍຸ 4 ແຫ່ງ (ແຂວງ 1 ແຫ່ງ, ເມືອງ 3 ແຫ່ງ), ມີສະຖານີໂທລະພາບ 1 ແຫ່ງ ແລະ ສະຖານີເຄເບີນທີວີ 1 ແຫ່ງ, ບ້ານທີ່ມີໂທລະໂຂ່ງທັງໝົດ 426 ບ້ານ, ເພີ່ມຂຶ້ນ 42 ບ້ານ.

ວັດທະນະທຳ ແລະ ຮີດຄອງປະເພນີອັນດີງາມຂອງຊາດ-ຂອງເຜົ່າໄດ້ຮັບການປົກປັກຮັກສາ ແລະ ເສີມຂະຫຍາຍໃຫ້ກາຍເປັນສີລະປະມີຫຼາຍສີສັນ, ໄດ້ຍົກລະດັບງານບຸນປະເພນີຂອງທ້ອງຖິ່ນ ຂຶ້ນເປັນເທດສະການ ຕິດພັນກັບວຽກງານທ່ອງທ່ຽວ. ສ້າງບ້ານວັດທະນະທຳ ໄດ້ 82 ບ້ານ, ມາຮອດປະຈຸບັນມີບ້ານວັດທະນາທຳທັງໝົດ 384 ບ້ານ ກວມເອົາ 88,1%, ຫຼຸດຄາດໝາຍວາງໄວ້ 6,9% (ແຜນການ 95%); ສ້າງກົມກອງວັດທະນະທ□າ ໄດ້ 97 ກົມກອງ, ຄອບຄົວວັດທະນະທຳເພີ່ມຂຶ້ນ 9.292 ຄອບຄົວ, ປັດຈຸບັນມີຄອບຄົວວັດທະນາທຳທັງໝົດ 66.992 ຄອບຄົວ ເທົ່າກັບ 90% ຂອງຄອບຄົວທັງໝົດ.

ໄດ້ຊຸກຍູ້ ແລະ ສົ່ງເສີມພາກເອກະຊົນ ລົງທຶນພັດທະນາແຫຼ່ງທ່ອງທ່ຽວທຳມະຊາດ, ພ້ອມທັງປັບປຸງ, ຍົກລະດັບຄຸນນະພາບດ້ານການບໍລິການໃຫ້ດີຂຶ້ນ; ທົ່ວແຂວງມີແຫຼ່ງທ່ອງທ່ຽວທີ່ພັດທະນາແລ້ວ 52 ແຫ່ງ; ສາມາດຶງດູດເອົານັກທ່ອງທ່ຽວໄດ້ທັງໝົດ 613.484 ຄົນ, ທຽບໃສ່ ປີ 2015 ເພີ່ມຂຶ້ນ 51,5%, ສ້າງລາຍຮັບໄດ້ 34 ລ້ານກວ່າໂດລາສະຫະລັດ.

**4). ຂະແໜງແຮງງານ ແລະ ສະຫວັດດີການສັງຄົມ.**

ໄດ້ເອົາໃຈໃສ່ຍົກລະດັບສີມືແຮງງານໃຫ້ມີຄຸນນະພາບ ເພື່ອຕອບສະໜອງຄວາມຕ້ອງການພັດທະນາເສດຖະກິດ-ສັງຄົມ ເປັນຕົ້ນ: ຈັດຝຶກອົບຮົມ ແລະ ພັດທະນາສີມືແຮງງານ ຢູ່ພາຍໃນແຂວງ ໄດ້ 21.613 ຄົນ ເທົ່າກັບ 75% ຂອງແຜນການ (28.550 ຄົນ) ແລະ ຈັດຫາງານພາຍໃນໄດ້ 5.781 ຄົນ ເທົ່າກັບ 17,7% ຂອງແຜນການ (32.500 ຄົນ).

ມີອັດຕາການປົກຄຸມຂອງລະບົບປະກັນສັງຄົມ ມີສະມາຊິກລວມທັງໝົດ 79.706 ຄົນ ເທົ່າກັບ 19,7% ຂອງພົນລະເມືອງ, ມີຈຳນວນສະມາຊິກເພີ່ມຂຶ້ນ 8.001 ຄົນ ລື່ນແຜນການ 35% (ແຜນການ 5.900 ຄົນ).

ໄດ້ປະຕິບັດນະໂຍບາຍຕໍ່ພະນັກງານບຳນານ, ນັກປະຕິວັດອາວຸໂສ, ຜູ້ມີຜົນງານໃນພາລະກິດ ປົກປັກຮັກສາ ແລະ ສ້າງສາປະເທດຊາດ ໄດ້ 783 ຄົນ ເທົ່າກັບ 37,7% ຂອງແຜນການ (ແຜນການ 2.073 ຄົນ) ມູນຄ່າ 12.737 ລ້ານກີບ; ໄດ້ປະຕິບັດນະໂຍບາຍຊ່ວຍເຫຼືອຜູ້ປະສົບໄພພິບັດ ແລະ ຜູ້ດ້ອຍໂອກາດໃນສັງຄົມ ທັງໝົດ

8.497 ຄອບຄົວ ມູນຄ່າ 11,7 ຕື້ກີບ, ປຸກລະດົມເງິນເຂົ້າກອງທຶນແຮຊ່ວຍເຫຼືອສຸກເສີນຜູ້ປະສົບໄພພິບັດໃນທົ່ວແຂວງ ໄດ້ທັງໝົດ ຈໍານວນ 1,69 ຕື້ກີບ ແລະ ນໍາໃຊ້ຊ່ວຍເຫຼືອສຸກເສີນແລ້ວ 1,11 ຕື້ກີບ ປະຈຸບັນຍັງເຫຼືອຢູ່ກອງທຶນ 582 ລ້ານກີບ, ໄດ້ຮັບບໍລິຈາກເລືອດ 637 ຄັ້ງ ມີຜູ້ບໍລິຈາກເລືອດ 13.314 ຄົນ ໄດ້ເລືອດ 13.103 ຖົງ ທຽບໃສ່ແຜນ 5 ປີ ປະຕິບັດໄດ້ເກີນແຜນ 41% (ແຜນການ 9.180 ຖົງ).

ທົ່ວແຂວງມີຫົວໜ່ວຍແຮງງານ ທັງໝົດ 723 ຫົວໜ່ວຍ ທຽບໃສ່ 5 ປີຜ່ານມາຫຼຸດລົງ 9% ເນື່ອງຈາກ 02 ໂຄງການໃຫຍ່ຄືໂຄງການໄຟຟ້າພະລັງງານຄວາມຮ້ອນຫົງສາ ແລະ ໂຄງການເຂື່ອນໄຟຟ້ານໍ້າຂອງໄດ້ສໍາເລັດການກໍ່ສ້າງ ແລະ ບອກກັບຫົວໜ່ວຍແຮງງານຈໍານວນໜຶ່ງແມ່ນໄດ້ຢຸດເຊົາກິດຈະການ ເປັນຕົ້ນ:ໂຮງງານເລື່ອຍໄມ້, ໂຮງງານເຟີນີເຈີ ແລະ ອື່ນໆ.

ສ້າງບ້ານພັດທະນາດ້ານແຮງງານ ແລະ ສະຫວັດດີການສັງຄົມ ໄດ້ທັງໝົດ 82 ບ້ານ ເທົ່າກັບ 35,26% ຂອງຈໍານວນບ້ານທັງໝົດພາຍໃນແຂວງ (430 ບ້ານ).

## 4. ການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ.

ໄດ້ສືບຕໍ່ປະຕິບັດມະຕິ 03/ກມສພ, ມະຕິ 25/ກມສມ, ຂອງກົມການເມືອງສູນກາງພັກ ແລະ ຄໍາສັ່ງເລກທີ 34/ນຍ, ວ່າດ້ວຍທິດທາງ, ເປົ້າໝາຍ ແລະ ມາດຕະການ ສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ, ສ້າງບ້ານເປັນຫົວໜ່ວຍພັດທະນາ ໂດຍເລັ່ງໃສ່ການຈັດສັນພູມລໍາເນົາ ແລະ ບ່ອນທໍາມາຫາກິນ, ການສ້າງບ້ານໃຫຍ່ກາຍເປັນຕົວເມືອງນ້ອຍ, ສະໜອງພື້ນຖານໂຄງລ່າງທີ່ຈໍາເປັນ ພ້ອມທັງສົ່ງເສີມດ້ານວິຊາການ ແລະ ສະໜັບສະໜູນການເຂົ້າເຖິງສິນເຊື່ອ, ກອງທຶນຕ່າງໆ ເພື່ອຊຸກຍູ້ການຜະລິດຂອງປະຊາຊົນ ເຊິ່ງເຮັດໃຫ້ລາຍຮັບ ແລະ ການເຂົ້າເຖິງບໍລິການຂັ້ນພື້ນຖານຂອງປະຊາຊົນເພີ່ມຂຶ້ນ, ປັບປຸງຊີວິດການເປັນຢູ່ຂອງປະຊາຊົນໃຫ້ນັບມື້ນັບດີຂຶ້ນ ຜ່ານຈາກການປະເມີນຕາມດໍາລັດ 309/ລບ; ຄອບຄົວທຸກຍາກຫຼຸດລົງຈາກ 2,56% ໃນປີ 2015 ຍັງເຫຼືອ 1,62% ຂອງຄອບຄົວທັງໝົດໃນປະຈຸບັນ, ບ້ານທຸກຍາກ ມີ 12 ບ້ານ ເທົ່າກັບ 2,78% ຂອງບ້ານທັງໝົດ, ປະຈຸບັນມີບ້ານພັດທະນາທັງໝົດ 278 ບ້ານ ກວມ 64,4% ຂອງຈໍານວນບ້ານທັງໝົດ ເພີ່ມຂຶ້ນ 6%; ໄດ້ປະກາດບ້ານໃຫຍ່ເປັນຕົວເມືອງນ້ອຍແລ້ວ 8 ຈຸດ, ເພີ່ມຂຶ້ນ 3 ຈຸດ ເມືອງທຸກຍາກ ຍັງ 2 ເມືອງ.

ຜ່ານຈາກການເກັບກໍາຂໍ້ມູນຕາມດໍາລັດ 348/ລບ, ຄອບຄົວທີ່ບໍ່ບັນລຸມາດຖານພົ້ນທຸກມີ 6.164 ຄອບຄົວ ເທົ່າກັບ 7,81% ຂອງຄອບຄົວທັງໝົດ, ບ້ານບໍ່ພົ້ນທຸກມີ 71 ບ້ານ ເທົ່າກັບ 16,5%, ເມືອງບໍ່ພົ້ນທຸກມີ 4 ເມືອງ: ເມືອງໄຊຍະບູລີ, ເມືອງຄອບ, ເມືອງຊຽງຮ່ອນ ແລະ ເມືອງໄຊສະຖານ.

## 5. ການບໍລິຫານລັດ.

ອົງການປົກຄອງແຂວງ ໄດ້ເອົາໃຈໃສ່ປັບປຸງວຽກງານຄຸ້ມຄອງ ແລະ ບໍລິຫານລັດໃຫ້ມີຄວາມກະທັດຮັດ, ສອດຄ່ອງ ແລະ ມີປະສິດທິພາບສູງຂຶ້ນກ່ວາເກົ່າ, ໄດ້ປັບປຸງກົງຈັກການຈັດຕັ້ງໃຫ້ມີຄວາມສອດຄ່ອງກັບພາລະບົດບາດ ແລະ ໜ້າທີ່ຕົວຈິງຫຼາຍຂຶ້ນ; ໄດ້ໂຮມຫ້ອງການພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ໄປຂຶ້ນກັບ ພະແນກກະສິກໍາ ແລະ ປ່າໄມ້, ອົງການກາແດງ ໄປຂຶ້ນ ກັບພະແນກແຮງງານ ແລະ ສະວັດດີການສັງຄົມແຂວງ, ຫ້ອງການສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ ວຽກແມ່ ແລະ ເດັກ ໄປຂຶ້ນກັບ ສະຫະພັນແມ່ຍິງແຂວງ. ອົງການປົກຄອງຂັ້ນຕ່າງໆ ໄດ້ປັບປຸງພາລະບົດບາດ ຂອບເຂດສິດ, ໜ້າທີ່ ໃຫ້ແທດເໝາະກັບສະພາບເງື່ອນໄຂຕົວຈິງ ແລະ ໄປຕາມທິດສາມສ້າງ.

- ເພື່ອຮັບປະກັນການຄຸ້ມຄອງລັດດ້ວຍກົດໝາຍໃຫ້ມີຄວາມສັກສິດ, ບັນດາຂະແໜງການໄດ້ເອົາໃຈໃສ່ນໍາເອົາບັນດາລະບຽບກົດໝາຍໄປເຜີຍແຜ່, ເຊື່ອມຊຶມ ໃຫ້ແກ່ນັກທຸລະກິດ, ຜູ້ປະກອບການ, ພໍ່ແມ່ປະຊາຊົນບັນດາເຜົ່າໃຫ້ມີຄວາມຮັບຮູ້, ເຂົ້າໃຈຢ່າງເລິກເຊິ່ງ ຮັບປະກັນສະຖຽນລະພາບທາງດ້ານການເມືອງ, ສັງຄົມມີຄວາມສະຫງົບຍຸດຕິທໍາ, ຂໍ້ຂັດແຍ່ງທາງດ້ານເສດຖະກິດໄດ້ຮັບການແກ້ໄຂ, ຜົນກະທົບທາງດ້ານເສດຖະກິດ-ສັງຄົມ, ສິ່ງແວດລ້ອມ ແລະ ປະກົດການຫຍໍ້ທໍ້ໃນສັງຄົມຫຼຸດລົງເທື່ອລະກ້າວ.

- ທົ່ວແຂວງສາມາດສ້າງບ້ານແບບຢ່າງປະຕິບັດກົດໝາຍ ໄດ້ທັງໝົດ 355 ບ້ານ ເທົ່າກັບ 82,55% ແລະ ສ້າງຄອບຄົວແບບຢ່າງປະຕິບັດກົດໝາຍ ໄດ້ທັງໝົດ 69.674 ຄອບຄົວ ເທົ່າກັບ 88,5%.

## 6. ການຈັດຕັ້ງປະຕິບັດເປົ້າໝາຍການພັດທະນາແບບຍືນຍົງ, ການເຕີບໂຕສີຂຽວ, ເງື່ອນໄຂການຫຼຸດພົ້ນອອກຈາກປະເທດດ້ອຍພັດທະນາ.

ໄດ້ເອົາໃຈໃສ່ຈັດຕັ້ງປະຕິບັດ ເປົ້າໝາຍພັດທະນາແບບຍືນຍົງມີຜົນສຳເລັດຫຼາຍດ້ານເຊັ່ນ:

**1). ຄາດໝາຍດ້ານການສຶກສາ: ມີທັງໝົດ 15 ຄາດໝາຍ ເຊິ່ງໃນນັ້ນ:**

- **ຄາດໝາຍທີ່ບັນລຸ ມີ 5 ຄາດໝາຍ**:
  - + ອັດຕາເຂົ້າຮຽນຂອງເດັກ 5 ປີ ໄດ້ 95,2% ທຽບໃສ່ປີ 2015 ເພີ່ມຂຶ້ນ 6,7 % ລື່ນຄາດໝາຍ 0,2% (ຄາດໝາຍ 95%).
  - + ຈຳນວນເມືອງທີ່ບັນລຸອັດຕາເຂົ້າຮຽນຂອງເດັກ 5 ປີ ສູງກວ່າ 60% ໄດ້ 100% (ຄາດໝາຍ 11 ເມືອງ).
  - + ອັດຕາເຂົ້າຮຽນສຸດທິຊັ້ນປະຖົມ (6-10 ປີ) ປະຕິບັດໄດ້ 99,5% ຫຼຸດລົງ 0,3% ລື່ນຄາດໝາຍ 0,5% (ຄາດໝາຍ 99).
  - + ເພີ່ມຈຳນວນເມືອງມີອັດຕາປະລະຊັ້ນປະຖົມໃຫ້ຕໍ່າກວ່າ 6% ໄດ້ 100% (ຄາດໝາຍ 11 ເມືອງ)
  - + ສົ່ງເສີມມອນຊິນທຸກເພດ, ທຸກໄວ ໄດ້ເຂົ້າຮ່ວມການຫັດກາຍະບໍລິຫານ, ການອອກກຳລັງກາຍປະຕິບັດໄດ້ 36,6% ລື່ນຄາດໝາຍ 6,6% (ຄາດໝາຍ 30%)
- **ຄາດໝາຍທີ່ໃກ້ຈະບັນລຸ ມີ 5 ຄາດໝາຍ:**
  - + ອັດຕາຄ້າງຫ້ອງ ປ.1 ປະຕິບັດໄດ້ 3,6% ເພີ່ມຂຶ້ນ 0,9 % ຍັງ 1,6% (ຄາດໝາຍ 2%)
  - + ອັດຕາຄ້າງຫ້ອງຊັ້ນປະຖົມ ປະຕິບັດໄດ້ 2,7% ຫຼຸດລົງ 1% ຍັງ 0,7% (ຄາດໝາຍ 2%).
  - + ອັດຕາປະລະ ປ.1 ປະຕິບັດໄດ້ 2,1% ຫຼຸດລົງ 4,1 % ຍັງ 1,1% (ຄາດໝາຍ 1%).
  - + ອັດຕາປະລະຊັ້ນປະຖົມສຶກສາ ປະຕິບັດໄດ້ 1,7% ຫຼຸດລົງ 3% ຍັງ 0,7% (ຄາດໝາຍ 1%).
  - + ອັດຕາລອດເຫຼືອຮອດ ປ.5 ປະຕິບັດ 94,1% ເພີ່ມຂຶ້ນ 0,9% ຍັງ 0,9% (ຄາດໝາຍ 95%).
- **ຄາດໝາຍທີ່ບໍ່ບັນລຸ ມີ 5 ຄາດໝາຍ:**
  - + ອັດຕາເຂົ້າຮຽນລວມ ມຕ ປະຕິບັດໄດ້ 86,4% ຫຼຸດລົງ 2,3% ຍັງ 2,6% (ຄາດໝາຍ 89).
  - + ອັດຕາເຂົ້າຮຽນລວມ ມປ ປະຕິບັດໄດ້ 54,6% ເພີ່ມຂຶ້ນ 0,7% ຍັງ 1,4% (ຄາດໝາຍ 60%).
  - + ອັດຕາປະລະ ມຕ ປະຕິບັດໄດ້ 7,6% ເພີ່ມຂຶ້ນ 1,5 % ຍັງ 3,6% (ຄາດໝາຍ 4%).
  - + ສົ່ງເສີມນັກຮຽນທີ່ຮຽນຈົບມັດທະຍົມຕອນຕົ້ນໄດ້ເຂົ້າຮຽນຕໍ່ສາຍອາຊີວະສຶກສາ ປະຕິບັດໄດ້ 1,7% ຍັງ 1,8% (ຄາດໝາຍ 3,5%).
  - + ສົ່ງເສີມໃຫ້ນັກຮຽນຈົບ ມ.7 ເຂົ້າຮຽນຕໍ່ລະດັບຕ່າງໆ ປະຕິບັດໄດ້ 17,3% ຍັງ 9,7% (ຄາດໝາຍ 26%).

**2). ຄາດໝາຍສາທາລະນະສຸກ: ມີທັງໝົດ 10 ຄາດໝາຍ.**

- **ຄາດໝາຍທີ່ບັນລຸ ມີ 9 ຄາດໝາຍ.**
  - + ອັດຕາສ່ວນເດັກນ້ອຍ ອາຍຸລຸ່ມ 5 ປີ ທີ່ມີນໍ້າໜັກຫຼຸດມາດຖານ ເທົ່າກັບ 4,77% ຂອງຈຳນວນເດັກທີ່ໄດ້ຮັບການຕິດຕາມ (ຄາດໝາຍ 5 ປີ 12,2%).
  - + ອັດຕາສ່ວນເດັກນ້ອຍອາຍຸລຸ່ມ 5 ປີ ທີ່ມີລວງສູງຕໍ່າກວ່າມາດຖານ ເທົ່າກັບ 6,48% ຂອງຈຳນວນເດັກທີ່ໄດ້ຮັບການຕິດຕາມ (ຄາດໝາຍປີ 17,7%).
  - + ອັດຕາການຕາຍຂອງເດັກນ້ອຍອາຍຸລຸ່ມ 1 ປີ ເທົ່າກັບ 3,35/1.000 ຂອງເດັກເກີດມີຊີວິດ (ຄາດໝາຍ 5 ປີ 8,3/1.000).
  - + ອັດຕາການຕາຍຂອງເດັກນ້ອຍອາຍຸລຸ່ມ 5 ປີ ເທົ່າກັບ 4,91/1.000 ຂອງເດັກເກີດມີຊີວິດ (ຄາດໝາຍ 5 ປີ 9,5/1.000).
  - + ອັດຕາການຕາຍຂອງແມ່ເທົ່າກັບ 55,82/100.000 ຂອງເດັກເກີດມີຊີວິດ(ຄາດໝາຍ5ປີ 66/100.000)
  - + ອັດຕາການເກີດລູກມີແພດຊ່ວຍເທົ່າກັບ 68% ຂອງການເກີດຄາດຄະເນ (ຄາດໝາຍ 5 ປີ 68%).

+ ອັດຕາການຊົມໃຊ້ນ້ຳສະອາດ ເທົ່າກັບ 94% ຂອງຈຳນວນປະຊາກອນທັງໝົດ (ຄາດໝາຍ 5 ປີ 94%).
+ ອັດຕາການຊົມໃຊ້ວິດຖ່າຍຄອບຄົວ ເທົ່າກັບ 95% ຂອງຈຳນວນຄອບຄົວທັງໝົດ (ຄາດໝາຍ 5 ປີ 95%).
+ ອັດຕາການປົກຄຸມປະກັນສຸຂະພາບ ເທົ່າກັບ 100% ຂອງຈຳນວນປະຊາກອນ.

- **ຄາດໝາຍທີ່ບໍ່ບັນລຸ ມີ 1 ຄາດໝາຍ.**

+ ອັດຕາການສັກຢາກັນພະຍາດໃຫ້ເດັກນ້ອຍອາຍຸ ລຸ່ມ 1 ປີ ເທົ່າກັບ 82% ຂອງຈຳນວນເດັກເປົ້າໝາຍ (ຄາດໝາຍ 5 ປີ 95%).

## III. ຕີລາຄາລວມການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 2016-2020.

### 1. ຜົນສຳເລັດ:

1) ແຂວງ ໄຊຍະບູລີ ສືບຕໍ່ມີສະຖຽນລະພາບທາງດ້ານການເມືອງຢ່າງໜັກແໜ້ນ, ສັງຄົມມີຄວາມສະຫງົບ ແລະ ເປັນລະບຽບຮຽບຮ້ອຍໂດຍພື້ນຖານ, ເສດຖະກິດຂະຫຍາຍຕົວຕໍ່ເນື່ອງ ໃນຈັງຫວະສະເລ່ຍ %6,7 ຕໍ່ປີ , ເຊິ່ງກາຍເປັນປັດໃຈພື້ນຖານໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມ ຂອງແຂວງ.

2) ພື້ນຖານໂຄງລ່າງໄດ້ຮັບການພັດທະນາ ນັບມື້ນັບດີຂຶ້ນ ,ຕອບສະໜອງຄວາມຕ້ອງການໃຫ້ການຄ້າ, ການລົງທຶນ ແລະ ການທ່ອງທ່ຽວ ເປັນຕົ້ນ :ໂຄງການກໍ່ສ້າງແລວທາງເສດຖະກິດທີ່ເຊື່ອມໂຍງ-ເຊື່ອມຈອດກັບບັນດາແຂວງ ແລະ ປະເທດໃກ້ຄຽງ ເຊັ່ນ :ເສັ້ນທາງເມືອງເງິນ-ຊຽງຮ່ອນ-ເມືອງຄອບ ,ແລວທາງເສດຖະກິດ ວຽງຈັນ-ຊຽງໃໝ່ )ນະຄອນຫຼວງວຽງຈັນ-ດ່ານສາກົນພູດູ່ ,(ດ່ານສາກົນປາງມອນ-ກ້ອນຕື້ນ ເມືອງປາກທາ ແຂວງບໍ່ແກ້ວ ; ເສັ້ນທາງຫົງສາ-ເມືອງຈອມເພັດ ແຂວງຫຼວງພະບາງ ໄດ້ສຳເລັດເປັນຮູບປະທຳ.

3)ການລົງທຶນທັງພາກລັດ ແລະ ເອກະຊົນເປັນປັດໃຈສຳຄັນຍູ້ແຮງຂອງການເຕີບໂຕເສດຖະກິດຂອງແຂວງ, ການລົງທຶນ ຂອງພາກເອກະຊົນໃນໂຄງການຂະໜາດໃຫ່ຍເຊັ່ນ :ເຂື່ອນໄຟຟ້ານ້ຳຂອງ, ໂຄງການໄຟຟ້າຫົງສາໄດ້ດຳເນີນການຜະລິດສົ່ງອອກ; ເຂື່ອນໄຟຟ້ານ້ຳຮຸ່ງ 1 ແລະ ໂຄງການຂຸດຄົ້ນແຮ່ຄຳຢູ່ເມືອງປາກລາຍກຽມເຂົ້າສູ່ຂະບວນການຜະລິດ, ຫົວໜ່ວຍການຜະລິດທຸລະກິດຂະໜາດນ້ອຍ, ຂະໜາດກາງໄດ້ຂະຫຍາຍຕົວຢ່າງຕໍ່ເນື່ອງ.

4) ການຈັດຕັ້ງປະຕິບັດເປົ້າໝາຍພັດທະນາແບບຍືນຍົງໃນຂົງເຂດການສຶກສາ, ສາທາລະນະສຸກມີຜົນສຳເລັດຫຼາຍດ້ານ, ຊັບພະຍາກອນທຳມະຊາດ ໄດ້ຮັບການຄຸ້ມຄອງ ແລະ ນຳໃຊ້ຢ່າງມີປະສິດທິຜົນ ໄປຕາມທິດສີຂຽວ ແລະ ຍືນຍົງ ຊີວິດການເປັນຢູ່ຂອງປະຊາຊົນໄດ້ຮັບການພັດທະນາດີຂຶ້ນເທື່ອລະກ້າວ.

5) ຊັບພະຍາກອນມະນຸດໄດ້ຮັບການພັດທະນາຢ່າງເປັນລະບົບຕໍ່ເນື່ອງ, ສ້າງໄດ້ສີມືແຮງງານສາມາດຕອບສະໜອງໃຫ້ແກ່ຕະຫຼາດແຮງງານນັບມື້ນັບເພີ່ມຂຶ້ນ, ການປະຕິບັດນະໂຍບາຍຕໍ່ຜູ້ທີ່ມີຜົນງານ ມີຄຸນງາມຄວາມດີຕໍ່ປະເທດຊາດ ໄດ້ຮັບການເອົາໃຈໃສ່ຢ່າງເໝາະສົມ, ບົດບາດຍິງ-ຊາຍ ໄດ້ຮັບການເສີມຂະຫຍາຍຢ່າງຕັ້ງໜ້າ.

6) ວັດທະນາທຳ ແລະ ຮີດຄອງປະເພນີອັນດີງາມຂອງຊາດ, ຂອງເຜົ່າໄດ້ຮັບການປົກປັກຮັກສາ ແລະ ເສີມຂະຫຍາຍຢ່າງຕັ້ງໜ້າ ກາຍເປັນທ່າແຮງດຶງດູດການທ່ອງທ່ຽວນັບມື້ນັບເພີ່ມຂຶ້ນ.

7) ການບໍລິຫານລັດແຕ່ລະຂັ້ນໄດ້ຮັບການປັບປຸງບູລະນະໃຫ້ໜັກແໜ້ນເຂັ້ມແຂງ, ສາມາດປະຕິບັດພາລະບົດບາດການຄຸ້ມຄອງລັດ-ຄຸ້ມຄອງສັງຄົມ ໃຫ້ມີຄວາມສັກສິດເທື່ອລະກ້າວ.

- **ສາເຫດທີ່ພາໃຫ້ມີຜົນສຳເລັດ:**

1) ແນວທາງນະໂຍບາຍຂອງພັກ-ລັດ ໂດຍສະເພາະ ມະຕິກອງປະຊຸມໃຫຍ່ ຄັ້ງທີ່ X ຂອງພັກ, ມະຕິກອງປະຊຸມໃຫຍ່ຄັ້ງທີ່ VI ຂອງອົງຄະນະພັກແຂວງ, ມະຕິກອງປະຊຸມຄັ້ງປະຖົມມະລຶກສະພາປະຊາຊົນແຂວງຊຸດທີ່ I ຖືກຕ້ອງສອດຄ່ອງກັບຄວາມເປັນຈິງ ແລະ ເປັນບ່ອນອີງໃນການຈັດຕັ້ງປະຕິບັດ.
2) ຄະນະພັກ, ອົງການປົກຄອງ ທຸກຂັ້ນໄດ້ເອົາໃຈໃສ່ ຊີ້ນຳ-ນຳພາຢ່າງໃກ້ສິດ ໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ໃນແຕ່ລະໄລຍະຢ່າງມີປະສິດທິຜົນ.

3) ແຜນພັດທະນາເສດຖະກິດສັງຄົມ 5 ປີ ຂອງແຂວງ ໄດ້ຮັບການຜັນຂະຫຍາຍ ເປັນແຜນການ, ໂຄງການ ອັນລະອຽດຂອງແຕ່ລະຂະແໜງການ; ພ້ອມທັງມີນະໂຍບາຍ, ກົນໄກກະຕຸກຊຸກຍູ້ ແລະ ຕິດຕາມ ກວດກາການຈັດຕັ້ງປະຕິບັດໃຫ້ເກີດດອກອອກຜົນຕົວຈິງ.
4) ຍ້ອນໄດ້ຮັບການສະໜັບສະໜູນ, ຊ່ວຍເຫຼືອ ຈາກບັນດາປະເທດເພື່ອນມິດຍຸດທະສາດ, ປະເທດໃກ້ຄຽງ, ອົງການຈັດຕັ້ງສາກົນ ແລະ ການປະກອບສ່ວນຂອງປະຊາຊົນບັນດາເຜົ່າ, ນັກທຸລະກິດຜູ້ກອບການ ທັງ ພາຍໃນ ແລະ ຕ່າງປະເທດ ເຂົ້າໃນການພັດທະນາຢ່າງຕັ້ງໜ້າ.

**2. ດ້ານຈຸດອ່ອນ ແລະ ຂໍ້ຄົງຄ້າງ**

1) ເສດຖະກິດຂອງແຂວງ ເຖິງວ່າເຕີບໂຕຢ່າງຕໍ່ເນື່ອງ, ແຕ່ຍັງບໍ່ທັນບັນລຸຄາດໝາຍທີ່ວາງໄວ້; ການຜະລິດກະ ສິກຳ ສ່ວນໃຫ່ຍສະມັດຕະພາບຕໍ່າ ,ຄຸນນະພາບບໍ່ທັນດີ, ຄວາມສາມາດແກ້ງແຍ້ງບໍ່ທັນສູງ, ການປຸງແຕ່ງ ຜະລິດຕະພັນກະສິກຳມີລັກສະນະເປັນຜະລິດຕະພັນເຄິ່ງສຳເລັດຮູບ, ການສົ່ງອອກສ່ວນຫຼາຍເປັນວັດຖຸ ດິບ.
2) ການລົງທຶນຂອງພາກລັດ ແລະ ເອກະຊົນ ບໍ່ທັນຕອບສະໜອງຄວາມຕ້ອງການຂອງການພັດທະນາ, ບັນຫາໜີ້ສິນຍັງສືບຕໍ່ແກ່ຍາວ, ການບໍລິການລົງທຶນຍັງຜ່ານຫຼາຍຂັ້ນຂອດ; ການສົ່ງເສີມທຸລະກິດຂະໜາດ ນ້ອຍ ແລະ ຂະໜາດກາງ (SME) ທີ່ເປັນພື້ນຖານໃຫ້ແກ່ການພັດທະນາເສດຖະກິດທີ່ຍືນຍົງບໍ່ທັນຫຼາຍ; ຕ່ອງໂສ້ການຜະລິດ ຍັງບໍ່ທັນໄດ້ຮັບການປັບປຸງຢ່າງແຂງແຮງ.
3) ການຂຸດຄົ້ນລາຍຮັບງົບປະມານບໍ່ສົມຄູ່ຄວາມອາດສາມາດບົ່ມຊ້ອນຂອງແຂວງ, ຖານລາຍຮັບທີ່ໝັ້ນທ່ຽງ ແລະ ຍືນຍົງບໍ່ທັນຫຼາຍ, ການທັນເປັນທັນສະໄໝຍັງຊັກຊ້າ, ປະຕິບັດວິໄນການເງິນຍັງບໍ່ທັນເຂັ້ມງວດ.
4) ການນຳໃຊ້ຊັບພະຍາກອນທຳມະຊາດ ເຂົ້າໃນການພັດທະນາເສດຖະກິດສັງຄົມ, ການສ້າງມູນຄ່າ ເພີ່ມ ຂອງດິນຍັງບໍ່ທັນແຂງແຮງ, ການປ້ອງກັນການເຊາະເຈື່ອນ ແລະ ການປັບປຸງຄຸນນະພາບຂອງດິນຍັງບໍ່ທັນ ໄດ້ຮັບການເອົາໃຈໃສ່ຢ່າງຕັ້ງໜ້າ.
5) ການຈັດຕັ້ງປະຕິບັດເປົ້າໝາຍການພັດທະນາແບບຍືນຍົງຈຳນວນໜຶ່ງຍັງບໍ່ທັນບັນລຸຄາດ ໝາຍ. ຄຸນ ນະພາບຂອງການຮຽນ-ການສອນບໍ່ທັນດີເທົ່າທີ່ຄວນ, ການປະລະຂອງນັກຮຽນຊັ້ນຕ່າງໆມີທ່າອ່ຽງເພີ່ມ ຂຶ້ນ; ການບໍລິການດ້ານສາທາລະນະສຸກບາງບ່ອນບໍ່ທັນໄດ້ມາດຖານ, ອຸປະກອນການແພດບໍ່ພຽງພໍ, ພະ ນັກງານແພດໝໍມີໜ້ອຍ ແລະ ຄວາມຊຳນານງານຍັງຈຳກັດ.
6) ການພັດທະນາຊັບພະຍາກອນມະນຸດ ຍັງບໍ່ທັນສົມຄູ່ກັບຄວາມຕ້ອງການຂອງການພັດທະນາເສດຖະກິດ-ສັງຄົມ, ແຮງງານທີ່ມີສີມື ຊຳນານສະເພາະດ້ານມີຈຳກັດ ບໍ່ສາມາດຕອບສະໜອງຄວາມຕ້ອງການຂອງຕະ ຫຼາດ.
7) ການບໍລິຫານລັດ ແລະ ຄຸ້ມຄອງສັງຄົມ ຕາມກົດໝາຍ ປະສິດທິພາບບໍ່ທັນສູງ, ຍັງມີປະກົດການຫຍໍ້ທໍ້ ເປັນ ຕົ້ນ: ບັນຫາຢາເສບຕິດ, ຂີ້ລັກງັດແງະ, ຫຼິ້ນກິນຟູມເຟືອຍ, ອຸປະຕິເຫດຕາມທ້ອງຖະໜົນ, ການໄປ ອອກ ແຮງງານຢູ່ຕ່າງປະເທດທີ່ບໍ່ຖືກຕ້ອງຕາມລະບຽບກົດໝາຍ ແລະ ອື່ນໆ.

**3. ສາເຫດທີ່ພາໃຫ້ມີຂໍ້ຄົງຄ້າງ:**

1) ການເຊື່ອມຊຶມກຳແໜ້ນ ແລະ ຫັນແນວທາງນະໂຍບາຍຂອງພັກ-ລັດ, ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ (2016-2020) ເປັນແຜນການ, ໂຄງການ ບໍ່ທັນເລິກເຊິ່ງ ແລະ ແທດຕົວຈິງ.
2) ຄວາມຮັບຜິດຊອບ, ຄວາມເປັນເຈົ້າຂອງຂະແໜງການ ແລະ ທ້ອງຖິ່ນຈຳນວນໜຶ່ງ ບໍ່ທັນສູງ, ກົນໄກການ ແບ່ງຂັ້ນຄຸ້ມຄອງບໍ່ທັນດີ, ການປຸກລະດົມແຫຼ່ງທຶນຈາກທຸກພາກສ່ວນໃນສັງຄົມເຂົ້າໃນການພັດທະນາ ເສດຖະກິດ ບໍ່ທັນແຂງແຮງ ແລະ ກ້ວາງຂວາງ.
3) ເສດຖະກິດມະຫາພາກຍັງມີຄວາມບອບບາງ, ການຜະລິດບໍ່ຕິດພັນກັບອຸດສາຫະກຳປຸງແຕ່ງຢ່າງແຂງແຮງ ພ້ອມນັ້ນ, ຍັງໄດ້ຮັບຜົນກະທົບຈາກໄພທຳມະຊາດ: ແຫ້ງແລ້ງ, ນ້ຳຖ້ວມ, ສັດຕູພືດ, ລົມພາຍຸ, ແຜ່ນດິນ ໄຫວ, ພະຍາດລະບາດຕ່າງໆ ແລະ ສິ່ງທ້າທາຍກວ່າໝູ່ແມ່ນການລະບາດຂອງພະຍາດ Covid-19 ເຊິ່ງ ໄດ້ສົ່ງຜົນກະທົບບໍ່ໜ້ອຍຕໍ່ການພັດທະນາເສດຖະກິດ-ສັງຄົມ.

4) ການໂຄສະນາເຜີຍແຜ່ ແນວທາງນະໂຍບາຍຂອງພັກ ລະບຽບກົດໝາຍຂອງລັດ ໃຫ້ແກ່ພະນັກງານ, ນັກທຸລະກິດຜູ້ປະກອບການບໍ່ທັນກ້ວາງຂວາງ ແລະ ບໍ່ເລິກເຊິ່ງ ພາໃຫ້ເກີດມີປະກົດການຫຍໍ້ທໍ້, ມີຊ່ອງວ່າງ ລະເມີດວິໄນແຜນການ-ການເງິນ, ການສວຍໃຊ້ໜ້າທີ່ຕໍາແໜ່ງ ແລະ ອື່ນໆ.
5) ການແບ່ງຂັ້ນຄຸ້ມຄອງ, ການປະສານງານ ລະຫວ່າງສູນກາງ ແລະ ທ້ອງຖິ່ນ ຍັງບໍ່ທັນກົມກຽວ ຕາມທິດນໍາສາມສ້າງ.

**4. ບາງບົດຮຽນທີ່ຖອດຖອນໄດ້:**

1) ການຮັບປະກັນສະຖຽນລະພາບທາງດ້ານການເມືອງ, ຄວາມເປັນລະບຽບຮຽບຮ້ອຍທາງດ້ານສັງຄົມ ເປັນປັດໃຈພື້ນຖານໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມ.
2) ອົງການຈັດຕັ້ງທຸກຂັ້ນຕ້ອງເຊື່ອມຊຶມກໍາແໜ້ນ ແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ ຢ່າງເລິກເຊິ່ງ ແລະ ຜັນຂະຫຍາຍເປັນແຜນການ, ໂຄງການອັນລະອຽດຂອງຕົນ ພ້ອມທັງຊຸກຍູ້ການຈັດຕັ້ງປະຕິບັດໃຫ້ປະກົດຜົນເປັນຈິງໃນແຕ່ລະໄລຍະ.
3) ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ຕ້ອງໄດ້ເອົາໃຈໃສ່ຈັດລຽງບຸລິມະສິດ ຕາມທ່າແຮງຄວາມອາດສາມາດບົ່ມຊ້ອນ; ພ້ອມດຽວກັນນັ້ນ, ກໍ່ໃຫ້ມີຄວາມສົມດູນລະຫວ່າງແຜນການ ແລະ ງົບປະມານທີ່ມີ ໄປຄຽງຄູ່ກັບການດຶງດູດການລົງທຶນເອກະຊົນພາຍໃນ ແລະ ຕ່າງປະເທດ.
4) ຖືເອົາການພັດທະນາເສດຖະກິດເປັນໃຈກາງ ເພື່ອຊຸກຍູ້ ແລະ ສະໜັບສະໜູນການພັດທະນາດ້ານສັງຄົມ, ການອານຸລັກຮັກສາວັດທະນະທໍາ, ຮີດຄອງອັນດີງາມຂອງຊາດ, ຂອງເຜົ່າ ແລະ ການປົກປັກຮັກສາສິ່ງແວດລ້ອມ ຕາມທິດສີຂຽວ ແລະ ຍືນຍົງ.
5) ຖືເອົາການພັດທະນາຊັບພະຍາກອນມະນຸດ, ການສ້າງສີມືແຮງງານທີ່ມີຄຸນນະພາບ, ການນໍາໃຊ້ວິທະຍາສາດ, ເຕັກໂນໂລຊີທີ່ທັນສະໄໝ ເຂົ້າໃນການຜະລິດ ແລະ ການຄຸ້ມຄອງ ເສດຖະກິດ ເປັນກຸນແຈສໍາຄັນຂອງການພັດທະນາເສດຖະກິດ-ສັງຄົມ.
6) ການຕິດຕາມປະເມີນຜົນ ແຜນພັດທະນາເສດຖະກິດ-ສັງຄົມ ຕ້ອງມີການດັດປັບບັນດາຄາດໝາຍ ແລະ ຂອບການຕິດຕາມ ແລະ ປະເມີນຜົນ ໃຫ້ສອດຄ່ອງກັບຕົວຈິງໃນແຕ່ລະໄລຍະ ເພື່ອຮັບປະກັນໃຫ້ເປົ້າໝາຍ, ຄາດໝາຍ ແລະ ຕົວຊີ້ວັດ ສາມາດຈັດຕັ້ງປະຕິບັດຢ່າງມີປະສິດທິຜົນ.

# ພາກທີ II

# ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VII (2021-2025)

ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VII (2021-2025) ເປັນການຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ແລະ ມະຕິກອງປະຊຸມໃຫຍ່ ຄັ້ງທີ VII ຂອງອົງຄະນະພັກແຂວງແຜນສືບຕໍ່ຈັດຕັ້ງປະຕິບັດຍຸດທະສາດການພັດທະນາ ໄລຍະ 10 ປີ (2021-2025) ແລະ ວິໄສທັດ ຮອດປີ 2030 ເພື່ອເປັນບາດລ້ຽວໃໝ່ ໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມ ຢ່າງແຂງແຮງ, ໝັ້ນທ່ຽງ ແລະ ຍືນຍົງ. ເຊິ່ງໄດ້ກໍານົດທິດທາງພື້ນຖານໃນການພັດທະນາເສດຖະກິດ-ສັງຄົມໃນຊຸມປີຕໍ່ໜ້າ ເຮັດໃຫ້ບັນດາປະຖົມປັດໃຈທາງດ້ານການເມືອງ, ເສດຖະກິດ, ວັດທະນະທໍາ-ສັງຄົມ ນັບທັງການພັດທະນາຊັບພະຍາກອນມະນຸດ, ການບໍລິຫານ-ການປົກຄອງລັດ, ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ການຕ່າງປະເທດ ທີ່ມີແລ້ວໃຫ້ໄດ້ຮັບການປັບປຸງຍົກລະດັບໃຫ້ມີຄວາມເຂັ້ມແຂງ, ທຸກຄວາມອາດສາມາດບົ່ມຊ້ອນຂອງແຂວງ ໄດ້ຮັບການພັດທະນາ ບັນດາຂະແໜງຜະລິດ ແລະ ບໍລິການທີ່ເປັນປາຍແຫຼມ, ປະຊາຊົນມີກິນມີໃຊ້ດີຂຶ້ນ, ການຄ້າ ແລະ ການບໍລິການ ໃຫ້ມີຄວາມສົມດູນໝັ້ນຄົງ ແລະ ພົ້ນຈາກສະພາວະດ້ອຍພັດທະນາຢ່າງໜັກແໜ້ນ.

## I. ສະພາບແວດລ້ອມທີ່ອໍານວຍ, ທ່າແຮງ ແລະ ສິ່ງທ້າທາຍ.

### 1. ສະພາບສາກົນ ແລະ ພາກພື້ນ.

ໃນຊຸມປີຕໍ່ໜ້າ ສະພາບການສາກົນ ແລະ ພາກພື້ນ ຍັງຈະສືບຕໍ່ຜັນແປໄປຢ່າງສັບສົນ ແລະ ຄາດຄະເນໄດ້ຍາກ, ສົງຄາມການຄ້າລະຫວ່າງປະເທດ ມະຫາອໍານາດຍັງສືບຕໍ່ແກ່ຍາວ, ຂໍ້ຂັດແຍ່ງ ແລະ ຄວາມບໍ່ສະຫງົບຢູ່ບາງບໍລິເວນ, ການປ່ຽນແປງຂອງລາຄາສິນຄ້າ, ລາຄານໍ້າມັນໃນຕະຫຼາດໂລກ ສືບຕໍ່ສົ່ງຜົນກະທົບຕໍ່ການພັດທະນາເສດຖະກິດ-ສັງຄົມຂອງບັນດາປະເທດກໍ່ຄື ສປປ ລາວ.

ການລະບາດຂອງພະຍາດອັກເສບປອດເຊື້ອຈຸລະໂລກສາຍພັນໃໝ່ (Covid-19) ມີຜົນສະທ້ອນຕໍ່ຊີວິດ, ຊັບສິນ ຂອງຊາວໂລກ ເຮັດໃຫ້ການເຕີບໂຕເສດຖິກິດຂອງບັນດາປະເທດໃນໂລກມີທ່າອ່ຽງຂະຫຍາຍຕົວຊ້າ.

ເສດຖະກິດຂອງບັນດາປະເທດກໍາລັງພັດທະນາ ຈະສືບຕໍ່ພົບຄວາມຫຍຸ້ງຍາກຫຼາຍຢ່າງ ເນື່ອງຈາກການຊະລໍຕົວຂອງການລົງທຶນ, ຕະຫຼາດທຶນ ແລະ ຄວາມບໍ່ໝັ້ນຄົງທາງດ້ານການເມືອງ ພ້ອມທັງຜົນກະທົບຈາກໄພທໍາມະຊາດ ຍັງເປັນປັດໄຈສ່ຽງຕໍ່ການ ເຕີບໂຕເສດຖະກິດ ແລະ ການຫຼຸດລົງຂອງອັດຕາຄວາມທຸກຍາກ.

### 2. ສະພາບພາຍໃນ.

**ສະພາບຈຸດພິເສດ:** ແຂວງ ໄຊຍະບູລີ ຕັ້ງຢູ່ທິດຕາເວັນອອກສ່ຽງເໜືອ ຂອງ ສປປ ລາວ ໃນເສັ້ນຂະໜານ17 ອົງສາ 28 ລິບດາ ຫາ 19 ອົງສາ 15 ລິບດາເໜືອ, ໃນເສັ້ນແວງ 100 ອົງສາ 23 ລິບດາ ຫາ 101 ອົງສາ 55 ລິບດາ ຕາເວັນອອກ, ມີເນື້ອທີທັງໝົດ 16.389 ກິໂລຕາແມັດ, ເນື່ອທີ 80% ເປັຍດິນກ້ອຍຊັນ, ເປັນແຂວງຕັ້ງຢູ່ຝັ່ງຂວາຂອງແມ່ນໍ້າຂອງ, ຊາຍແດນທິດເໜືອ ແລະ ທິດຕາເວັນອອກ ຕິດກັບແຂວງບໍ່ແກ້ວ, ແຂວງອຸດົມໄຊ, ແຂວງ ຫຼວງພະບາງ ແລະ ແຂວງວຽງຈັນ, ທິດຕາເວັນຕົກ ແລະ ທິດໃຕ້ ຕິດກັບ 6 ຈັງຫວັດ ຂອງລາຊະອານາຈັກໄທ ຄື: ຈັງຫວັດເລີຍ, ພິດສະນຸໂລກ,ອຸດຕຣະດິດ, ນ່ານ, ພະເຢົາ ແລະ ຈັງຫວັດຊຽງລາຍ ມີຄວາມຍາວ 647 ກິໂລແມັດ ໃນນີ້: ເປັນດິນຕໍ່ແຜນຕິດຈອດກັບລາຊະອານາຈັກໄທຍາວ 510 ກິໂລແມັດ.

ແຂວງ ໄຊຍະບູລີ ປະກອບມີ 11 ເມືອງ, ມີພົນລະເມືອງທັງໝົດ 407,004 ຄົນ, ມີ 8 ເຜົ່າ ຄື: ເຜົ່າລາວ ກວມ 60,55%, ເຜົ່າກຶມມຸ ກວມ 10,22%, ເຜົ່າ ມົ້ງກວມ 9,79%, ເຜົ່າລື້ ກວມ 7,52%, ເຜົ່າໄປູ ກວມ 6,68%, ເຜົ່າຍວນ ກວມ 3,57%, ເຜົ່າ ອິ່ມ່ຽນ ກວມ 0,99% ແລະ ເຜົ່າ ໄຕດ□າ ກວມ 0,65%, ຄວາມໜາແໜ້ນ ຂອງພົນລະເມືອງ 25ຄົນ/ກິໂລຕາແມັດ.

ແຂວງ ໄຊຍະບູລີ ມີເນື້ອທີ່ຍາວຢຽດຕາມລໍານໍ້າຂອງ ມີຄວາມຍາວປະມານ 261 ກິໂລແມັດ, ສະພາບພື້ນທີ່ໄດ້ແບ່ງການພັດທະນາເປັນ 3 ເຂດພັດທະນາຄື: ເຂດພາກເຫນືອອາກາດຫນາວເຢັນປະກອບມີ: ເມືອງຄອບ, ເມືອງຊຽງຮ່ອນ,ເມືອງເງິນ ແລະ ເມືອງຫົງສາ, ເຂດພາກກາງປະກອບມີ ເມືອງໄຊຍະບູລີ, ເມືອງພຽງອາກາດອົບອຸ່ນ ແລະເມືອງໄຊສະຖານອາກາດຫນາວເຢັນ, ເຂດພາກໃຕ້ປະກອບມີ: ເມືອງປາກລາຍ, ແກ່ນທ້າວ, ບໍ່ແຕນ ແລະ ເມືອງທົ່ງມີໄຊ ອາກາດອົບອຸ່ນ ແລະ ຮ້ອນ, ອຸນນະພູມສະເລ່ຍສູງສຸດ 28,6 ອົງສາເຊ, ສະເລ່ຍຕໍ່າສຸດ 20,5 ອົງສາເຊ.

ເຖິງວ່າສະພາບພາກພື້ນ ແລະ ສາກົນ ມີຄວາມບໍສະຫງົບທາງດ້ານການເມືອງ ແລະ ມີຄວາມຂັດແຍ່ງທາງດ້ານການຄ້າລະຫວ່າງ ປະເທດມະຫາອໍານາດກໍ່ຕາມ, ແຕ່ປະເທດ ກໍ່ຄືແຂວງພວກເຮົາຍັງມີສະຖຽນລະພາບທາງດ້ານການເມືອງ, ມີຄວາມສະຫງົບ, ມີຄວາມເປັນລະບຽບຮຽບຮ້ອຍທາງດ້ານສັງຄົມ, ປະຊາຊົນບັນດາເຜົ່າ ມີຄວາມເຊື່ອໝັ້ນຕໍ່ແນວທາງນະໂຍບາຍຕໍ່ການນໍາພາຂອງພັກ-ລັດ, ຕັ້ງໜ້າປະກອບສ່ວນເຂົ້າໃນການສ້າງສາພັດທະນາປະເທດຊາດ.

ຜ່ານມາ ແຂວງພວກເຮົາຍັງປະເຊີນໜ້າກັບຄວາມຫຍຸ້ງຍາກທ້າງດ້ານເສດຖະກິດການເງິນ, ການປ່ຽນແປງດິນຟ້າອາກາດ, ໄພທໍາມະຊາດ ແລະ ການລະບາດຂອງພະຍາດ Covid-19 ເຊິ່ງເປັນໄພຂົ່ມຂູ່ຕໍ່ຊີວິດການເປັນຢູ່ຂອງປະຊາຊົນ. ຖ້າຫາກຍັງສືບຕໍ່ແກ່ຍາວ ຈະສົ່ງຜົນກະທົບຕໍ່ ການພັດທະນາຢູ່ພາຍໃນປະເທດ ກໍ່ຄືແຂວງໄຊຍະບູລີ.

### 3. ທ່າແຮງຂອງແຂວງ.

- **ທ່າແຮງດ້ານເສດຖະກິດ.**

+ ແຂວງໄຊຍະບູລີ ມີເນື້ອທີ່ດິນກະສິກຳກ້ວາງຂວາງທີ່ໄດ້ຮັບການວິໄຈດິນແລ້ວ ເຊິ່ງເໝາະສົມແກ່ການຜະລິດເຂົ້າ, ປູກພືດ; ມີແມ່ນ້ຳຫຼາຍສາຍທີ່ໄຫຼຜ່ານຕະຫຼອດປີທີ່ມີເງື່ອນໄຂກໍ່ສ້າງຊົນລະປະທານ ເພື່ອສະໜອງນ້ຳເຂົ້າໃນການຜະລິດ ແລະ ການດຳລົງຊີວິດຂອງປະຊາຊົນ.

+ ມີດ່ານສາກົນ ແລະ ດ່ານປະເພນີຫລາຍແຫ່ງເປັນບ່ອນແລກປ່ຽນສິນຄ້າຊາຍແດນ ລາວ-ໄທ ທີ່ເປັນທ່າແຮງໃນການແລກປ່ຽນຊື້-ຂາຍສິນຄ້າ, ມີແຫຼ່ງທ່ອງທ່ຽວທຳມະຊາດ, ປະຫວັດສາດ ແລະ ວັດທະນະທຳຫຼາຍແຫ່ງທີ່ເປັນເອກະລັກຂອງແຂວງ.

+ ພື້ນຖານໂຄງລ່າງດ້ານເສດຖະກິດສ່ວນຫຼາຍ ແມ່ນໄດ້ຮັບການກໍ່ສ້າງສຳເລັດ ຄື: ລະບົບຊົນລະປະທານຂະໜາດໃຫຍ່ຫລາຍແຫ່ງໄດ້ຮັບການກໍ່ສ້າງສຳເລັດ, ເສັ້ນທາງຄົມມະນາຄົມຫຼາຍເສັ້ນ ໄດ້ຮັບການປັບປຸງເປັນຕົ້ນ: ເສັ້ນທາງເຊື່ອມຕໍ່ລະຫວ່າງປະເທດໄທ, ສປ ຈີນ, ສສ ຫວຽດນາມ ແລະ ເສັ້ນທາງເຊື່ອມຈອດກັບສະຖານີລົດໄຟ; ເຂື່ອນໄຟຟ້າຫລາຍແຫ່ງ (ໄຟຟ້າຫົງສາເຫລັກໄນ, ເຂື່ອນນ້ຳຂອງ, ເຂື່ອນນ້ຳຮຸ່ງ) ທີ່ສາມາດຜະລິດໄຟຟ້າເພື່ອສົ່ງອອກ.

- ***ທ່າແຮງດ້ານວັດທະນະທຳ-ສັງຄົມ***

+ ມີສະຖຽນລະພາບທາງດ້ານການເມືອງ ຢ່າງໝັກແໜ້ນ, ສັງຄົມມີຄວາມສະຫງົບ ແລະ ມີຄວາມເປັນລະບຽບຮຽບຮ້ອຍ.

+ ມີບຸກຄະລາກອນທີ່ມີຄວາມຮູ້ຄວາມສາມາດ ມີກຳລັງແຮງງານໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ,

+ ປະຊາຊົນບັນດາເຜົ່າມີຄວາມສາມັກຄີ, ມີມູນເຊື້ອດຸໝັ່ນຂະຫຍັນພຽນ, ມີຄວາມຮັບຮູ້ ແລະ ເຂົ້າໃຈຕໍ່ແນວ ທາງນະໂຍບາຍການພັດທະນາຫລາຍຂຶ້ນ.

+ ມີຮີດຄອງປະເພນີ, ວັດທະນະທຳທີ່ອຸດົມສົມບຸນ ແລະ ເປັນເອກະລັກຂອງປະຊາຊົນບັນດາເຜົ່າ.

- ***ທ່າແຮງທາງດ້ານຊັບພະຍາກອນທຳມະຊາດ.***

+ ມີແຫຼ່ງຊັບພະຍາກອນທຳມະຊາດທີ່ອຸດົມສົມບູນເຊັ່ນ: ທີ່ດິນ, ປ່າໄມ້, ແມ່ນ້ຳ ແລະ ແຮ່ທາດ ເປັນເງື່ອນໄຂແກ່ການພັດທະນາເສດຖະກິດ-ສັງຄົມ.

+ ພື້ນທີ່ອັນກ້ວາງຂວາງ ແລະ ອຸດົມສົມບູນ ເໝາະສົມໃນການຜະລິດກະສິກຳ.

**4. ສິ່ງທ້າທາຍ.**

- ສະພາບດ້ານເສດຖະກິດຂອງປະເທດ ຍັງສືບຕໍ່ມີຄວາມຫຍຸ້ງຍາກທາງດ້ານການ-ເງິນຕາ, ການບໍ່ມີສະຖຽນລະພາບຂອງເສດຖະກິດ ແລະ ການເມືອງຂອງບາງປະເທດໃນພາກພື້ນທີ່ຄາດຄະເນໄດ້ຍາກ.
- ການປ່ຽນແປງສະພາບດິນຟ້າອາກາດ, ໄພພິບັດ ທາງທຳມະຊາດເຊັ່ນ: ໄພແຫ້ງແລ້ງ, ນ້ຳຖ້ວມ, ລົມພາຍຸແຜ່ນດິນໄຫວ, ສັດຕູພືດລະບາດ ແລະ ພະຍາດລະບາດຕ່າງໆ.
- ການລະບາດຂອງເຊື້ອພະຍາດຈຸມລະໂລກສາຍພັນໃຫມ່ COVID19 ຍັງຈະສືບຕໍ່ສົ່ງຜົນກະທົບທີ່ຄາດຄະເນໄດ້ຍາກ.
- ການເຊື່ອມຄຸນນະພາບຂອງດິນຈາກການຜະລິດກະສິກຳ, ການເຊາະເຈື່ອນຂອງດິນ, ມີການບຸກລຸກທີ່ດິນປ່າໄມ້, ດິນກະສິກຳ ຈະເປັນສິ່ງທ້າທາຍໃນການບັນລຸເປົ້າໝາຍ ການພັດທະນາເສດຖະກິດ-ສັງຄົມ.
- ພື້ນຖານໂຄງລ່າງ ເພື່ອຮອງຮັບໃຫ້ແກ່ການຜະລິດ, ການຄ້າ, ການລົງທຶນ ແລະ ທ່ອງທ່ຽວຍັງບໍ່ທັນຮັບປະກັນໃຫ້ແກ່ການພັດທະນາເສດຖະກິດໃນຕໍ່ໜ້າ.
- ຄວາມສາມາດດ້ານບຸກຄະລາກອນ ໃນການເຂົ້າຮ່ວມການຄ້າເສລີ ອາຊຽນ, ການເຊື່ອມໂຍງ-ເຊື່ອມຈອດທາງດ້ານເສດຖະກິດ-ສັງຄົມຂອງແຂວງກັບຂົງເຂດ-ພາກພື້ນຍັງມີຈຳກັດ.

## II. ທິດທາງລວມຂອງແຜນພັດທະນາເສດຖະກິດ-ສັງຄົມວຽກຈຸດສຸມ 5 ປີ ຄັ້ງທີ VII (2021-2025)

- ວິໄສທັດຮອດປີ 2030: " ສ້າງແຂວງ ໄຊຍະບູລີ ໃຫ້ເປັນແຂວງທີ່ມີການຜະລິດກະສິກ□າສະອາດ, ພັດທະນາອຸດສາຫະກຳປຸງແຕ່ງ, ຫັດຖະກ□າທີ່ເປັນມູນເຊື້ອ ຕິດພັນກັບການ

ບໍລິການທາງຜ່ານ ແລະ ການທ່ອງທ່ຽວທີ່ເປັນມິດກັບສິ່ງແວດລ້ອມ ຕາມທິດ ສີຂຽວ ແລະ ຍືນຍົງ”.

## 1. ທິດທາງລວມ.

1). ຮັບປະກັນສະຖຽນລະພາບທາງດ້ານການເມືອງ, ຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍ ໃນສັງຄົມ.

2). ພັດທະນາເສດຖະກິດ-ສັງຄົມຕາມທ່າແຮງທີ່ມີຢ່າງເຕັມສ່ວນ ເພື່ອບັນລຸເງື່ອນໄຂການຫຼຸດພົ້ນອອກ ຈາກສະຖານະພາບຄວາມດ້ອຍພັດທະນາຢ່າງໜັກແໜ້ນ ດ້ວຍການເຕີບໂຕຢ່າງມີຄຸນນະພາບ ຕາມທິດ ສົມດູນ ແລະ ຍືນຍົງ.

3). ນໍາໃຊ້ຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມໃຫ້ມີປະສິດທິຜົນ ຕາມທິດສີຂຽວ.

4). ສ້າງໃຫ້ໄດ້ການຫັນປ່ຽນຮູບແບບການຜະລິດທີ່ສອດຄ່ອງກັບຄວາມອາດສາມາດບົ່ມຊ້ອນ ແລະ ທ່າໄດ້ ປຽບຂອງແຂວງ.

5). ການພັດທະນາເສດຖະກິດຄຽງຄູ່ກັບການພັດທະນາສັງຄົມ, ປົກປັກຮັກສາສິ່ງແວດລ້ອມ ແລະ ການ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ.

## 2. ເປົ້າໝາຍໃຫຍ່.

**<u>ເປົ້າໝາຍທີ່ 01:</u>** ເສດຖະກິດເຕີບໂຕມີຄຸນະພາບ ແລະ ຍືນຍົງ.

**<u>ເປົ້າໝາຍທີ່ 02:</u>** ພັດທະນາຊັບພະຍາກອນມະນຸດໃຫ້ມີຄຸນະພາບ.

**<u>ເປົ້າໝາຍທີ່ 03:</u>** ຍົກສູງຊີວິດການເປັນຢູ່ທາງດ້ານວັດຖຸ ແລະ ຈິດໃຈຂອງປະຊາຊົນໃຫ້ດີຂຶ້ນ.

**<u>ເປົ້າໝາຍທີ່ 04:</u>** ພັດທະນາຕາມທິດສີຂຽວ ເປັນມິດກັບສິ່ງແວດລ້ອມ.

**<u>ເປົ້າໝາຍທີ 05:</u>** ການພັດທະນາຕາມທິດການຮ່ວມມື, ເຊື່ອມໂຍງເຊື່ອມຈອດກັບພາຍໃນແລະພາກ ພື້ນ.

**<u>ເປົ້າໝາຍທີ 06:</u>** ຄຸ້ມຄອງ-ບໍລິຫານລັດ ໃຫ້ມີປະສິດທິພາບ ຕາມທິດການຄຸ້ມຄອງລັດດ້ວຍກົດໝາຍ.

## 3. ແຜນວຽກຈຸດສຸມແຜນພັດທະນາເສດຖະກິດ-ສັງຄົມ (2021-2025).

### ເປົ້າໝາຍທີ່ 01: ເສດຖະກິດເຕີບໂຕມີຄຸນະພາບ ແລະ ຍືນຍົງ.

ພັດທະນາເສດຖະກິດຂອງແຂວງ ໃຫ້ຂະຫຍາຍຕົວຕໍ່ເນື່ອງມີຄຸນະພາບ ແລະ ຍືນຍົງ. ໂຄງປະກອບເສດຖະ ກິດຫັນປ່ຽນໄປຕາມທິດຫັນເປັນອຸດສາຫະກໍາ ແລະ ທັນສະໄໝ, ປັບປຸງໂຄງປະກອບການຜະລິດ ໃຫ້ມີຄວາມ ຫຼາກຫຼາຍຕາມຂະແໜງການຜະລິດ-ບໍລິການ, ມີປະສິດທິພາບເພີ່ມມູນຄ່າສູງຂຶ້ນ ຕາມທ່າແຮງບົ່ມຊ້ອນຂອງ ແຂວງ. ຮັບ ປະກັນສະຖຽນລະພາບເສດຖະກິດມະຫາພາກ ໃຫ້ມີຄວາມເຂັ້ມແຂງທາງດ້ານງົບປະມານ ເພື່ອສະໜັ ບສະໜູນການພັດທະນາເສດຖະກິດ-ສັງຄົມໃຫ້ເຂັ້ມແຂງ, ຊຸກຍູ້ການລົງທຶນໃຫ້ມີຈຸດສຸມ, ຄຸນະພາບ ແລະ ປະ ສິດທິຜົນສູງ.

#### 1. ແຜນວຽກຈຸດສຸມທີ 01: ເສດຖະກິດມະຫາພາກມີຄວາມເຂັ້ມແຂງ ແລະ ໝັ້ນທ່ຽງ.

#### 1.1 ຄາດໝາຍ ແລະ ຕົວຊີ້ວັດ.

- ສູ້ຊົນເຮັດໃຫ້ເສດຖະກິດຂະຫຍາຍຕົວສະເລ່ຍບໍ່ໃຫ້ຫຼຸດ 7%ຕໍ່ປີ, ລວມຍອດຜະລິດຕະພັນພາຍໃນ ຮອດປີ 2025 ໃຫ້ບັນລຸ 15.185 ຕື້ກີບ, ສະເລ່ຍໃສ່ຫົວຄົນໜຶ່ງໃຫ້ໄດ້ 3.800 ໂດລາສະຫະລັດ, ຄາດຄະເນປະຊາກອນ ຮອດປີ 2025 ຈະມີພົນລະເມືອງ 431.734 ຄົນ.
- ສູ້ຊົນເກັບລາຍຮັບເຂົ້າງົບປະມານໃຫ້ໄດ້ 5.099 ຕື້ກີບ, ສະເລ່ຍ 1.020 ຕື້ກີບຕໍ່ປີ ຢູ່ໃນລະຫວ່າງ 6-9% ຕໍ່ປີຂອງ GDP; ໃນນີ້: ລາຍຮັບພູດສູນກາງປະຕິບັດຢູ່ແຂວງ ໃຫ້ໄດ້ 4.112 ຕື້ກີບ, ສະເລ່ຍ 822 ຕື້ກີບຕໍ່ປີ, ຢູ່ໃນລະຫວ່າງ 5-7% ຂອງ GDP; ລາຍຮັບພາຍໃນແຂວງ ໃຫ້ໄດ້ 987 ຕື້ກີບ, ສະເລ່ຍ 197 ຕື້ກີບຕໍ່ປີ, ຢູ່ໃນລະຫວ່າງ 1-2% ຂອງ GDP; ຄຸ້ມຄອງລາຍຈ່າຍໃຫ້ຢູ່ລະດັບ 3.021 ຕື້ກີບ ສະເລ່ຍ 604 ຕື້ກີບຕໍ່ປີ ຢູ່ໃນລະຫວ່າງ 3-5% ຂອງ GDP.

- ອັດຕາເງິນເຟີ້ໃຫ້ຢູ່ໃນລະດັບຕໍ່າກວ່າການຂະຫຍາຍຕົວຂອງເສດຖະກິດ ແລະ ຮັບປະກັນທາງດ້ານອັດຕາແລກປ່ຽນເໜັງຕີງ ±5% ຕໍ່ປີ.
- ສູ້ຊົນລະດົມແຫຼ່ງທຶນເພື່ອການພັດທະນາ ໃນ 5 ປີ ໃຫ້ໄດ້ 28% ຂອງ GDP.
- ສູ້ຊົນເຮັດໃຫ້ມູນຄ່າການສົ່ງອອກສິນຄ້າໃຫ້ເພີ່ມຂຶ້ນສະເລ່ຍ 7% ຕໍ່ປີ, ຄຸ້ມຄອງການນໍາເຂົ້າສິນຄ້າໃຫ້ຢູ່ໃນລະດັບສະເລ່ຍ 6-8% ຕໍ່ປີ.

**1.2 ວຽກຈຸດສຸມ.**

ເພື່ອຮັບປະກັນການຈັດຕັ້ງປະຕິບັດ ບັນດາຄາດໝາຍ ແລະ ຕົວຊີ້ບອກ ທາງດ້ານເສດຖະກິດມະຫາພາກ ໃຫ້ມີການເຕີບໂຕ, ໝັ້ນທ່ຽງ. ບັນດາຂະແໜງການ ແລະ ເມືອງໃນທົ່ວແຂວງ ຕ້ອງໄດ້ຫັນວຽກງານການເງິນ-ເງິນຕາ ໄປສູ່ທັນສະໄໝ ຮັບປະກັນຄວາມໂປ່ງໃສ ແລະ ຍຸດຕິທໍາ, ປະຕິບັດວິໄນແຜນການ-ການເງິນຢ່າງເຂັ້ມງວດ, ປັບປຸງ ແລະ ຂະຫຍາຍຖານລາຍຮັບພາຍໃນໃຫ້ເພີ່ມຂຶ້ນເທື່ອລະກ້າວ ບົນພື້ນຖານການຊຸກຍູ້ ການເສຍພາສີ-ອາກອນຂອງບັນດາຫົວໜ່ວຍທຸລະກິດໃຫ້ຄົບຖ້ວນ, ຈັດຕັ້ງປະຕິບັດນະໂຍບາຍສົ່ງເສີມການລົງທຶນ ແລະ ການຜະລິດທຸລະກິດ.

ປະຕິບັດລາຍຈ່າຍງົບປະມານຢ່າງປະຢັດ, ມີຈຸດສຸມ ແລະ ສອດຄ່ອງກັບເປົ້າໝາຍພັດທະນາຕາມຄວາມເປັນຈິງຂອງແຂວງ, ສົ່ງເສີມການຜະລິດ, ການບໍລິການ ຫັນເຂົ້າສູ່ມາດຕະຖານຂອງສາກົນ; ປັບປຸງຄຸ້ມຄອງການເກັບພາສີ-ອາກອນ ດ້ວຍການນໍາໃຊ້ລະບົບຖານຂໍ້ມູນ ເກັບອາກອນລາຍຮັບ ໂດຍຜ່ານລະບົບເຄື່ອງມືສື່ສານທີ່ທັນສະໄໝ.

ເອົາໃຈໃສ່ຕິດຕາມກວດກາການນໍາໃຊ້ງົບປະມານຂອງລັດແຕ່ຫົວທີ ເພື່ອເພີ່ມທະວີການກວດກາຄວາມຖືກຕ້ອງຄົບຖ້ວນ ໃນການປະຕິບັດກົດໝາຍ ແລະ ລະບຽບການດ້ານການເງິນ-ການບັນຊີ, ພ້ອມທັງມີລະບົບຕິດຕາມການປະຕິບັດພັນທະຂອງຫົວໜ່ວຍທຸລະກິດ, ການຄຸ້ມຄອງ ແລະ ການນໍາໃຊ້ທຶນຂອງລັດວິສາຫະກິດພາຍໃນແຂວງ ແລະ ຮັບປະກັນບໍ່ໃຫ້ມີການຮົ່ວໄຫຼຂອງລາຍຮັບງົບປະມານແຫ່ງລັດ.

ສຸມໃສ່ປະຕິບັດນະໂຍບາຍ, ກົນໄກ, ລະບົບ, ລະບຽບການສ້າງສະພາບແວດລ້ອມ ແລະ ເງື່ອນໄຂທີ່ດີ ໃຫ້ຂະແໜງເສດຖະກິດ ທີ່ມີທ່າແຮງທີ່ບົ່ມຊ້ອນພາຍໃນແຂວງ ສາມາດສ້າງລາຍຮັບງົບປະມານ ແລະ ຍົກສູງປະສິດທິພາບໃນການຄຸ້ມຄອງ, ຄຸ້ມຄອງການຈັດເກັບລາຍຮັບພາສີ-ອາກອນໃຫ້ມີປະສິດທິຜົນ ແລະ ຄົບຖ້ວນຕາມທ່າແຮງບົ່ມຊ້ອນ ແລະ ລະບຽບກົດໝາຍ, ສືບຕໍ່ເກັບກໍາຂໍ້ມູນວິສາຫະກິດ ແລະ ຫົວໜ່ວຍຖານລາຍຮັບງົບປະມານຄືນໃໝ່ໃຫ້ຄົບຖ້ວນ ແລະ ຊັດເຈນ ເປັນພື້ນຖານໃຫ້ແກ່ການເກັບລາຍຮັບແຕ່ລະປີ ເພື່ອເປັນຖານລາຍຮັບທີ່ໝັ້ນຄົງ ຊຸກຍູ້ສົ່ງເສີມການຜະລິດ ແລະ ການບໍລິການພາຍໃນໂດຍເນັ້ນໜັກ ດ້ານຜະລິດຕະພາບ ແລະ ຄຸນນະພາບ ເພື່ອສ້າງໃຫ້ຖານລາຍຮັບງົບປະມານເພີ່ມຂຶ້ນຢ່າງໝັ້ນຄົງ ເປັນບ່ອນອີງໃຫ້ແກ່ການຂຶ້ນແຜນການໃຊ້ຈ່າຍງົບປະມານຂອງຂະແໜງການຢ່າງມີຈຸດສຸມ.

ການຄຸ້ມຄອງເສດຖະກິດມະຫາພາກ: ປັບປຸງກົນໄກການປະສານງານລະຫວ່າງຂະແໜງການເສດຖະກິດມະຫາພາກ ໃຫ້ມີຄວາມເຂັ້ມແຂງເປັນເອກະພາບ ແລະ ກົມກຽວກັນຫຼາຍຂຶ້ນ, ນໍາໃຊ້ເຄື່ອງມືຂອບການຕິດຕາມປະເມີນຜົນ ແຜນພັດທະນາເສດຖະກິດ-ສັງຄົມ ແລະ ວິໄຈເສດຖະກິດມະຫາພາກຂອງແຂວງ ໃຫ້ເປັນລະບົບ.

ປັບປຸງ ແລະ ພັດທະນາລະບົບຂໍ້ມູນສະຖິຕິທາງການ, ລະບົບລາຍງານຂອງຂະແໜງການຂັ້ນແຂວງ ແລະ ເມືອງ ໃຫ້ມີຄຸນນະພາບ ສາມາດເຜີຍແຜ່ຂໍ້ມູນໄດ້ທັນເວລາ, ຊັດເຈນ ແລະ ເຊື່ອຖືໄດ້, ເພື່ອເປັນການຕິດຕາມປະເມີນບັນດາຕົວຊີ້ບອກດ້ານເສດຖະກິດ ແລະ ສັງຄົມ.

**2. ແຜນວຽກຈຸດສຸມທີ 02: ຍົກສູງປະສິດທິພາບການລົງທຶນໃຫ້ມີຄຸນນະພາບ ແລະ ມີປະສິດທິຜົນສູງ.**

**2.1 ຄາດໝາຍ ແລະ ຕົວຊີ້ວັດ.**

- ສູ້ຊົນລະດົມແຫຼ່ງທຶນເພື່ອພັດທະນາບໍ່ໃຫ້ຫຼຸດ 28% ຂອງລວມຍອດຜະລິດຕະພັນພາຍໃນແຕ່ລະປີໃນນີ້:
+ ການລົງທຶນຈາກງົບປະມານພາຍໃນ ກວມເອົາ 7% ຂອງການລົງທຶນທັງໝົດ.
+ ການຊ່ວຍເຫຼືອລ້າທາງການເພື່ອການພັດທະນາ (ODA) ກວມເອົາ 15% ຂອງການລົງທຶນທັງໝົດ.
+ ການລົງທຶນຂອງເອກະຊົນພາຍໃນ ແລະ ຕ່າງປະເທດ ກວມເອົາ 55% ຂອງການລົງທຶນທັງໝົດ.

+ ສິນເຊື່ອຂອງທະນາຄານ ກວມເອົາ 23% ຂອງການລົງທຶນທັງໝົດ.

ນອກຈາກ 4 ແຫຼ່ງທຶນແລ້ວ ຂະແໜງການຕ່າງໆ ຕ້ອງໄດ້ສົ່ງເສີມການລົງທຶນຈາກແຫຼ່ງທຶນຕ່າງໆເຊັ່ນ: ທຶນພັດທະນາ ແລະ ການລົງທຶນຂອງປະຊາຊົນ.

**2.2 ໜ້າວຽກຈຸດສຸມ.**

- ສຸມໃສ່ຈັດຕັ້ງປະຕິບັດ 8 ມາດຕະການກະຕຸ້ນເສດຖະກິດ ເພື່ອແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ ແລະ ຫຼຸດຜ່ອນໜີ້ສິນສາທາລະນະ ດ້ວຍການຈຳກັດໂຄງການລົງທຶນໃໝ່ ທີ່ບໍ່ມີຄວາມຈຳເປັນ ອັນຈະກໍ່ໃຫ້ເກີດມີໜີ້ສິນເພີ່ມຂຶ້ນ. ເພີ່ມທະວີການຕິດຕາມກວດກາ ການປະຕິບັດໂຄງການ ໃຫ້ດຳເນີນໄປຕາມແຜນ ພ້ອມທັງຮັບປະກັນການລົງທຶນທີ່ມີຄຸນນະພາບ ແລະ ຫຼີກລ້ຽງໂຄງການທີ່ມີມູນຄ່າສູງເກີນຄວາມເປັນຈິງ.

- ສຸມໃສ່ປັບປຸງພື້ນຖານໂຄງລ່າງຮັບໃຊ້ໃຫ້ແກ່ການຜະລິດກະສິກຳເປັນສິນຄ້າ ເປັນຕົ້ນ: ລະບົບຊົນລະປະທານ, ສູນບໍລິການດ້ານເຕັກນິກ, ການປັບປຸງແນວພັນ ແລະ ອື່ນໆ. ນອກຈາກນັ້ນ, ຕ້ອງໄດ້ເອົາໃຈໃສ່ໂຄສະນາເຜີຍແຜ່ ຂໍ້ມູນຂ່າວສານ ດ້ານການຕະຫຼາດ, ການຜະລິດສິນຄ້າໃຫ້ກຸ່ມຜະລິດ ແລະ ປະຊາຊົນຮັບຮູ້ຢ່າງທົ່ວເຖິງ.

- ລະດົມທຶນ ພັດທະນາຂະແໜງການຜະລິດ ແລະ ບໍລິການ ທີ່ສາມາດຂັບເຄື່ອນການຂະຫຍາຍຕົວເສດຖະກິດ ຕາມທິດສີຂຽວ ແລະ ຍືນຍົງ ເພື່ອຜະລິດສິນຄ້າທົດແທນການນຳເຂົ້າ ແລະ ສົ່ງອອກໃຫ້ຫຼາຍຂຶ້ນ.

- ສຸມໃສ່ປັບປຸງກົນໄກການບໍລິການປະຕູດຽວໃຫ້ມີຄວາມສະດວກໂປ່ງໃສ ແລະ ວ່ອງໄວ, ໂຄສະນາເຜີຍແຜ່ນະໂຍບາຍການລົງທຶນພາຍໃນ-ຕ່າງປະເທດ ຢ່າງມີຈຸດສຸມ. ເປີດເວທີປຶກສາຫາລື ລະຫວ່າງພາກລັດ ແລະ ເອກະຊົນ ແນໃສ່ກຳນົດແນວທາງການພັດທະນາເສດຖະກິດ-ສັງຄົມຮ່ວມກັນ.

- ເພີ່ມທະວີການດຶງດູດການລົງທຶນເອກະຊົນພາຍໃນ-ຕ່າງປະເທດ ເຂົ້າມາລົງທຶນພັດທະນາວິສະຫະກິດຂະໜາດນ້ອຍ, ຂະໜາດກາງ, ເພື່ອຜະລິດສິນຄ້າຕິດພັນກັບການປຸງແຕ່ງໃຫ້ມີຈຳນວນເພີ່ມຂຶ້ນ ທັງຮັບປະກັນຄຸນນະພາບ ແລະ ເປັນຕ່ອງໂສ້ການຜະລິດກັບວິສະຫະກິດພາຍໃນ.

- ປັບປຸງໂຄງສ້າງເສດຖະກິດໄປຕາມທິດການຫັນເສດຖະກິດເປັນທັນສະໄໝ ດ້ວຍການນຳໃຊ້ເຕັກນິກວິທະຍາສາດ, ເຕັກໂນໂລຊີໃໝ່ເຂົ້າໃນການຜະລິດ, ການບໍລິການເພື່ອຍົກສູງສະມັດຕະພາບຂອງການຜະລິດສ້າງມູນຄ່າເພີ່ມ ແລະ ມີສິນຄ້າຫຼາກຫຼາຍ.

- ການປ່ອຍສິນເຊື່ອຂອງທະນາຄານແມ່ນເລັ່ງໃສ່ການຜະລິດເປັນສິນຄ້າທີ່ມີປະສິດຜົນ, ໂຄງການແກ້ໄຂຄວາມທຸກຍາກຂອງປະຊາຊົນ ໂດຍການຊຸກຍູ້ການຜະລິດ-ບໍລິການຂອງປະຊາຊົນ, ການຜະລິດແບບເປັນກຸ່ມ, ການຜະລິດຂະໜາດນ້ອຍ-ຂະໜາດກາງ ແນ່ໃສ່ສ້າງວຽກເຮັດງານທຳ ແລະ ເພີ່ມລາຍໄດ້ໃຫ້ປະຊາຊົນ.

- ເພື່ອເຮັດໃຫ້ການພັດທະນາສັງຄົມທີ່ມີຄຸນນະພາບ ຕ້ອງໄດ້ສຸມທຶນໃສ່ພັດທະນາພື້ນຖານໂຄງລ່າງ ດ້ານການສຶກສາ, ສາທາລະນະສຸກ ເປັນຕົ້ນ: ການສະໜອງອຸປະກອນການສຶກສາ, ອຸປະກອນການແພດທີ່ທັນສະໄໝ, ພັດທະນາສີມືແຮງງານ ແນໃສ່ພັດທະນາຊັບພະຍາກອນມະນຸດ ບັນລຸເປົ້າໝາຍພັດທະນາແບບຍືນຍົງ (SDGs) ຢ່າງມີຄຸນະພາບ ແລະ ຫຼຸດພົ້ນອອກຈາກສະຖານະພາບຄວາມດ້ອຍພັດທະນາ.

## 3. ແຜນວຽກຈຸດສຸມທີ 03: ການເຕີບໂຕເສດຖະກິດທີ່ມີຄຸນນະພາບ ແລະ ຍືນຍົງ.

### 3.1 ຄາດໝາຍ ແລະ ຕົວຊີ້ວັດ.

- ຮອດປີ 2025 ສູ້ຊົນໂຄງປະກອບເສດຖະກິດຫັນປ່ຽນໄປຕາມທິດອຸດສາຫະກຳ ແລະ ທັນສະໄໝ ໃນນີ້:
  + ຂະແໜງກະສິກຳ ໃຫ້ເພີ່ມຂຶ້ນ 2,3 % ກວມເອົາ 26%.
  + ຂະແໜງອຸດສາຫະກຳ ໃຫ້ເພີ່ມຂຶ້ນ 10 % ກວມເອົາ 37%.
  + ຂະແໜງບໍລິການ ໃຫ້ເພີ່ມຂຶ້ນ 6,3% ກວມເອົາ 37% ຂອງ GDP.

**- ຂະແໜງກະສິກຳ:**

  + ຜະລິດເຂົ້າໃຫ້ໄດ້ 188.000 ໂຕນ/ປີ, ໃນນີ້: ເຂົ້ານາປີ 155.300 ໂຕນ, ນາແຊງ 10.500 ໂຕນ, ເຂົ້າໄຮ່ 22.200 ໂຕນ, ຜະລິດເຂົ້າເປັນສິນຄ້າໃຫ້ໄດ້ປະມານ 70.000 ໂຕນ ໃນນັ້ນ, ເຂົ້າຈ້າວ ໃຫ້ກວມເອົາ 30%.

+ ຜົນຜະລິດພືດເປັນສິນຄ້າ ບໍ່ໃຫ້ຫຼຸດ 1.400.000 ໂຕນ/ປີ, ຜະລິດພືດເປັນສິນຄ້າຕາມມາດຖານກະສິກຳທີ່ດີ (GAP) 20% ເພື່ອຊົມໃຊ້ຢູ່ພາຍໃນ ແລະ ເປັນສິນຄ້າສົ່ງອອກ.
+ ຜົນຜະລິດພືດສະບຽງອາຫານໃຫ້ໄດ້ 180.000 ໂຕນ/ປີຂຶ້ນໄປ, ໃນນີ້ຜະລິດເຂົ້າໃຫ້ໄດ້ຕາມມາດຖານກະສິກຳທີ່ດີ (GAP) 10%; ຜະລິດພືດໃຫ້ໄດ້ຕາມມາດຖານກະສິກຳທີ່ດີ (GAP) ແລະ ກະສິກຳອິນຊີ (OA) ໃຫ້ໄດ້ 20%.
+ ສ້າງບ້ານຕົວແບບດ້ານກະສິກຳ ໃຫ້ໄດ້ 70% ຂອງບ້ານທັງໝົດ.
+ ຜະລິດຊີ້ນ, ປາ ແລະ ໄຂ່ໃຫ້ໄດ້ 24.000 ໂຕນ/ປີ, ສະເລ່ຍບໍ່ໃຫ້ຫຼຸດ 55 ກິໂລ/ຄົນ/ປີ.
+ ຝູງສັດໃຫຍ່ຂະຫຍາຍຕົວສະເລ່ຍ 6% ຕໍ່ປີ; ໃນນີ້, ງົວຂະຫາຍຕົວ 8%, ຄວາຍຂະຫຍາຍຕົວ 4%, ໝູຂະຫຍາຍຕົວ 6%, ແບ້ຂະຫຍາຍຕົວ 11,5% ແລະ ສັດປີກຂະຫຍາຍຕົວ 5,5%.

**- ຂະແໜງອຸດສາຫະກຳ:**

+ ສູ້ຊົນເຮັດໃຫ້ການຂະຫຍາຍຕົວຜະລິດດ້ານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ເພີ້ມຂຶ້ນສະເລ່ຍ 10-13% ຕໍ່ປີ ແລະ ສ້າງລວມຍອດມູນຄ່າການຜະລິດດ້ານອຸດສາຫະກຳ ແລະ ຫັດຖະກຳ ໃຫ້ບັນລຸ 1.210 ຕື້ກີບ ໄລຍະ 5 ປີ ແລະ ມູນຄ່າຈຳໜ່າຍຜະລິດດ້ານອຸດສາຫະກຳ ແລະ ຫັດຖະກຳ ໃຫ້ບັນລຸ 1392 ຕື້ກີບ.
+ ສູ້ຊົນໃຫ້ທຸກບ້ານທົ່ວແຂວງໄດ້ຊົມໃຊ້ໄຟຟ້າໃນລະບົບໄຟຟ້າລາວ 100% ແລະ ຄອບຄົວຊົມໃຊ້ໄຟຟ້າໃນລະບົບໄຟຟ້າລາວ ຫຼາຍກວ່າ 99% ໃນປີ 2025.
+ ສ້າງ ແລະ ປັບປຸງບັນດານິຕິກຳໃຕ້ກົດໝາຍຂັ້ນແຂວງ, ເມືອງ ທີ່ນຳໃຊ້ເຂົ້າໃນການພັດທະນາ, ຄຸ້ມຄອງວຽກງານພະລັງງານ ແລະ ບໍ່ແຮ່ ໃຫ້ໄດ້ 2 ສະບັບ.
+ ສູ້ຊົນສົ່ງເສີມໂຄງການແຫຼ່ງຜະລິດໄຟຟ້າໃຫ້ໄດ້ 55 MW.
+ ຊຸກຍູ້, ສົ່ງເສີມ ແລະ ຄຸ້ມຄອງ ໂຮງງານປຸງແຕ່ງແຮ່ຄຳ 1 ໂຮງງານ ແລະ ໂຮງງານປຸງແຕ່ງແຮ່ທາດຟູອໍຣາຍ 2 ໂຮງງານ.
+ ສູ້ຊົນຜະລິດຫີນປູນໃຫ້ໄດ້ 2,25 ລ້ານໂຕ່ນໃນໄລຍະ 5 ປີ.

**- ຂະແໜງບໍລິການ:**

+ ສູ້ຊົນເຮັດໃຫ້ມູນຄ່າການຈໍລະຈອນສິນຄ້າພາຍໃນ ໃຫ້ຂະຫຍາຍຕົວສະເລ່ຍ 2% ຕໍ່ປີ.
+ ຄຸ້ມຄອງລາຄາສິນຄ້າໃນທ້ອງຕະຫລາດ ບໍ່ໃຫ້ມີການເໜັງຕີງເກີນຄ່າມາດຕະຖານທີ່ກະຊວງອຸດສາຫະ ກຳ ແລະ ການຄ້າກຳນົດອອກ 12% ຂອງລາຄາສິນຄ້າ.
+ ເອົາໃຈໃສ່ດຶງດູດນັກທ່ອງທ່ຽວໃຫ້ໄດ້ 175.000 ຄົນ/ຕໍ່ປີ, ສ້າງລາຍຮັບໃຫ້ໄດ້ຫຼາຍກວ່າ 7 ລ້ານໂດລາສະຫະລັດ.
+ ສູ້ຊົນໃຫ້ບໍລິມາດການຂົນສົ່ງສິນຄ້າ ເພີ່ມຂຶ້ນ 10-12% ຕໍ່ປີ.
+ ສູ້ຊົນໃຫ້ບໍລິມາດຂົນສົ່ງໂດຍສານເພີ່ມຂຶ້ນ 16-18% ຕໍ່ປີ.

**3.2 ວຽກງານຈຸດສຸມ.**

**- ຂະແໜງກະສິກຳ**: ເພື່ອຮັບປະກັນຄວາມໝັ້ນຄົງທາງດ້ານສະບຽງອາຫານ, ໂພສະນາການ ແລະ ການຜະລິດເປັນສິນຄ້າກະສິກຳທີ່ມີທ່າແຮງ, ພັດທະນາກະສິກຳສະອາດ, ປອດໄພ ແລະ ຍືນຍົງ ບົນພື້ນຖານການຫັນເປັນອຸດສາຫະກຳ ແລະ ທັນສະໄໝຕິດພັນກັບການພັດທະນາຊົນນະບົດ ເພື່ອປະກອບສ່ວນສ້າງພື້ນຖານເສດຖະກິດຂອງແຂວງ.

+ ສຸມໃສ່ການຜະລິດດ້ວຍການນຳໃຊ້ເຕັກນິກ-ວິທະຍາສາດ-ນະວັດຕະກຳໃໝ່ ແລະ ແນວພັນທີ່ແທດເໝາະກັບແຕ່ລະທ້ອງຖິ່ນ, ກົນຈັກ, ປັດໃຈການຜະລິດ, ການຜະລິດກະສິກຳແບບມີຈຸດສຸມ, ສ້າງເປັນກຸ່ມການຜະລິດເປັນສິນຄ້າຕາມມາດຕະຖານກະສິກຳສະອາດ.

+ ປັບປຸງ ແລະ ກໍ່ສ້າງພື້ນຖານໂຄງລ່າງເຕັກນິກກະສິກ□າ, ສູນບໍລິການເຕັກນິກກະສິກ□າ-ປ່າໄມ້ ແລະ ຊົນລະປະທານ, ດໍາເນີນການຜະລິດລະບົບຊົນລະກະເສດຕາມຈຸດສຸມໃນຂອບເຂດທົ່ວແຂວງໃຫ້ເປັນລະບົບ ໂດຍສຸມໃສ່ເຂດ 3 ທົ່ງພຽງໃຫຍ່: ໄຊຍະບູລີ, ຊຽງຮ່ອນ ແລະ ເມືອງພຽງ.

+ ຍົກສູງສະມັດຕະພາບການຜະລິດເຂົ້າ ແລະ ການຜະລິດພືດ ໂດຍການຈັດການເຕັກນິກການຜະລິດທີ່ດີ, ການຈັດການດິນ, ນໍ້າ, ຝຸ່ນ ແລະ ການຈັດການສັດຕູພືດ.

+ ກໍານົດຈັດສັນເຂດຜະລິດ ແລະ ການວາງແຜນນໍາໃຊ້ທີ່ດິນກະສິກໍາ, ການປັບປຸງຄຸນນະພາບດິນກະສິກໍາ ເພື່ອໃຫ້ມີເຂດການຜະລິດທີ່ຊັດເຈນ, ແກ້ໄຂບັນຫາການຈັບຈອງທີ່ດິນທີ່ທ່ວງດຶງການສົ່ງເສີມການຜະລິດ.

+ ປັບປຸງເຕັກນິກການລ້ຽງສັດແບບໃໝ່, ການໃຫ້ອາຫານສັດ ທີ່ມີຄຸນະພາບ ແລະ ພຽງພໍ, ສະຖານທີ່ລ້ຽງທີຮັບປະກັນດ້ານມາດຖານ, ການບໍລິການຮັກສາສຸຂະພາບ ແລະ ສໍາຄັນແມ່ນແນວພັນທີ່ມີຄວາມຕ້ອງການຂອງຕະຫຼາດ ສາມາດສົ່ງອອກເປັນສິນຄ້າທັງພາຍໃນ ແລະ ຕ່າງປະເທດ.

+ ສ້າງແຜນການປ້ອງກັນຄວາມສ່ຽງທີ່ເກີດຈາກໄພພິບັດທໍາມະຊາດ, ແຜນການປ້ອງກັນ-ກໍາຈັດ, ຄວບຄຸມ ການລະບາດຂອງສັດຕູພືດ ແລະ ພະຍາດສັດ ໃຫ້ເປັນລະບົບໃນແຕ່ລະໄລຍະ.

- **ຂະແໜງອຸດສາຫະກໍາ:** ສ້າງສະພາບແວດລ້ອມ ແລະ ບັນຍາກາດການຄ້າການລົງທຶນ ເພື່ອຊຸກຍູ້ສົ່ງເສີມບັນດາທຸລະກິດຂະໜາດນ້ອຍ ແລະ ກາງ (SME) ພາຍໃນແຂວງ ໃຫ້ມີການຂະຫຍາຍຕົວເພີ້ມຂຶ້ນທາງດ້ານຈໍານວນ ແລະ ຄຸນນະພາບ ສາມາດປັບຕົວເຂົ້າໃນສະພາບການຕ່າງໆໃນແຕ່ລະໄລຍະ ແລະ ເຂົ້າເຖິງຕະຫລາດ. ເພື່ອເຮັດໃຫ້ຂະແໜງອຸດສາຫະກໍາຂະຫຍາຍຕົວເພີ່ມຂຶ້ນ ຕ້ອງສຸມໃສ່ ອຸດສາຫະກໍາປຸງແຕ່ງທີ່ມີໜໍ່ແໜງໃຫ້ຂະຫຍາຍ ຕົວຢ່າງຕໍ່ເນື່ອງ ເປັນຕົ້ນ: ໂຮງງານປຸງແຕ່ງນໍ້າມັນຈາກພືດຕະກຸນຖົ່ວ, ນໍ້າມັນປາມ ຢູ່ເມືອງພຽງ, ໂຮງງານຜະລິດອາຫານ ແລະ ເຄື່ອດື່ມສໍາເລັດຮູບຈາກກາເຟ, ຊາຂຽວ ຢູ່ເມືອງໄຊຍະບູລີ, ໂຮງງານຜະລິດເຄື່ອງຈັກ ແລະ ອຸ ປະກອນ ຮັບໃຊ້ການກະເສດ ຢູ່ເມືອງໄຊຍະບູລີ, ໂຮງງານຜະລິດເຈ້ຍ ແລະ ຜະລິດຕະພັນໄມ້ປ່ອງ ຢູ່ເມືອງແກ່ນທ້າວໂຮງງານຜະລິດອາຫານກະປ໋ອງຈາກໝາກໄມ້ກິນໝາກ ຢູ່ເມືອງໄຊຍະບູລີ ແລະ ໂຮງງານຂ້າສັດທັນສະໄໝ ຢູ່ເມືອງໄຊຍະບູລີ ເພື່ອຕອບສະໜອງຄວາມຕ້ອງການພາຍໃນ ແລະ ສົ່ງອອກ, ຫຼຸດຜ່ອນການນໍາເຂົ້າ, ສົ່ງເສີມສິນຄ້າ ໜຶ່ງເມືອງ ໜຶ່ງຜະລິດຕະພັນ ທີ່ເປັນມູນເຊື້ອ ແລະ ເອກະລັກດ້ານພູມປັນຍາຂອງທ້ອງຖິ່ນ, ຊຸກຍູ້, ສົ່ງເສີມການພັດ ທະນາໂຄງການກໍ່ສ້າງແຫຼ່ງຜະລິດໄຟຟ້າຂະໜາດນ້ອຍ ທີ່ໄດ້ສຶກສາສໍາຫຼວດຄວາມເປັນໄປໄດ້ ໃຫ້ໄດ້ຈັດຕັ້ງປະຕິບັດ ແລະ ຖືກຕ້ອງສອດຄ່ອງຕາມຂັ້ນຕອນຂອງມາດຕະຖານເຕັກນິກໄຟຟ້າຂອງ ສປປລາວ. ຄຸ້ມຄອງວຽກງານຂຸດຄົ້ນສໍາຫຼວດ, ຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດ ໃຫ້ຖືກຕ້ອງຕາມລະບຽບການ.

- ສືບຕໍ່ດຶງດູດເອົານັກທຸລະກິດພາຍໃນ ແລະ ຕ່າງປະເທດ ເຂົ້າມາລົງທຶນໃນດ້ານອຸດສາຫະກໍາ ແລະ ການຄ້າ ໃຫ້ຫລາຍຂຶ້ນ ເພື່ອຂະຫຍາຍການຜະລິດພາຍໃນ ແລະ ຫລຸດຜ່ອນການສົ່ງອອກສິນຄ້າໄປຕ່າງປະເທດເປັນວັດຖຸດິບ. ຄຽງຄູ່ກັບການປັບປຸງບັນດາຫົວໜ່ວຍທຸລະກິດ,ໂຮງຈັກໂຮງງານໃຫ້ເຂົ້າສູ່ມາດຕະຖານທີ່ກະຊວງອຸດສາຫະກໍາ ແລະ ການຄ້າໄດ້ກໍານົດໄວ້.

- ສຸມໃສ່ສ້າງສະພາບແວດລ້ອມ ແລະ ບັນຍາກາດດ້ານການຄ້າການລົງທຶນພາຍໃນ ເພື່ອເລັ່ງໃສ່ຊຸກຍູ້ບັນດາຫົວໜ່ວຍທຸລະກິດຂະໜາດນ້ອຍ ແລະ ກາງພາຍໃນແຂວງ ໃຫ້ຂະຫຍາຍຕົວເພີ້ມຂຶ້ນທາງດ້ານຈໍານວນ ແລະ ຄຸນະພາບ, ການຜະລິດຕະພັນທີ່ເປັນເອກະລັກຂອງປະຊາຊົນບັນດາເຜົ່າພາຍໃນແຂວງ ແລະ ອໍານວຍຄວາມສະດວກ ໃນການສົ່ງອອກສິນຄ້າໄປຕ່າງປະເທດ ໂດຍສະເພາະສິນຄ້າເຄິ່ງສໍາເລັດຮູບ ແລະ ສໍາເລັດຮູບ.

- ເພີ້ມທະວີການຄົ້ນຄ້ວາບັນດານະໂຍບາຍຕ່າງໆໃນຊຸກຍູ້ສົ່ງເສີມ, ສ້າງສິ່ງອໍານວຍຄວາມສະດວກ, ຫລຸດຜ່ອນຂອດຂັ້ນ ແລະ ສິ່ງກີດຂວາງທາງດ້ານການຄ້າ ເພື່ອເຮັດໃຫ້ບັນດາຜູ້ປະກອບການທຸລະກິດ ໃຫ້ສາມາດເຄື່ອນໄຫວໄດ້ຢ່າງສະດວກ ແລະ ເຂົ້າເຖິງການບໍລິການຕ່າງໆ.

- ສຸມໃສ່ການຂະຫຍາຍການພົວພັນຮ່ວມມືດ້ານການຄ້າ ແລະ ການບໍລິການກັບບັນດາປະເທດເພື່ອນມິດ ແລະ ປະເທດທີ່ມີຊາຍແດນຕິດກັບແຂວງໄຊຍະບູລີ ເພື່ອຂະຫຍາຍຕະຫລາດ ແລະ ເພີ້ມມູນຄ່າທາງດ້ານການຄ້າ ແລະ ການລົງທຶນໃຫ້ເພີ້ມຂຶ້ນ.

- ຄຸ້ມຄອງບໍລິຫານນ້ຳແບບປະສົມປະສານ ຂອງອ່າງເກັບນ້ຳເຂື່ອນໄຟຟ້ານ້ຳເທີນ ຮັບໃຊ້ໃຫ້ແກ່ການຜະລິດກະແສໄຟຟ້າໃຫ້ໄດ້ຕາມແຜນການ.

- ຊຸກຍູ້, ສົ່ງເສີມການກໍ່ສ້າງແຫຼ່ງຜະລິດໄຟຟ້າ, ລະບົບສາຍສົ່ງ-ສະຖານີ ໃຫ້ສຳເລັດຕາມແຜນການ ເພື່ອຮັບປະກັນຄວາມໝັ້ນຄົງ ແລະ ປອດໄພໃນການສະໜອງໄຟຟ້າ.

- ສືບຕໍ່ຕິດຕາມ ແລະ ຊຸກຍູ້ໂຄງການກໍ່ສ້າງລະບົບຕາຄ່າຍໄຟຟ້າ 22 kV, 0,4 kV ແລະ ຕິດຕັ້ງໝໍ້ແປງທີ່ຍັງບໍ່ທັນສຳເລັດ ໃຫ້ສຳເລັດຕາມສັນຍາ ພ້ອມທັງປັບປຸງ ແລະ ຂະຫຍາຍໄປສູ່ບ້ານທີ່ຍັງບໍ່ທັນໄດ້ໃຊ້ໄຟຟ້າໃນລະບົບໄຟຟ້າລາວ ເພື່ອຮັບປະກັນການຈຳໜ່າຍໄຟຟ້າໃຫ້ພຽງພໍ ແລະ ປອດໄພ.

- ສຶກສາ-ສຳຫຼວດ, ເກັບກຳຂໍ້ມູນ, ປັບປຸງ, ກໍ່ສ້າງ, ປ່ຽນຖ່າຍລະບົບໄຟຕາມສະຖານທີ່ສາທາລະນະ, ສຳນັກງານອົງການລັດ ແລະ ການບໍລິການ, ທີ່ຢູ່ອາໄສ ໃຫ້ປະຢັດການນຳໃຊ້ພະລັງງານໄຟຟ້າ ແລະ ສອດຄ່ອງກັບມາດຕະຖານເຕັກນິກໄຟຟ້າຂອງ ສປປ ລາວ.

- ປັບປຸງລະບົບການຄຸ້ມຄອງວຽກງານຊອກຄົ້ນ-ສຳຫຼວດແຮ່ທາດຕ່າງໆໃນຂັ້ນແຂວງອະນຸຍາດ ໃຫ້ໄປຕາມລະບົບນິຕິກຳຢ່າງເຂັ້ມງວດ.

- ສືບຕໍ່ຕິດຕາມໂຄງການຊອກຄົ້ນ, ສຳຫຼວດຍັງມີການເຄື່ອນໄຫວທີ່ຂັ້ນສູນກາງ ແລະ ທ້ອງຖິ່ນອະນຸຍາດ.

- ສ້າງ, ປັບປຸງ ແລະ ເຜີຍແຜ່ນິຕິກຳໃຕ້ກົດໝາຍ ຂັ້ນແຂວງ, ຂັ້ນເມືອງ ທີ່ນຳໃຊ້ເຂົ້າໃນການພັດທະນາ, ຄຸ້ມຄອງວຽກງານພະລັງງານ ແລະ ບໍ່ແຮ່ໃຫ້ທົ່ວເຖິງພາຍໃນແຂວງ.

- **ຂະແໜງບໍລິການ:** ພັດທະນາແຫຼ່ງທ່ອງທ່ຽວທຳມະຊາດ, ປະຫວັດສາດ ແລະ ວັດທະນະທຳ ເພື່ອດຶງດູດການທ່ອງທ່ຽວໃຫ້ຫຼາຍຂຶ້ນເຊັ່ນ: ສູນອານຸລັກຊ້າງພູແຄນ, ຕາດສະແນນ ແລະ ອື່ນໆ ໂດຍການມີສ່ວນຮ່ວມຂອງປະຊາຊົນ ຕິດພັນກັບການຮັກສາສະພາບແວດລ້ອມ, ປັບປຸງການບໍລິການດ້ານການທ່ອງທ່ຽວ, ໂຮງແຮມ, ເຮືອນພັກ, ຮ້ານອາຫານ ແລະ ອື່ນໆ, ພ້ອມທັງສ້າງຜະລິດຕະພັນການທ່ອງທ່ຽວ(ເຄື່ອງທີ່ລະນຶກ) ທີ່ນຳໃຊ້ວັດຖຸດິບພາຍໃນ ເພື່ອຕອບສະໜອງຄວາມຕ້ອງການຂອງນັກທ່ອງທ່ຽວ; ປັບປຸງ ແລະ ກໍ່ສ້າງພື້ນຖານໂຄງລ່າງຮັບໃຊ້ການທ່ອງ ທ່ຽວໃຫ້ສະດວກສະບາຍໃນການເຂົ້າເຖິງ, ຈັດຕັ້ງໃຫ້ມີສະມາຄົມທຸລະກິດການທ່ອງທ່ຽວຂັ້ນແຂວງ, ສ້າງ ແລະ ຝຶກອົບຮົມພະນັກງານນຳທ່ຽວ 3 ລະດັບ (ລະດັບພື້ນທີ່, ລະດັບແຂວງ ແລະ ລະດັບຊາດ), ຄຸ້ມຄອງວຽກງານທ່ອງທ່ຽວໃຫ້ມີການເຄື່ອນໄຫວຖືກຕ້ອງຕາມລະບຽບກົດໝາຍ, ໂຄສະນາວຽກງານການທ່ອງທ່ຽວ ຜ່ານສື່ສັງຄົມອອນລາຍ ເປັນຕົ້ນແມ່ນ: ເວບໄຊ້ (Website), ເຟຣດບຸກເພຈ (Facebook page), ຢູທູບ (Youtube), ອິນສະຕາແກຣມ (Instagram), ທະວິດເຕີ (Twinter) ແລະ ອັບປຣິເຄເຊີນຕ່າງໆ, ເຂົ້າຮ່ວມງານວາງສະແດງຢູ່ພາຍໃນ ແລະ ຕ່າງປະເທດ, ຈັດຄາລະວານການທ່ອງທ່ຽວ (Caravan), ເຟມທຣິບ (FAM trip) ຢູ່ພາຍໃນແຂວງ.

ສົ່ງເສີມການບໍລິການຂາຍຍົກ-ຂາຍຍ່ອຍ ແລະ ສ້ອມແປງທີ່ຕິດພັນກັບການສົ່ງເສີມຜະລິດຕະພັນພາຍໃນ. ຍົກລະດັບວຽກງານໂທລະຄົມມະນາຄົມ, ການຂົນສົ່ງ, ໂລຈິດສະຕິກ ແລະ ໄປສະນີ ໃຫ້ມີຄວາມວ່ອງໄວ ແລະ ທັນສະໄໝ ເພື່ອຊຸກຍູ້ການດຳເນີນທຸລະກິດທາງດ້ານການຄ້າ, ການຊຳລະສະສາງ ແລະ ອື່ນໆ ເຄື່ອນໄຫວຢ່າງມີປະສິດທິພາບ.

## ເປົ້າໝາຍທີ່ 02: ຊັບພະຍາກອນມະນຸດໃຫ້ມີຄຸນະພາບ

1. **ແຜນວຽກຈຸດສຸມທີ 01: ປັບປຸງຄຸນນະພາບການສຶກສາໃນທຸກລະດັບໃຫ້ສູງຂຶ້ນ ເພື່ອພັດທະນາ ຊັບພະຍາກອນມະນຸດ ໃຫ້ມີຄວາມຮູ້-ຄວາມສາມາດ ຕອບສະໜອງຄວາມຕ້ອງການຂອງຕະຫຼາດແຮງງານຢູ່ພາຍໃນ.**

### 1.1 ຄາດໝາຍ ແລະ ຕົວຊີ້ວັດ:

- ສູ້ຊົນໃຫ້ອັດຕາເຂົ້າຮຽນຂອງເດັກ 5 ປີ ໃຫ້ໄດ້ 97%.
- ຈຳນວນເມືອງທີ່ບັນລຸອັດຕາເຂົ້າຮຽນຂອງເດັກ 5 ປີ ສູງກວ່າ 60% ໃຫ້ໄດ້ທຸກໆ ເມືອງ.
- ຮັບປະກັນໃຫ້ ອັດຕາເຂົ້າຮຽນສຸດທິຊັ້ນປະຖົມ (6-10 ປີ) ໃຫ້ໄດ້ 99%.
- ຫຼຸດອັດຕາຄ້າງຫ້ອງຂັ້ນ ປ.1 ລົງໃຫ້ຕໍ່າກວ່າ 1,5%.

- ຫຼຸດອັດຕາຄ້າງຫ້ອງຊັ້ນປະຖົມ ລົງໃຫ້ຕໍ່າກວ່າ 1%.
- ຫຼຸດອັດຕາປະລະຂັ້ນ ປ.1 ລົງໃຫ້ຕໍ່າກວ່າ 1%.
- ຫຼຸດອັດຕາປະລະຊັ້ນປະຖົມ ລົງໃຫ້ຕໍ່າກວ່າ 1%.
- ເພີ່ມອັດຕາລອດເຫຼືອຮອດ ປ.5 ຂອງແຕ່ລະເມືອງ ໃຫ້ສູງກວ່າ 95%.
- ຈຳນວນເມືອງທີ່ມີອັດຕາປະລະຊັ້ນປະຖົມຕໍ່າກວ່າ 6% ໄດ້ 11 ເມືອງ.
- ເພີ່ມອັດຕາເຂົ້າຮຽນລວມມັດທະຍົມຕອນຕົ້ນໃຫ້ໄດ້ 95% ຂຶ້ນໄປ.
- ເພີ່ມອັດຕາເຂົ້າຮຽນລວມມັດທະຍົມຕອນປາຍໃຫ້ໄດ້ 64% ຂຶ້ນໄປ.
- ຫຼຸດອັດຕາປະລະມັດທະຍົມຕອນຕົ້ນລົງໃຫ້ຕໍ່າກວ່າ 3%.
- ອັດຕາສ່ວນນັກຮຽນຈົບ ມ.4 ເຂົ້າຮຽນຕໍ່ອາຊີວະສຶກສາ ໃຫ້ໄດ້ 5% ຂຶ້ນໄປ.
- ສົ່ງເສີມໃຫ້ນັກຮຽນທີ່ຮຽນຈົບຊັ້ນມັດທະຍົມຕອນປາຍສືບຕໍ່ວິຊາຊີບລະດັບຕ່າງໆຢູ່ພາຍໃນ ແລະ ຕ່າງປະເທດ 30%.
- ສົ່ງເສີມໃຫ້ມວນຊົນທຸກເພດ, ທຸກໄວ ໄດ້ເຂົ້າຮ່ວມການຫັດກາຍະບໍລິຫານ, ການອອກກຳລັງກາຍ ແລະ ການຫຼິ້ນກິລາ-ກາຍະກຳໃຫ້ໄດ້ຫຼາຍກວ່າ 36% ຂອງພົນລະເມືອງ.

**1.2 ວຽກຈຸດສຸມ:**

- ປັບປຸງຄຸນະພາບການສຶກສາເພື່ອເຮັດໃຫ້ຈຳນວນນັກຮຽນທີ່ຈົບຈາກອະນຸບານ ຈົນຮອດ ມັດທະຍົມຕອນປາຍ ລວມທັງການສຶກສານອກໂຮງຮຽນມີຜົນໄດ້ຮັບດ້ານການຮຽນຮູ້ທີ່ດີຂຶ້ນ ໂດຍສະເພາະແມ່ນການຮູ້ໜັງສື ແລະ ທັກສະການຄິດໄລ່ເລກ, ໂດຍສຸມໃສ່ເປັນພິເສດຕໍ່ຜູ້ດ້ອຍໂອກາດ ແລະ ຄວາມສະເໝີພາບລະຫວ່າງຍິງ-ຊາຍ;
- ຝຶກອົບຮົມສ້າງຄວາມເຂັ້ມແຂງແກ່ຄູສອນ ແລະ ຜູ້ອຳນວຍການໂຮງຮຽນໃຫ້ມີຄວາມຮູ້ຄວາມສາມາດສອດຄ່ອງກັບມາດຕະຖານການສິດສອນ ແລະ ການບໍລິຫານເພີ່ມຂຶ້ນ. ຮັບປະກັນໃຫ້ມີການປະເມີນຜົນການປະຕິບັດໜ້າທີ່ຂອງເຂົາເຈົ້າຢ່າງເປັນປົກກະຕິ.
- ສະໜອງຊັບພະຍາກອນທາງດ້ານການເງິນ ແລະ ຊັບພະຍາກອນມະນຸດໃຫ້ພຽງພໍແກ່ໂຮງຮຽນທຸກແຫ່ງເພື່ອໃຫ້ສາມາດເຮັດວຽກໄດ້ຢ່າງມີປະສິດທິຜົນ, ສາມາດໃນການຄຸ້ມຄອງໂຮງຮຽນ ແລະ ຍົກລະດັບການມີສ່ວນຮ່ວມຂອງຄະນະພັດທະນາການສຶກສາຂັ້ນບ້ານໃຫ້ສູງຂຶ້ນ.
- ຍົກລະດັບຄຸນະພາບການຮູ້ໜັງສືຂອງຊາວໜຸ່ມ ແລະ ຜູ້ໃຫຍ່ເພີ່ມຂຶ້ນ ພ້ອມທັງສາມາດຫຼຸດຜ່ອນຄວາມແຕກໂຕນກັນລະຫວ່າງເພດ, ເຜົ່າ, ຖານະດ້ານເສດຖະກິດ ແລະ ທີ່ຕັ້ງພູມສັນຖານ.
- ປັບປຸງລະບົບການບໍລິຫານຄຸ້ມຄອງການສຶກສາ ແລະ ກິລາ ໃຫ້ໄດ້ຮັບການປັບປຸງ, ມີການພັດທະນາຢ່າງຕັ້ງໜ້າ ສາມາດບໍລິຫານຄຸ້ມຄອງການສຶກສາຢ່າງມີປະສິດທິພາບ ແລະ ປະສິດທິຜົນສູງ.
- ສ້າງແຜນພັດທະນາການສຶກສາ ແລະ ກິລາທີ່ເໝາະສົມ, ຈັດສັນງົບປະມານໃຫ້ສອດຄ່ອງກັບແຜນບຸລິມະສິດໃນການພັດທະນາການສຶກສາ ແລະ ກິລາ.
- ປັບປຸງສະຫະພັນກິລາປະເພດຕ່າງໆ ສ້າງໃຫ້ມີຈຳນວນນັກກິລາສະໝັກຫຼິ້ນ ແລະ ນັກກິລາອາຊີບ ທີ່ສອດຄ່ອງກັບມາດຕະຖານຄຸນນະພາບ ດ້ານກິລາກາຍະກຳຂອງພາກພື້ນ ແລະ ສາກົນ ເພີ່ມຂຶ້ນ ແລະ ປະກອບສ່ວນເຂົ້າໃນເຊີດຊູເອກະລັກຂອງແຂວງ ແລະ ສ້າງໄດ້ຄວາມພາກພູມໃຈດ້ານກິລາກາຍະກຳແກ່ປະຊາຊົນຊາວໄຊຍະບູລີ.

2. **ແຜນວຽກຈຸດສຸມທີ 02: ປັບປຸງການບໍລິການດ້ານສາທາລະນະສຸກ ແລະ ໂພສະນາການຢ່າງທົ່ວເຖິງ.**

**2.1 ຄາດໝາຍ ແລະ ຕົວຊີ້ວັດ.**

- ສູ້ຊົນເຮັດໃຫ້ອັດຕາເດັກນ້ອຍລຸ່ມ 5 ປີທີ່ມີນໍ້າໜັກຕໍ່າກວ່າມາດຕະຖານ ໃຫ້ໄດ້ 8,5% ຂອງຈຳນວນເດັກທີ່ມາຕິດຕາມທັງໝົດ.

- ສູ້ຊົນເຮັດໃຫ້ອັດຕາເດັກນ້ອຍລຸ່ມ 5 ປີທີ່ມີລວງສູງບໍ່ໄດ້ມາດຕະຖານ ໃຫ້ໄດ້ 8,7% ຂອງຈ□ານວນເດັກທີ່
ມາ
ຕິດຕາມທັງໝົດ.
- ສູ້ຊົນເຮັດໃຫ້ອັດຕາການຕາຍຂອງເດັກລຸ່ມ 1 ປີ ໃຫ້ໄດ້ 7/1000 ຂອງເດັກເກີດມີຊີວິດ.
- ສູ້ຊົນເຮັດໃຫ້ອັດຕາການຕາຍຂອງເດັກລຸ່ມ 5 ປີ ໃຫ້ໄດ້ 8/1000 ຂອງເດັກເກີດມີຊີວິດ.
- ສູ້ຊົນເຮັດໃຫ້ອັດຕາສ່ວນການຕາຍຂອງແມ່ໃຫ້ໄດ້ 62,6/100000 ຂອງເດັກເກີດມີຊີວິດ.
- ສູ້ຊົນເຮັດໃຫ້ອັດຕາການເກີດລູກມີແພດຊ່ວຍ ໃຫ້ໄດ້ 85% ຂອງແມ່ມານເປົ້າໝາຍ.
- ສູ້ຊົນເຮັດໃຫ້ອັດຕາການສັກຢາວັກຊີນກັນພະຍາດໃນເດັກລຸ່ມ 1 ປີ ໃຫ້ໄດ້ 95% ຂອງເດັກເປົ້າໝາຍ.
- ສູ້ຊົນເຮັດໃຫ້ອັດຕາການຊົມໃຊ້ນໍ້າສະອາດ ໃຫ້ໄດ້ 95,9% ຂອງຈໍານວນປະຊາກອນ.
- ສູ້ຊົນເຮັດໃຫ້ອັດຕາການຊົມໃຊ້ວິດຖ່າຍ ໃຫ້ໄດ້ 100% ຂອງຈໍານວນຄອບຄົວທັງໝົດ.
- ສູ້ຊົນເຮັດໃຫ້ອັດຕາການປົກຄຸມປະກັນສຸຂະພາບ ໃຫ້ໄດ້ 100% ຂອງຈໍານວນປະຊາກອນ.
- ສູ້ຊົນເຮັດໃຫ້ອັດຕາການຮັບຮອງ ແລະ ປະກາດບ້ານສາທາລະນະສຸກແບບຢ່າງໃຫ້ໄດ້ 94% ຂອງຈໍານວນບ້ານທັງໝົດ.

**2.2 ວຽກຈຸດສຸມ:**

- ຈັດຕັ້ງປະຕິບັດນະໂຍບາຍ ສາທາລະນະສຸກທົ່ວປວງຊົນ ໂດຍຖືເອົາການກັນພະຍາດ- ສົ່ງເສີມສຸຂະພາບ ເປັນ ຕົ້ນຕໍ, ຖືເອົາການປິ່ນປົວ ແລະ ສະໜອງການບໍລິການທີ່ມີຄຸນນະພາບ ຢ່າງທົ່ວເຖິງ ແລະ ຍຸດຕິທໍາ, ປະຕິບັດລະບອບປະຕິຮູບສາທາລະນະສຸກຢ່າງຮອບດ້ານ, ສ້າງລະບົບບໍລິການສຸຂະພາບທີ່ດີ ຖືເອົາຄົນເປັນໃຈກາງ ດ້ວຍຈັນທໍາ-ຈັນຍາບັນ, ເອົາໃຈໃສ່ດູແລ ທັງຮ່າງກາຍ, ຈິດໃຈ ເຮັດໃຫ້ທຸກຄົນມີສຸຂະພາບແຂງແຮງ ດ້ວຍການສ້າງລະບົບບໍລິການສຸຂະພາບ ຢູ່ຂັ້ນຮາກຖານໃຫ້ເຂັ້ມແຂງ.
- ດັດສົມການເພີ່ມຂຶ້ນຂອງພົນລະເມືອງໃຫ້ພໍດີກັບຈັງຫວະການຂະຫຍາຍຕົວຂອງເສດຖະກິດສັງຄົມ ເພື່ອຮັບປະກັນຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ.
- ສົ່ງເສີມການປະຕິບັດວຽກງານ ຊຸມຊົນເປັນເຈົ້າດ້ານສຸຂະອະນາໄມໃຫ້ກວ້າງຂວາງ ແລະ ມີຄຸນນະພາບ ຕິດພັນກັບການພັດທະນາຊຸມຊົນໃຫ້ມີຄວາມສາມາດແກ້ໄຂບັນຫາສຸຂະພາບ ຂອງຊຸມຊົນ ໂດຍຊຸມຊົນ. ເພື່ອເຮັດໃຫ້ບັນລຸຄາດໝາຍ, ສາມາດປະກາດຢຸດຕິການຖ່າຍຊະຊາຍທົ່ວແຂວງ ໃນປີ 2024 ແລະ ອາຍຸຍືນສະເລ່ຍໃຫ້ໄດ້ 73 ປີ.
- ປັບປຸງ, ຍົກລະດັບຄວາມຮູ້ຄວາມສາມາດຂອງແພດໝໍໃຫ້ມີຄວາມຊ□ານານງານ ແລະ ປະກອບວັດຖຸເຕັກນິກທີ່ທັນສະໄໝໃຫ້ໂຮງໝໍແຂວງ, ໂຮງໝໍຊຸມຊົນ ແລະ ໂຮງໝໍນ້ອຍ ຕາມຄວາມເໝາະສົມ ເພື່ອຕອບສະໜອງຄວາມຕ້ອງການດ້ານການບໍລິການໃຫ້ທົ່ວເຖິງ ແລະ ມີຄຸນນະພາບ ຫຼຸດຜ່ອນການໄປໃຊ້ບໍລິການດ້ານການແພດທີ່ບໍ່ຈໍາເປັນຢູ່ຕ່າງປະເທດ, ຮັບປະກັນໃຫ້ສະຖານທີ່ບໍລິການທຸກລະດັບມີການປະຕິ ບັດນະໂຍບາຍຍົກສູງຄຸນນະພາບການບໍລິການ 5 ດີ 1 ພໍໃຈ ຢ່າງມີຄຸນະພາບ.
- ຍົກສູງຄຸນນະພາບ ຂອງວຽກງານກັນພະຍາດ ແລະ ສົ່ງເສີມສຸຂະພາບ ຢູ່ແຕ່ລະຂັ້ນ ໂດຍໃຫ້ຖືເອົາ ວຽກງານໂຄສະນາສຸຂະສຶກສາເປັນປາຍແຫຼມ ປິ່ນອ້ອມໃຫ້ແກ່ທຸກວຽກງານ, ເອົາວຽກງານການບໍລິການສຸຂະພາບຂອງແມ່, ເດັກແດງ ແລະ ເດັກນ້ອຍເປັນສໍາຄັນ, ປຸກລະດົມແມ່ຍິງຖືພາມາຮັບບໍລິການກວດທ້ອງກ່ອນເກີດ 4 ຄັ້ງ ເພື່ອຊອກຫາກໍລະນີສ່ຽງໄພ, ຮັບປະກັນການສົ່ງຕໍ່ໄປບ່ອນມີເງື່ອນໄຂໃຫ້ທັນເວລາ, ຕອບສະໜອງການຊ່ວຍເກີດລູກ ທີ່ປອດໄພນໍາແພດຜູ້ຊໍານານງານ, ສາມາດແກ້ໄຂກໍລະນີສຸກເສີນ, ຫລຸດຜ່ອນອັດຕາການຕາຍຂອງແມ່ ແລະ ເດັກ, ເອົາໃຈໃສ່ສົ່ງເສີມວຽກງານໂພສະນາການ, ການວາງແຜນຄອບຄົວ, ສັກຢາກັນພະຍາດແກ່ເດັກ ແລະ ແມ່ຍິງໄວຈະເລີນພັນໄດ້ມີພູມຄຸ້ມກັນບໍ່ໃຫ້ເກີດເປັນພະຍາດຕິດຕໍ່ຮ້າຍແຮງ ທີ່ສາມາດປ້ອງກັນໄດ້.

- ສູ້ຊົນເຮັດໃຫ້ປະຊາຊົນເຂົ້າເຖິງຂໍ້ມູນຂ່າວສານດ້ານການບໍລິໂພກອາຫານທີ່ມີປະໂຫຍດຕໍ່ສຸຂະພາບພ້ອມທັງໝັ່ນອອກກຳລັງກາຍຢ່າງສະໝໍ່າສະເໝີ ແລະ ຄວບຄຸມພະຍາດບໍ່ຕິດຕໍ່ ສົ່ງເສີມໃຫ້ມີສຸຂະພາບແຂງແຮງ ແລະ ອາຍຸຍືນຍາວ ເພື່ອບັນລຸຄາດໝາຍການພັດທະນາແບບຍືນຍົງໃນປີ 2030.
- ເອົາໃຈໃສ່ການເຝົ້າລະວັງພະຍາດຢ່າງເປັນລະບົບຕໍ່ເນື່ອງ ແລະ ຕອບໂຕ້ຕໍ່ການລະບາດໃຫ້ມີປະສິດທິພາບ ແລະ ທ່ວງທັນຕໍ່ເຫດການ, ຮັບປະກັນສະກັດກັ້ນບໍ່ໃຫ້ມີການ ລະບາດແຜ່ລາມກ້ວາງ ຂອງພະຍາດ.
- ສ້າງຄວາມເຂັ້ມແຂງ ແລະ ພັດທະນາລະບົບປະກັນສຸຂະພາບລວມທັງການປັບປຸງນິຕິກຳຕ່າງໆເພື່ອເປັນບ່ອນອີງໃນການພັດທະນາວຽກງານ ແນໃສ່ເຮັດໃຫ້ປະຊາຊົນເຂົ້າເຖິງການບໍລິການທີ່ມີຄຸນນະພາບ ແລະ ເປັນທຳ ພ້ອມທັງປົກປ້ອງເຂົາເຈົ້າຈາກການໃຊ້ຈ່າຍຢ່າງຫລວງຫລາຍໃນເວລາເຈັບເປັນ, ສ້າງຄວາມສາມາດໃນການຄຸ້ມຄອງ, ຫັນກຸ້ມຕົນເອງເທື່ອລະກ້າວ ແລະ ປົກຄຸມປະຊາຊົນທຸນຄົນຮອດ ປີ 2025.

## 3. ແຜນວຽກຈຸດສຸມທີ 03: ພັດທະນາສີມືແຮງງານ ໃຫ້ມີຄວາມຊຳນານງານ ໃນຫຼາຍສາຂາວິຊາຊີບ ຕອບສະໜອງຄວາມຕ້ອງການຂອງຕະຫຼາດແຮງງານພາຍໃນ.

### 3.1. ຄາດໝາຍ ແລະ ຕົວຊີ້ວັດ:

- ສູ້ຊົນເຮັດໃຫ້ກຳລັງແຮງງານ ໄດ້ຮັບການຝຶກອົບຮົມ ແລະ ພັດທະນາສີມືແຮງງານ ໃຫ້ໄດ້ 17.500 ຄົນ; ໃນນີ້:
  - + ຂະແໜງກະສິກຳ 5.000 ຄົນ.
  - + ຂະແໜງອຸດສາຫະກຳ ແລະ ພະລັງງານບໍ່ແຮ່ 6.500 ຄົນ.
  - + ຂະແໜງບໍລິການ 6.000 ຄົນ.
- ຈັດຫາງານ ໃຫ້ແກ່ກຳລັງແຮງງານພາຍໃນ ເຂົ້າເຮັດວຽກໃຫ້ໄດ້ 20.000 ຄົນ; ໃນນີ້:
  - + ຂະແໜງກະສິກຳ 6.000 ຄົນ.
  - + ຂະແໜງອຸດສາຫະກຳ ແລະ ພະລັງງານບໍ່ແຮ່ 7.000 ຄົນ.
  - + ຂະແໜງບໍລິການ 7.000 ຄົນ.
- ຮອດປີ 2025 ຄາດຄະເນແຮງງານພາຍໃນແຂວງຈະມີປະມານ 286.100 ຄົນ.
- ຄວບຄຸມອັດຕາການຫວ່າງງານໃຫ້ຢູ່ໃນລະດັບບໍ່ເກີນ 2,5%.
- ສ້າງສູນຝຶກວິຊາຊີບຂອງແຂວງ ໃຫ້ໄດ້ 1 ແຫ່ງ.

### 3.2. ແຜນວຽກຈຸດສຸມ:

- ຝຶກອົບຮົມສີມືແຮງງານໃຫ້ແກ່ຊາວໜຸ່ມຍິງ-ຊາຍຜູ້ດ້ອຍໂອກາດ ເພື່ອພັດທະນາທັກສະນະດ້ານວິຊາຊີບໃຫ້ເຂົາເຈົ້າສາມາດເພິ່ງຕົນໃນການປະກອບອາຊີບດ້ວຍຕົນເອງໄດ້ໂດຍພື້ນຖານ.
- ສ້າງ ແລະ ຍົກລະດັບສີມືໃນຫລາຍສາຂາວິຊາຊີບສອດຄ່ອງກັບຄວາມຕ້ອງການຂອງຕະຫລາດແຮງງານໃນຂະແໜງເສດຖະກິດຕ່າງໆ ແລະ ສ້າງສູນພັດທະນາສີມືແຮງງານຂອງແຂວງ ເພື່ອເປັນບ່ອນສ້າງຊັບພະຍາ ກອນມະນຸດກໍ່ຄືກຳລັງແຮງງານໃຫ້ມີສີມືທີ່ມີຄຸນນະພາບ; ສ້າງ, ປັບປຸງໂຄງລ່າງພື້ນຖານ ແລະ ກົນໄກການພັດທະນາສີມືແຮງງານ ໂດຍການມີສ່ວນຮ່ວມລະຫວ່າງພາກລັດ, ທຸລະກິດເອກະຊົນ, ຫົວໜ່ວຍແຮງງານ ແລະ ໂຄງການການລົງທຶນຂອງເອກະຊົນພາຍໃນ ແລະ ຕ່າງປະເທດ ໃຫ້ມີຄວາມກົມກຽວກັນ.
- ປັບປຸງຈຸດບໍລິການຈັດຫາງານໃຫ້ເຂັ້ມແຂງ ແລະ ສາມາດໃຫ້ບໍລິການທີ່ມີຄຸນນະພາບສູງຂຶ້ນ ພ້ອມທັງສຸມໃສ່ ການຫັນປ່ຽນຈາກການຈັດຫາວຽກເຮັດງານທຳນອກລະບົບໄປສູ່ໃນລະບົບ ເພື່ອກ້າວໄປສູ່ການມີວຽກເຮັດງານທຳທີ່ມີຄຸນຄ່າ ແລະ ເປັນທຳ, ແຮງງານເຮັດວຽກຕາມລະດູການ ແລະ ແຮງງານເຮັດວຽກເພື່ອຊົມໃຊ້ໃນຄົວເຮືອນ ເພື່ອແກ້ໄຂບັນຫາແຮງງານເຄື່ອນຍ້າຍເຂົ້າສູ່ຕົວເມືອງ ແລະ ໄປຕ່າງປະເທດ.
- ສຸມໃສຄຸ້ມຄອງແຮງງານ ທັງຄົນລາວ ແລະ ຕ່າງປະເທດເຂົ້າມາເຮັດວຽກໃຫ້ຖືກຕ້ອງຕາມກົດໝາຍ ໂດຍສະເພາະການປະຕິບັດພັນທະຕໍ່ລັດ ແລະ ຫຼຸດຜ່ອນການຍາດວຽກເຮັດງານທຳຂອງແຮງງານພາຍໃນ.

- ຊຸກຍູ້ຫົວໜ່ວຍແຮງງານ ແລະ ໂຄງການຕ່າງໆພາຍໃນແຂວງ ຕ້ອງມີນະໂຍບາຍຕໍ່ຜູ້ອອກແຮງງານທາງດ້ານສະຫວັດດີການ, ໃຫ້ຄ່າແຮງງານທີ່ເໝາະສົມ, ມີການປ້ອງກັນທາງດ້ານສຸຂະພາບ ແລະ ຄວາມປອດໄພໃຫ້ກຳມະກອນໃນສະຖານທີ່ອອກແຮງງານ.

4. **ແຜນວຽກຈຸດສຸມທີ 04: ສົ່ງເສີມການຄົ້ນຄວ້າວິທະຍາສາດ ແລະ ພັດທະນານະວັດຕະກຳໃໝ່ ເຂົ້າໃນການພັດທະນາເສດຖະກິດ-ສັງຄົມ.**

- ສົ່ງເສີມ ຄຸ້ມຄອງ, ນຳໃຊ້ ແລະ ພັດທະນາວຽກງານວິທະຍາສາດ, ຖ່າຍທອດເຕັກໂນໂລຊີໃໝ່ ແລະ ນະວັດຕະກຳໃໝ່ເຂົ້າສູ່ຂະບວນການຜະລິດ, ເພື່ອເຮັດໃຫ້ຜະລິດຕະພັນມີມູນຄ່າເພີ່ມ ເສດຖະກິດມີການຂະຫຍາຍຕົວຢ່າງຕໍ່ເນື່ອງ ແລະ ໝັ້ນທ່ຽງ; ປັບປຸງວຽກງານມາດຕະຖານ ແລະ ວັດແທກເຂົ້າສູ່ຂະບວນການຜະລິດ ແລະ ການບໍລິການໃຫ້ຫຼາຍຂຶ້ນສາມາດແຂ່ງຂັນທາງດ້ານປະລິມານ-ຄຸນນະພາບ ແລະ ລາຄາໃນຕະຫລາດທັງພາຍໃນ ແລະ ຕ່າງປະເທດ ເພື່ອສ້າງຄວາມຍຸຕິທຳໃຫ້ແກ່ສັງຄົມ.

- ສົ່ງເສີມ ແລະ ພັດທະນາວຽກງານຊັບສິນທາງປັນຍາໃຫ້ເຂົ້າສູ່ລະບົບເຊັ່ນ: ການຈົດທະບຽນເຄື່ອງໝາຍການຄ້າ, ສິດທິບັດ, ອານຸສິດທິບັດ, ລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ, ການແກ້ໄຂຂໍ້ຂັດແຍ່ງທາງດ້ານຊັບສິນທາງປັນຍາ ແລະ ສິ່ງກິດຂວາງ ຕໍ່ຫົວໜ່ວຍການຜະລິດທຸລະກິດໃນທົ່ວແຂວງ. ສືບຕໍ່ຈັດຕັ້ງປະຕິບັດໂຄງການສຳຫຼວດຂອບເຂດສວນອຸທິຍານພຶກສາສາດ ຜາຊ້າງ-ຜາຂີ້ໝົ້ນ ແລະ ອື່ນໆ.

- ສົ່ງເສີມການນຳໃຊ້ລະບົບເອເລັກໂຕຣນິກເຂົ້າໃນການບໍລິຫານລັດ ແລະ ການບໍລິການໃນທົ່ວສັງຄົມໃຫ້ຫຼາຍຂຶ້ນ.

## ເປົ້າໝາຍທີ່ 03: ຍົກສູງຊີວິດການເປັນຢູ່ທາງດ້ານວັດຖຸ ແລະ ຈິດໃຈຂອງປະຊາຊົນໃຫ້ດີຂຶ້ນ.

1. **ແຜນວຽກຈຸດສຸມທີ 01: ພັດທະນາຊີວິດການເປັນຢູ່ຂອງປະຊາຊົນໃນເຂດຊົນນະບົດ ແລະ ເຂດຫ່າງໄກສອກຫຼີກ ໃຫ້ໄດ້ຮັບການປັບປຸງດີຂຶ້ນ.**

**1.1. ຄາດໝາຍ ແລະ ຕົວຊີ້ວັດ.**

- ສູ້ຊົນເຮັດໃຫ້ຄອບຄົວບັນລຸມາດຕະຖານພົ້ນທຸກໃຫ້ໄດ້ 3.664 ຄອບຄົວ ລວມເປັນ 76.391 ຄອບຄົວ ເທົ່າກັບ 96,8% (ຍັງເຫຼືອບໍ່ເກີນ 3,2%) ແລະ ຂັ້ນບ້ານໃຫ້ບັນລຸມາດຕະຖານພົ້ນທຸກໃຫ້ໄດ້ 42 ບ້ານ ລວມເປັນ 403 ບ້ານ ເທົ່າກັບ 92,3% (ຍັງເຫຼືອບໍ່ເກີນ 7,7%).
- ສູ້ຊົນເຮັດໃຫ້ຄອບຄົວບັນລຸມາດຕະຖານພັດທະນາເພີ້ມຂຶ້ນ 8.000 ຄອບຄົວ ລວມເປັນ 70.195 ຄອບຄົວ ເທົ່າກັບ 88,9% ແລະ ຂັ້ນບ້ານໃຫ້ບັນລຸມາດຕະຖານພັດທະນາເພີ້ມຂຶ້ນ 140 ບ້ານ ລວມເປັນ 193 ບ້ານ ເທົ່າກັບ 44,6%.
- ສູ້ຊົນສ້າງບ້ານໃຫຍ່ເປັນຕົວເມືອງນ້ອຍໃນຊົນນະບົດ ໃຫ້ໄດ້ 8 ຈຸດ: ນາມອນ, ທົ່ງກາບ, ບ້ານທອງ, ນາແອນ, ບົວບານ, ວັງປາ, ປາກແຄມ ແລະ ບ້ານຕົ້ນຕານ.
- ສູ້ຊົນສ້າງເມືອງບັນລຸມາດຕະຖານພົ້ນທຸກ ໃຫ້ໄດ້ 3 ເມືອງ (ເມືອງ ໄຊຍະບູລີ, ເມືອງ ຊຽງຮ່ອນ ແລະ ເມືອງຄອບ).
- ສູ້ຊົນສ້າງເມືອງເຂັ້ມແຂງຮອບດ້ານໃຫ້ໄດ້ 2 ເມືອງ (ເມືອງເງິນ ແລະ ເມືອງປາກລາຍ)
- ສູ້ຊົນການສ້າງຕັ້ງກຸ່ມຜະລິດກະສິກຳໃຫ້ໄດ້ 288 ກຸ່ມຜະລິດ ແລະ ສ້າງສະຫະກອນໃຫ້ໄດ້ 2 ສະຫະກອນ: ຜະລິດກະສິກຳເປັນສິນຄ້າຢູ່ເມືອງພຽງ ແລະ ເມືອງຊຽງຮ່ອນ.

**1.2. ວຽກງານຈຸດສຸມ.**

- ຊຸກຍູ້ໃຫ້ບັນດາເມືອງຈັດຕັ້ງປະຕິບັດຄຳແນະນຳ ເລກທີ 219/ຈຂ.ຊຍ, ລົງວັນທີ 17 ກັນຍາ 2019 ກ່ຽວກັບການຈັດຕັ້ງຜັນຂະຫຍາຍວຽກງານຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ແລະ ດຳລັດ ເລກທີ 348/ລບ ວ່າດ້ວຍມາດຖານພົ້ນທຸກ ແລະ ມາດຖານພັດທະນາ ຢູ່ແຂວງໄຊຍະບູລີ.

- ປະສານສົມທົບກັບບັນດາເມືອງ ສ້າງແຜນພັດທະນາແຕ່ລະຈຸດສຸມໃຫ້ສຳເລັດ, ປຸກລະດົມແຫຼ່ງທຶນ ແລະ ຈັດສັນງົບປະມານ ເພື່ອຈັດຕັ້ງປະຕິບັດຢູ່ແຕ່ລະຈຸດສຸມ ໃຫ້ມີການພັດທະນາຂຶ້ນ.
- ຈັດສັນພູມລຳເນົາໃຫ້ປະຊາຊົນ ທີ່ຍັງດຳລົງຊີວິດຢູ່ກັບຄວາມສ່ຽງ ແລະ ບໍ່ສາມາດເຂົ້າເຖິງພື້ນຖານໂຄງລ່າງ ໃຫ້ໄດ້ 50% ຂອງຈຳນວນທີ່ຍັງເຫຼືອ ຕາມດຳລັດ 348/ລບ.
- ປັບປຸງ ແລະ ສ້າງຕັ້ງກຸ່ມຜະລິດກະສິກຳ ໃຫ້ຖືກຕາມເງື່ອນໄຂ ແລະ ຫຼັກການ ສາມາດເຄື່ອນໄຫວໄດ້ຕໍ່ເນື່ອງ.
- ຊຸກຍູ້ ການຈັດຕັ້ງປະຕິບັດກອງທຶນພັດທະນາບ້ານ ໃຫ້ມີການເຄື່ອນໄຫວປົກກະຕິ ແລະ ກາຍເປັນຕົວແບບໃຫ້ໄດ້ 5 ກອງທຶນ.

**2. ແຜນວຽກຈຸດສຸມທີ 02: ພື້ນຖານໂຄງລ່າງບໍລິການທາງດ້ານສາທາລະນຸປະໂພກ ໄດ້ຮັບການປັບປຸງ ແລະ ສະໜອງໃຫ້ປະຊາຊົນຢ່າງທົ່ວເຖິງ.**

**2.1 ຄາດໝາຍ ແລະ ຕົວຊີ້ວັດ.**

- ສູ້ຊົນພັດທະນາ, ສະໜອງນໍ້າປະປາໃຫ້ເທດສະບານ, ເຂດຊຸມຊົນ, ຈຸດສຸມບ້ານໃຫຍ່ ແລະ ຕົວເມືອງນ້ອຍ ໃຫ້ໄດ້ 85% ຮອດປີ 2025.
- ສູ້ຊົນໃຫ້ບ້ານໃນທົ່ວແຂວງໄດ້ຊົມໃຊ້ໄຟຟ້າຈາກລະບົບຈຳໜ່າຍໄຟຟ້າ 100% ແລະ ຄົວຄອບຊົມໃຊ້ໄຟຟ້າໃຫ້ໄດ້ 99% ໃນປີ 2025.
- ຂະຫຍາຍໂທລະໂຄງຂອງບ້ານໃຫ້ໄດ້ 100%.
- ສ້າງບ້ານວັດທະນະທຳໃຫ້ໄດ້ 95% ຂອງບ້ານທັງໝົດ, ສ້າງກົມກອງວັດທະນະທຳໃຫ້ໄດ້ 90 ກົມກອງເມືອງວັດທະນະທຳໃຫ້ໄດ້ 2-3 ເມືອງ.
- ຂະຫຍາຍການບໍລິການ ການສື່ສານ ໂທລະສັບຕັ້ງໂຕະ ແລະ ມືຖື ໃຫ້ບັນລຸອັດຕາສ່ວນຜູ້ຊົມໃຊ້ 100% , ດ້ານອິນເຕີເນັດ ໃຫ້ບັນລຸ ອັດຕາຜູ້ຊົມໃຊ້ 45% ຂອງຈຳນວນຜູ້ຊົມໃຊ້ໂທລະສັບ.
- ສືບຕໍ່ຊຸກຍູ້ ສາຂາບໍລິສັດ ຂະຫຍາຍຕາໜ່າງດ້ານໂທລະຄົມມະນາຄົມ ເຂົ້າຫາເຂດຫ່າງໄກ ແລະ ເຂດທີ່ບໍ່ມີສັນຍານຈຳນວນ 07 ບ້ານ, ບ້ານສັນຍານອ່ອນ 13 ບ້ານໃຫ້ສຳເລັດ.
- ສູ້ຊົນສ້າງເວບໄຊຢູ່ສຳນັກງານອົງການ ແລະ ເມືອງຕ່າງໆ ໃຫ້ໄດ້ຢ່າງໜ້ອຍ 15 ເວັບໄຊ.

**2.2 ວຽກຈຸດສຸມ.**

- ສຸມໃສ່ປັບປຸງເສັ້ນທາງທີ່ທະລຸ, ຍົກລະດັບແລ້ວໃຫ້ສາມາດທຽວໄດ້ສະດວກ ໂດຍສະເພາະເສັ້ນທາງໄປຫາບ້ານໂພນສີດາ ແລະ ບ້ານນາຂອນແກ່ນ ເມືອງໄຊຍະບູລີ, ເສັ້ນທາງບ້ານບົວບານ-ຫ້ວຍຊາຍຂາວ, ເສັ້ນທາງແຕ່ສາມທາງ 4A-ບ້ານແດ-ບ້ານມ່ວງ, ເສັ້ນທາງຜາລຽບ-ໜອງໄຄ້, ເສັ້ນທາງໜອງໄຄ້-ປາກຕຸງເມືອງປາກລາຍ.
- ສຸມໃສ່ສະໜອງໄຟຟ້າໃຫ້ພຽງພໍ ບໍລິການວອງໄວ ດ້ວຍຄວາມປອດໄພ ນຳໃຊ້ໃຫ້ເກີດຜົນ.
- ສຸມໃສ່ຈັດຕັ້ງປະຕິບັດວຽກງານປະຢັດພະລັງງານໃນທີ່ຢູ່ອາໃສ, ອຸດສາຫະກຳ, ການຂົນສົ່ງ, ສະຖານທີ່ສາທາລະນະ, ສຳນັກງານອົງການລັດ ແລະ ການບໍລິການ.
- ສືບຕໍ່ປັບປຸງລະບົບໂຮງງານນໍ້າປະປາທີ່ມີແລ້ວໃຫ້ມີຄຸນະພາບ ແລະ ສາມາດຮອງຮັບໃຫ້ການຂະຫຍາຍຕົວຂອງປະຊາກອນໃນແຕ່ລະພື້ນທີ່.
- ຊຸກຍູ້ ໃຫ້ສາຂາບໍລິສັດ ໄປສະນີ ແຂວງ ໄຊຍະບູລີ ໃຫ້ມີການບໍລິການໄປສະນີ ສາມາດເຂົ້າເຖິງບ້ານປະຊາຊົນຢ່າງທົ່ວເຖິງ ໃນເຂດຕົວເມືອງ ແລະ ເຂດຈຸດສຸມ ແລະ ດຳເນີນທຸລະກິດ ມີຜົນກຳໄລ ແລະ ມີປະສິດຕິພາບກວ່າເກົ່າ, ເພີ່ມຄວາມໜ້າເຊື່ອຖື, ຄວາມປອດໄພ ແລະ ອຳນວຍຄວາມສະດວກ.
- ກວດກາ, ຕິດຕາມ ການນຳໃຊ້ຄື້ນຄວາມຖີ່ ໃນຂອບເຂດ ທົ່ວແຂວງ ໂດຍສະເພາະ ແມ່ນເຂດຊາຍແດນທີ່ຕິດກັບປະເທດໃກ້ຄຽງ ເພື່ອຮັບປະກັນຄວາມປອດໄພ, ຄວາມສະຫງົບ ແລະ ຮັກສາຜົນປະໂຫຍດລວມຂອງຊາດ.

- ພັດທະນາຄວາມຮູ້, ຄວາມສາມາດໃຫ້ບັນດາຖັນແຖວພະນັກງານລັດ ຂອງບັນດາພະແນກການ,ອົງການ ແລະ ກົມກອງ ອ້ອມຂ້າງແຂວງ ແລະ ບັນດາເມືອງ 11 ເມືອງ, ໂດຍການຈັດຝຶກອົບຮົມຄວາມຮູ້ດ້ານ ໄອຊີທີ ແລະ ໂຄສະນາເຜີຍແຜ່ນິຕິກຳ ດ້ານການຄຸ້ມຄອງ ໄອຊີທີ ໃຫ້ໄດ້ 08 ຊຸດ ຂຶ້ນໄປ, ມີຜູ້ເຂົ້າຮ່ວມ 145 ຄົນ ຂຶ້ນໄປ.
- ຊຸກຍູ້ ສົ່ງເສີມໃຫ້ບັນດາຫ້ອງການລັດ ຫັນມາຊົມໃຊ້ເຄື່ອງມືໄອຊີທີ ເຂົ້າໃນກວຽກງານ ໃຫ້ກວ້າງຂວາງ ແລະ ມີປະສິດທິຜົນ ເພື່ອຫັນເປັນລະບົບບໍລິຫານລັດດ້ວຍເອເລັກໂຕຼນິກ ເທື່ອລະກ້າວ.
- ຄຸ້ມຄອງ, ຕິດຕາມ ກວດກາ ການອອກ-ຕໍ່ໃບອະນຸຍາດ ດ້ານໄປສະນີ, ຄື້ນຄວາມຖີ່ ແລະ ເຕັກໂນໂລຊີ ການສື່ສານຂໍ້ມູນຂ່າວສານ (ໄອຊີທີ ) ທົ່ວແຂວງໄຊຍະບູລີ ໃຫ້ຖືກຕ້ອງຕາມລະບຽບການ.

**3. ແຜນວຽກຈຸດສຸມທີ 03: ປະຊາຊົນ ແລະ ຜູ້ອອກແຮງງານພາກລັດ-ເອກະຊົນເຂົ້າເຖິງ ການບໍລິການປະກັນສັງຄົມ ແລະ ສະຫວັດດີການສັງຄົມທີ່ດີຂຶ້ນ.**

**3.1 ຄາດໝາຍ ແລະ ຕົວຊີ້ວັດ.**

- ສູ້ຊົນຂະຫຍາຍອັດຕາການປົກຄຸມປະກັນສັງຄົມ ໃຫ້ໄດ້ 5.000 ຄົນ ໃນນັ້ນ, ພາກລັດ 500 ຄົນ, ພາກ ວິສາຫະກິດ 2.000 ຄົນ ແລະ ຜູ້ສະມັກໃຈ 2.500 ຄົນ.
- ຮັບບໍລິຈາກເລືອດ ໃຫ້ໄດ້ 17.900 ຖົງ.
- ສ້າງບ້ານພັດທະນາດ້ານແຮງງານ ແລະ ສະຫວັດດີການສັງຄົມ ໃຫ້ໄດ້ 70% ຂອງຈຳນວນບ້ານທັງໝົດ ພາຍໃນແຂວງ.
- ປະຕິບັດນະໂຍບາຍຕໍ່ຜູ້ທີ່ມີຜົນງານ ແລະ ຄຸນງາມຄວາມດີໃນພາລະກິດຮັບໃຊ້ການປະຕິວັດຊາດ ປະຊາ ທິ ປະໄຕ ຕາມດຳລັດ 272/ລບ ໃຫ້ໄດ້ ຈຳນວນ 1.440 ທ່ານ.
- ປຸກລະດົມເງິນເຂົ້າໃນກອງທຶນແຮຊ່ວຍເຫຼືອສຸກເສີນຜູ້ປະສົບໄພພິບັດ ໃຫ້ໄດ້ 800 ລ້ານກີບຕໍ່ປີ.
- ຂະຫຍາຍຕາໜ່າງປົກປ້ອງເດັກຂັ້ນບ້ານໃຫ້ກວມເອົາ 80% ຂອງຈຳນວນບ້ານທັງໝົດພາຍໃນແຂວງ.

**3.2 ວຽກຈຸດສຸມ.**

- ຈັດຕັ້ງການເຜີຍແຜ່ກົດໝາຍ ແລະ ນິຕິກຳອື່ນໆທີ່ກ່ຽວຂ້ອງ ກັບວຽກງານແຮງງານ ແລະ ສະຫັວດດີການ ສັງຄົມ ໃຫ້ແກ່ບັນດາສຳນັກງານອົງການ, ຫົວໜ່ວຍທຸລະກິດ ແລະ ພໍ່ແມ່ປະຊາຊົນບັນດາເຜົ່າໃນທົ່ວ ແຂວງ.
- ປັບປຸງຕາໜ່າງການບໍລິການປະກັນສັງຄົມຢູ່ຂັ້ນເມືອງ ໃຫ້ເປັນລະບົບ ແລະ ມີຄຸນນະພາບ ພ້ອມທັງຕິດ ຕາມກວດກາການຈັດຕັ້ງປະຕິບັດວຽກງານໃຫ້ເປັນປົກກະຕິ ສາມາດເຄື່ອນໄຫວຢ່າງມີປະສິດທິຜົນ ແນ່ ໃສ່ຮັບປະກັນການສະໜອງອຸດໜູນປະກັນສັງຄົມປະເພດຕ່າງໆ.
- ລົງເກັບກຳຂໍ້ມູນຄອບຄົວ ແລະ ບ້ານເປົ້າໝາຍຕ່າງໆໃນບັນດາເມືອງທົ່ວແຂວງ ເພື່ອສ້າງໃຫ້ເປັນບ້ານ ພັດທະນາດ້ານແຮງງານ ແລະ ສະຫວັດດີການສັງຄົມ.
- ສືບຕໍ່ປະຕິບັດນະໂຍບາຍຕໍ່ຜູ້ທີ່ມີຜົນງານ ແລະ ຄຸນງາມຄວາມດີໃນພາລະກິດຮັບໃຊ້ການປະຕິວັດຊາດ ປະຊາທິປະໄຕ ຕາມດຳລັດ 272/ລບ ໃຫ້ສຳເລັດ; ຕິດຕາມ, ຊຸກຍູ້ສະມາຄົມຄົນພິການ, ຜູ້ອາຍຸສູງໃຫ້ ເຂົ້າເຖິງການບໍລິການທາງດ້ານສາທາລະນະຂັ້ນພື້ນຖານ ແລະ ສ້າງຕັ້ງກຸ່ມຄົນພິການໃຫ້ໄດ້ທົ່ວແຂວງ.
- ສ້າງລະບົບຕາໜ່າງປົກປ້ອງເດັກຂັ້ນບ້ານ ເພື່ອຊ່ວຍເຫຼືອຜູ້ທີ່ມີຄວາມສ່ຽງຕໍ່ການຄ້າມະນຸດ, ຜູ້ດ້ອຍ ໂອກາດໃນສັງຄົມ ເພື່ອຊ່ວຍໃຫ້ເຂົາມີວິຊາຊີບ, ມີລາຍໄດ້ເພີ່ມຂຶ້ນ ແລະ ບໍ່ຕົກຢູ່ໃນກຸ່ມທີ່ມີຄວາມສ່ຽງ ຕໍ່ການຄ້າມະນຸດ ແລະ ການໃຊ້ຄວາມຮຸນແຮງ.
- ເກັບກຳຂໍ້ມູນໄພພິບັດທາງທຳມະຊາດ ແລະ ມະນຸດສ້າງຂຶ້ນ ໂດຍມີການສົມທົບກັບຂະແໜງການທີ່ກ່ຽວ ຂ້ອງລາຍງານຂັ້ນເທິງ ພ້ອມທັງສະເໜີຂໍການຊ່ວຍເຫຼືອໃຫ້ທັນສະພາບການ; ຫັນເອົາກອງທຶນແຮຊ່ວຍ ເຫຼືອສຸກເສີນຜູ້ປະສົບໄພມາເປັນກອງທຶນສັງຄົມສົງເຄາະຂັ້ນແຂວງ ແລະ ເມືອງ ເພື່ອຊ່ວຍເຫຼືອ ແລະ ປັບ ປຸງຊີວິດການເປັນຢູ່ຂອງຜູ້ທີ່ໄດ້ຮັບຜົນກະທົບ, ຜູ້ດ້ອຍໂອກາດໃນສັງຄົມ ໃຫ້ທ່ວງທັນເວລາ ພ້ອມ ທັງປຸກລະດົມໃຫ້ທົ່ວສັງຄົມມີສ່ວນຮ່ວມໃນວຽກງານດັ່ງກ່າວໃຫ້ຫຼາຍຂຶ້ນ.

- ສືບຕໍ່ສ້າງຄວາມເຂັ້ມແຂງໃນການຈັດຕັ້ງປະຕິບັດວຽກມະນຸດສະທຳ ໂດຍສຸມໃສ່ການປຸກລະດົມຂົນຂວາຍບໍລິຈາກເລືອດ ແລະ ສະໜອງເລືອດທີ່ປອດໄພ, ຊ່ວຍເຫຼືອບັນເທົາທຸກເບື້ອງຕົ້ນ, ການສົ່ງເສີມສຸຂະພາບຂັ້ນພື້ນຖານ, ການປະຖົມພະຍາບານ, ການກູ້ໄພສຸກເສີນ ໂດຍການມີສ່ວນຮ່ວມຂອງສັງຄົມຢ່າງກວ້າງຂວາງ.

## ເປົ້າໝາຍທີ່ 04: ພັດທະນາໄປຕາມທິດສີຂຽວ ເປັນມິດກັບສິ່ງແວດລ້ອມ.

ການພັດທະນາເສດຖະກິດ-ສັງຄົມຕ້ອງຕິດພັນກັບການປົກປັກຮັກສາສິ່ງແວດລ້ອມຕາມທິດສີຂຽວ ແລະ ຍືນຍົງ ໃນການຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ ໂດຍການຮ່ວມມືລະຫວ່າງພາກລັດ ແລະ ເອກະຊົນ, ຜູ້ປະກອບການ ເພື່ອຂຸດຄົ້ນ ແລະ ນຳໃຊ້ຊັບພະຍາກອນທຳມະຊາດຢ່າງມີປະສິດທິພາບ, ມີປະສິດທິຜົນສູງ ແລະ ຍືນຍົງ ທັງຮັບປະກັນການສ້າງຜົນປະໂຫຍດສູງສຸດໃຫ້ປະເທດຊາດ ແລະ ປະຊາຊົນ ໂດຍສະເພາະແມ່ນການຂາຍອົກຊີ ($O_2$) ຈາກຊັບພະຍາກອນໄມ້. ຖືສຳຄັນການແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ ດ້ວຍການການຫຼຸດຜ່ອນມົນລະພິດ, ສິ່ງເສດເຫຼືອ ແລະ ການປ່ອຍທາດອາຍພິດເຮືອນແກ້ວ ຄຽງຄູ່ກັບການກະກຽມຄວາມພ້ອມຮັບມື ແລະ ຕອບໂຕ້ໄພພິບັດທຳມະຊາດຢ່າງທັນການ.

1. **ແຜນວຽກຈຸດສຸມທີ 1: ການຄຸ້ມຄອງ ແລະ ນຳໃຊ້ຊັບພະຍາກອນທຳມະຊາດໃຫ້ມີຄວາມຍືນຍົງ:**

**1.1 ຄາດໝາຍ ແລະ ຕົວຊີ້ບອກ:**

- ສູ້ຊົນໃຫ້ເນື້ອທີ່ປ່າປົກຫຸ້ມ ກວມ 60% ຂຶ້ນໄປ ຂອງເນື້ອທີ່ທັງໝົດທົ່ວແຂວງ.
- ຟື້ນຟູປ່າໃຫ້ໄດ້ 75.000 ເຮັກຕາ, ສະເລ່ຍ 15.000 ເຮັກຕາ/ປີ.
- ປູກໄມ້ໃຫ້ໄດ້ 1.750 ເຮັກຕາ (ສະເລ່ຍ 350 ເຮັກຕາ/ປີ).
- ເຜີຍແຜ່ລະບຽບ, ກົດໝາຍ ແລະ ນິຕິກຳກ່ຽວກັບວຽກງານປ່າໄມ້ ໃຫ້ໄດ້ 60%ຂອງບ້ານໃນທົ່ວແຂວງ.
- ສ້າງແຜນຄຸ້ມຄອງປ່າໄມ້ຂັ້ນບ້ານ ໃຫ້ໄດ້ 200 ບ້ານຂຶ້ນໄປ.
- ສູ້ຊົນສ້າງແຜນຈັດສັນທີ່ດິນ, ຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແບບຮອບດ້ານໃນລະດັບແຂວງ ແລະ ລະດັບເມືອງ ໃນຂອບເຂດທົ່ວແຂວງໃຫ້ສຳເລັດ.
- ສືບຕໍ່ສ້າງແຜນພັດທະນາແຮ່ທາດ ຂັ້ນແຂວງ ໃນໄລຍະສັ້ນ ແລະ ໄລຍະຍາວ, ພ້ອມກັນນັ້ນ ກໍ່ເອົາໃຈໃສ່ຄຸ້ມຄອງໃຫ້ຖືກຕ້ອງຕາມລະບຽບການ.
- ສູ້ຊົນອອກໃບຕາດິນໃຫ້ໄດ້ 35.000 ຕອນ, ສະເລ່ຍ 7.000 ຕອນຕໍ່ປີ.
- ພັດທະນາອ່າງຮັບນ້ຳ 12 ອ່າງ, ໂດຍສຸມໃສ່ 5 ອ່າງບູລິມະສິດ.

**1.2 ແຜນວຽກຈຸດສຸມ:**

**- ການຄຸ້ມຄອງ ແລະ ນຳໃຊ້ດິນ:** ປະຕິບັດກົນໄກຄຸ້ມຄອງ ແລະ ບໍລິຫານທີ່ດິນຢ່າງກົມກຽວ, ສ້າງແຜນແມ່ບົດຈັດສັນນຳໃຊ້ທີ່ດິນ ແລະ ຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິງແວດລ້ອມແບບຮອບດ້ານຂັ້ນແຂວງ ແລະ ຂັ້ນເມືອງໃຫ້ສຳເລັດ 100%,ຈັດສັນທີດິນຂັ້ນເມືອງ ໃຫ້ໄດ້ 9 ເມືອງ, ຂັ້ນບ້ານໃຫ້ສຳເລັດ 168 ບ້ານ ເທົ່າກັບ 100%, ຂຶ້ນທະບຽນອອກໃບຕາດິນໃຫ້ໄດ້ 35,000 ຕອນ, ໂດຍຫັນເປັນທັນສະໄຫມ ແລະ ຄຸ້ມຄອງລະບົບຖານຂໍ້ມູນໃບຕາດິນໃຫ້ສຳເລັດ; ສ້າງແຜນທີ່ເຂດປະເມີນລາຄາທີ່ດິນໃຫ້ສ□າເລັດໃນທົ່ວແຂວງ, ຄຸ້ມຄອງເນື້ອທີ່ດິນໃຫ້ເຊົ່າ ແລະ ສຳປະທານໃຫ້ຖືກຕ້ອງສອດຄ່ອງກັບລະບຽບກົດໝາຍ, ພ້ອມທັງແກ້ໄຂກົນໄກທີ່ເປັນສິ່ງຂີດຂວາງໃຫ້ແທດເໝາະກັບຄວາມເປັນຈິງ.

- ຜັນຂະຫຍາຍແຜນການນ□າໃຊ້ພື້ນທີ່ດິນເພື່ອການພັດທະນາ (APF) ໃນ 4 ເມືອງເປົ້າໝາຍຂອງໂຄງການ ( ເມືອງ ພຽງ, ເມືອງຊຽງຮ່ອນ, ເມືອງ ທົ່ງມີໄຊ ແລະ ເມືອງ ບໍ່ແຕນ) ໂດຍອີງໃສ່ແຜນດັ່ງກ່າວ ເພື່ອກຳນົດເຂດປູກເຂດລ້ຽງ, ເຂດສົ່ງເສີມການລົງທຶນ ແລະ ການຄຸ້ມຄອງການນຳໃຊ້ປ່າປະເພດຕ່າງໆ ໃຫ້ລະອຽດ ແລະ ຊັດເຈນ ແລະ ພ້ອມທັງຜັນຂະຫາຍໃນການຈັດຕັ້ງປະຕິບັດໄປສູ່ເມືອງອື່ນທີ່ຍັງເຫຼືອ ໃຫ້ໄດ້ 100%.

**- ວຽກງານການຄຸ້ມຄອງ ແລະ ນຳໃຊ້ຊັບພະຍາກອນນ້ຳ:** ຕ້ອງໄດ້ນຳໃຊ້ຊັບພະຍາກອນນ້ຳເຂົ້າໃນການ ພັດທະນາເສດຖະກິດ-ສັງຄົມ ໃຫ້ເກີດປະໂຫຍດສູງສຸດ ເປັນຕົ້ນ ນຳໃຊ້ໃນການບໍລິໂພກ ແລະ ອຸປະໂພກ

ຂອງ ປະຊາຊົນ, ການຜະລິດ, ການປະມົງ, ຜະລິດພະລັງງານໄຟຟ້າ ແລະ ຊົມໃຊ້ໃນອຸດສາຫະກໍາ ແລະ ອື່ນໆ. ສະນັ້ນ, ເພື່ອຮັບປະກັນການນໍາໃຊ້ນໍ້າຢ່າງພຽງພໍ, ມີປະສິດທິພາບ, ມີປະສິດທິຜົນ ແລະ ຍືນຍົງ ຕ້ອງສຸມໃສ່: ຄຸ້ມຄອງ ແລະ ຮັກສາແຫຼ່ງນໍ້າ ດ້ວຍການຊຸກຍູ້ສົ່ງເສີມການສ້າງກົນໄກປະສານງານໃນການຄຸ້ມຄອງ, ຈັດສັນ ແລະ ນໍາໃຊ້ນໍ້າແບບມີສ່ວນຮ່ວມຂອງຫຼາຍຂະແໜງການກ່ຽວຂ້ອງ ລວມທັງປະຊາຊົນບັນດາເຜົ່າ ແລະ ທຸກພາກສ່ວນໃນສັງຄົມ; ປົກປັກຮັກສາປ່າຕົ້ນນໍ້າ/ແຫຼ່ງນໍ້າທີ່ຕິດພັນກັບອ່າງຮັບນໍ້າ ໂດຍສ້າງຍຸດທະສາດການນໍາໃຊ້ນໍ້າ ແລະ ຊັບພະຍາກອນນໍ້າຂັ້ນແຂວງ, ຂັ້ນເມືອງ ແລະ ແຜນຄຸ້ມຄອງອ່າງຮັບນໍ້າ ແລະ ດໍາເນີນການຄຸ້ມຄອງນໍ້າ ແລະ ຊັບພະຍາກອນນໍ້າ ໃນ 12 ອ່າງຮັບນໍ້າ, ໃນນີ້ສຸມໃສ່ 5 ອ່າງ ບູລິມະສິດຄື: ນໍ້າງື່ມ, ນໍ້າຣຸ່ງ, ນໍ້າຄອບ, ນໍ້າພູນ ແລະ ນໍ້າຮອຍ; ໂດຍຄຸ້ມຄອງແບບເຊື່ອມສານ; ປົກປັກຮັກສາ, ປັບປຸງ ແລະ ຂະຫຍາຍອ່າງເກັບນໍ້າທໍາມະຊາດ (ຫ້ວຍ, ໜອງ, ຄອງ, ບຶງ) ແລະ ແຫຼ່ງນໍ້າທີ່ຄົນສ້າງຂຶ້ນໃຫ້ມີປະສິດທິພາບສູງຂຶ້ນ ແລະ ມີຄວາມຍືນຍົງ; ປົກປັກຮັກສາ ກວດກາຕິດຕາມຄຸນນະພາບ ນໍ້າ 28 ຈຸດ, ແລະ ສ້າງແຜນຄຸ້ມຄອງ, ຈັດສັນ ແລະ ນໍາໃຊ້ນໍ້າ ແລະ ຊັບພະຍາກອນນໍ້າຢ່າງມີປະສິດທິພາບ, ປະສິດທິຜົນ ແລະ ຍືນຍົງ; ໂດຍເລັ່ງໃສ່ເຂດທີ່ມີຄວາມສ່ຽງຕໍ່ແຫລ່ງນໍ້າກິນ-ນໍ້າໃຊ້, ນ□າໃຊ້ແກ່ການຜະລິດເຊັ່ນ: ເຂດເມືອງ ໄຊຍະບູລີ, ເມືອງ ຄອບ, ເມືອງ ປາກລາຍ, ເມືອງ ບໍ່ແຕນ ພ້ອມທັງສ້າງກົນໄກ ແລະ ລະບຽບຄຸ້ມຄອງຢ່າງເຂັ້ມງວດ.

- ວຽກງານຄຸ້ມມົນລະພິດທາງນໍ້າ ແລະ ອາກາດ: ຊຸກຍູ້ການປັບປຸງລະບົບຄຸ້ມຄອງມົນລະພິດໃຫ້ເຂັ້ມແຂງ ແລະ ມີປະສິດທິພາບສູງຂຶ້ນ ໂດຍສຸມໃສ່: ຈັດຕັ້ງປະຕິບັດລະບຽບກົດໝາຍຕ່າງໆ ທີ່ກ່ຽວຂ້ອງໃຫ້ມີປະສິດທິພາບ, ມີປະສິດທິຜົນ ແລະ ຮັດກຸມ; ດໍາເນີນການຕິດຕາມກວດກາຄຸນນະພາບ ສິ່ງແວດລ້ອມ ໂດຍສະເພາະ ຄຸນນະພາບນໍ້າ ແລະ ຄຸນນະພາບອາກາດ (PM2.5) ແລະ ຊຸກຍູ້ດາເນີນມາດຕະການ ຫຼຸດຜ່ອນ ແລະ ສະກັດກັ້ນໄຟປ່າ ໃນເຂດທີ່ມີຄວາມສ່ຽງໃນຂອບເຂດທົ່ວແຂວງ; ເພີ່ມຂີດຄວາມສາມາດໃຫ້ແກ່ພະນັກງານຂັ້ນແຂວງ ແລະ ເມືອງ.

- ວຽກງານການຄຸ້ມຄອງ ແລະ ນໍາໃຊ້ຊັບພະຍາກອນປ່າໄມ້: ສຸມໃສ່ສ້າງກົນໄກການສ້າງ ແລະ ຈັດຕັ້ງປະຕິບັດແຜນການຄຸ້ມຄອງ, ປົກປັກຮັກສາ ແລະ ນໍາໃຊ້ປ່າແບບມີສ່ວນຮ່ວມຂອງຂະແໜງການທີ່ກ່ຽວຂ້ອງຂັ້ນແຂວງ ເມືອງ ແລະ ບ້ານ; ສໍາຫຼວດ, ຈັດແບ່ງ, ໝາຍເຂດປ່າ ແລະ ປະເພດປ່າໃຫ້ສໍາເລັດໂດຍໄວ ພ້ອມທັງໃຫ້ມີການຕິດຕາມກວດກາການຄຸ້ມຄອງ ແລະ ນໍາໃຊ້ປ່າແຕ່ລະປະເພດ, ສົ່ງເສີມການຄຸ້ມຄອງ, ປົກປັກຮັກສາ ແລະ ນໍາໃຊ້ປ່າ ແບບຍືນຍົງຂອງຊຸມຊົນ ເພື່ອຫຼຸດຜ່ອນເນື້ອທີ່ປ່າໄມ້ທີ່ມີການເຊື່ອມໂຊມ ແລະ ວາງຄາດໝາຍສູ້ຊົນເຮັດໃຫ້ເນື້ອທີ່ປົກຫຸ້ມປ່າໄມ້ບໍ່ໃຫ້ຫຼຸດ 60% ຂອງເນື້ອທີ່ທົ່ວແຂວງ ແລະ ຊຸກຍູ້ການຂະຫຍາຍຕົວເສດຖະກິດ; ສ້າງລາຍຮັບ ແລະ ຫຼຸດຜ່ອນຄວາມທຸກຍາກ; ຊຸກຍູ້ ແລະ ສົ່ງເສີມໃຫ້ມີການລົງທຶນຂອງພາກເອກະຊົນພາຍໃນ ແລະ ຕ່າງປະເທດ ປູກປ່າ ຫຼື ປູກຕົ້ນໄມ້ແບບປະສົມປະສານຫມູນວຽນໃສ່ດິນປອກໂລ້ນ ແລະ ດິນເຊື່ອມໂສມ ເພື່ອຂະຫຍາຍເນື້ອທີ່ປົກຫຸ້ມຂອງປ່າ ແລະ ຕອບສະໜອງອຸດສາຫະກໍາປຸງແຕ່ງ ແລະ ສົ່ງອອກ ເພື່ອຊຸກຍູ້ການຂະຫຍາຍຕົວເສດຖະກິດ, ສ້າງວຽກເຮັດງານທໍາ, ຫຼຸດຜ່ອນຄວາມທຸກຍາກ ແລະ ຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ.

- ເອົາໃຈໃສ່ໃນການເຜີຍແຜ່ລະບຽບ, ກົດໝາຍ, ນິຕິກໍາກ່ຽວກັບປ່າໄມ້ໃຫ້ທົ່ວເຖິງ ເພື່ອຄຸ້ມຄອງ, ປົກປັກຮັກສາປ່າໄມ້, ທີ່ດິນປ່າໄມ້ ໃຫ້ເຂົ້າສູ່ລະບຽບ, ຕິດພັນກັບການພັດທະນາວຽກງານປ່າໄມ້ດ້ວຍການຟື້ນຟູບູລະນະປ່າທີ່ຊຸດໂຊມໃຫ້ກາຍເປັນປ່າທີ່ອຸດົມສົມບູນ ພ້ອມທັງປູກໄມ້, ເຄື່ອງປ່າຂອງດົງ, ພືດເປັນຢາໃສ່ພື້ນທີ່ໆເປັນພູປອກໂລ້ນເພື່ອສ້າງມູນຄ່າເພີ່ມຂອງປ່າໄມ້.

- ສຸມໃສ່ການປັບປຸງ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ຄະນະປ່າໄມ້ບ້ານ ແລະ ອົງການປົກຄອງບ້ານ ເພື່ອສ້າງເງື່ອນໄຂຮອບດ້ານ ໃຫ້ແກ່ການຄັດເລືອກບ້ານແບບຢ່າງໃນການຄຸ້ມຄອງປົກປັກຮັກສາປ່າໄມ້ ເພື່ອແນໃສ່ສ້າງບ້ານໃຫ້ກາຍເປັນບ້ານພັດທະນາທາງດ້ານວຽກງານປ່າໄມ້ ໃຫ້ໄດ້ 1 ເມືອງ (ເມືອງພຽງ).

- ລົງສົມທົບບັນດາເມືອງ ເພື່ອວາງແຜນຄຸ້ມຄອງຈັດສັນປ່າໄມ້ບ້ານໃຫ້ເປັນລະບົບຢ່າງລະອຽດຢູ່ແຕ່ລະບ້ານ ສ້າງໃຫ້ບ້ານມີການຈັດແບ່ງຂອບເຂດແຕ່ລະປະເພດປ່າໃຫ້ຈະແຈ້ງ ຕິດພັນກັບການພັດທະນາປ່າໄມ້ບ້ານ ໃຫ້ໄດ້

35 ບ້ານ, ໂດຍເອົາເມືອງພຽງເປັນຈຸດສຸມ, ເອົາໃຈໃສ່ຈັດສັນການຄຸ້ມຄອງ, ນຳໃຊ້ທີ່ດິນປ່າໄມ້ຢູ່ໃນສາມປະເພດປ່າໃຫ້ຢູ່ໃນຂອບເຂດທີ່ລັດໄດ້ອະນຸຍາດໃຫ້ ເພື່ອສະກັດກັ້ນການບຸກລຸກເຂົ້າໄປໃນເຂດສະຫງວນ, ເຂດຫວງຫ້າມ.

- ເອົາໃຈໃສ່ໃນການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ປ່າໄມ້, ທີ່ດິນປ່າໄມ້ ທີ່ຢູ່ໃນສາມປະເພດປ່າໃຫ້ເຂັ້ມງວດ ເຮັດໃຫ້ໂຄງສ້າງຂອງປ່າໄມ້ໄດ້ມີຄວາມອຸດົມສົມບູນ, ກາຍເປັນທີ່ຢູ່ອາໃສຂອງສັດປ່ານາໆຊະນິດ.

- ປະສານສົມທົບກັບອົງການປົກຄອງແຕ່ລະຂັ້ນ ເພື່ອປູກຈິດສຳນຶກ ແລະເຜີຍແຜ່ວຽກງານ ໃນການຕ້ານ ແລະ ສະກັດກັ້ນໄຟໄໝ້ລາມປ່າໃນແຕ່ລະປີ.

- **ວຽກງານຄຸ້ມຄອງຊັບພະຍາກອນແຮ່ທາດ:** ກ□ານົດເຂດພັດທະນາ, ເຂດສະຫງວນແຮ່ທາດ ໃຫ້ໄປຕາມແຜນຍຸດທະສາດການພັດທະນາແຮ່ທາດແຫ່ງຊາດ, ເພື່ອຜະລິດຕອບສະໜອງຄວາມຕ້ອງການຊົມໃຊ້ ໃຫ້ເກີດຜົນປະໂຫຍດສູງສຸດ.

## 2. ແຜນວຽກຈຸດສຸມທີ 2: ການເຕີບໂຕສີຂຽວ ແລະ ການແກ້ໄຂບັນຫາຕໍ່ກັບການປ່ຽນແປງດິນຟ້າອາກາດ.

### 2.1 ຄາດຫມາຍ ແລະ ຕົວຊີ້ບອກ:

- ສຸມໃສ່ຈັດຕັ້ງປະຕິບັດວຽກງານເຕີບໂຕສີຂຽວຕາມທິດຂອງລັດຖະບານໃຫ້ເຂົ້າສູ່ລວງເລິກ.
- ສ້າງບ້ານສີຂຽວສະອາດ ແລະ ງາມຕາ ໃຫ້ໄດ້ 30% ຂອງບ້ານທັງໝົດທົ່ວແຂວງ.
- ອອກໃບຢັ້ງຢືນດ້ານສິ່ງແວດລ້ອມ ໃຫ້ໄດ້ 2.100 ຫົວໜ່ວຍ.

### 2.2 ວຽກງານຈຸດສຸມ:

**(1) ວຽກການເຕີບໂຕສີຂຽວ:** ຮ່ວມກັບຂະແໜງການທີ່ກ່ຽວຂ້ອງຊຸກຍູ້ຈັດຕັ້ງປະຕິບັດວຽກງານການເຕີບໂຕສີຂຽວ, ດັ່ງນີ້:

- ປັບປຸງລະບົບການຄຸ້ມຄອງຂີ້ເຫຍື້ອ ແລະ ສິ່ງເສດເຫຼືອ ໃຫ້ມີຄຸນນະພາບ ແລະ ມີປະສິດທິຜົນສູງຂຶ້ນ ໂດຍສຸມໃສ່ປູກຈິດສຳນຶກໃຫ້ປະຊາຊົນບໍ່ຖິ້ມຂີ້ເຫຍື້ອຊະຊາຍ; ຂັດແຍກຂີ້ເຫຍື້ອຕາມຫຼັກການ 3R ເພື່ອໃຫ້ສາມາດນຳໄປຜະລິດ ແລະ ມານຳໃຊ້ຄືນ ຫຼື ເປັນວັດຖຸສິ່ງຂອງເພື່ອສ້າງມູນຄ່າເພີ່ມທາງດ້ານເສດຖະກິດ ແລະ ຫຼຸດຜ່ອນການນຳໃຊ້ຊັບພະຍາກອນທຳມະຊາດທີ່ມີຢ່າງຈຳກັດໃຫ້ເກີດປະໂຫຍດສູງສຸດ ທັງເປັນການຫຼຸດຜ່ອນສິ່ງເສດເຫຼືອ ແລະ ສ້າງສະໜາມຂີ້ເຫຍື້ອໃຫ້ໄດ້ 5 ແຫ່ງ.
- ສົ່ງເສີມການນຳໃຊ້ວັດຖຸຈາກທຳມະຊາດທີ່ສາມາດຍ່ອຍສະຫລາຍໃນການຫຸ້ມຫໍ່ຜະລິດຕະພັນ, ທີ່ສາມາດນຳໃຊ້ໄດ້ຫລາຍເທື່ອໃນການຫຸ້ມຫໍ່ສິນຄ້າບໍລິໂພກປະຈຳວັນ ເພື່ອຫຼຸດຜ່ອນຕົ້ນທຶນການຄ້າ, ສິ່ງເສດເຫຼືອ ແລະ ຄວາມເປັນມິດຕໍ່ສິ່ງແວດລ້ອມ ສົ່ງເສີມອຸດສາຫະກຳປຸງແຕ່ງຂະໜາດນ້ອຍ ແລະ ກາງຕາມທິດສີຂຽວ ແລະ ຍືນຍົງ ໂດຍສະເພາະ ກະສິກຳສະອາດ ແລະ ກະສິກຳປອດສານພິດ, ຊຸກຍູ້ການທ່ອງທ່ຽວແບບອະນຸລັກປະຊາຊົນມີສ່ວນຮ່ວມໃນເຂດທຳມະຊາດ ແລະ ເປັນມິດກັບສິ່ງແວດລ້ອມ.
- ສ້າງລະບົບກົນໄກຄຸ້ມຄອງຕົວເມືອງ ສີຂຽວ, ສະອາດ, ສວຍງາມ ໃຫ້ໄດ້ທັງໝົດ 11 ເມືອງ, 130 ບ້ານທົ່ວແຂວງ, ຕິດຕາມກວດກາຄືນແຜນຄຸ້ມຄອງສິ່ງແວດລ້ອມ ແລະ ອອກໃບຢັ້ງຢືນດ້ານສິ່ງແວດລ້ອມ ໃຫ້ໄດ້ 2.100 ຫົວໜ່ວຍ. ຄຸ້ມຄອງການນຳໃຊ້ສານເຄມີໃຫ້ຢູ່ໃນເກນມາດຖານທີ່ໄດ້ກຳນົດໄວ້, ແລະ ຄຸ້ມຄອງສິ່ງເສດເຫຼືອ, ເພື່ອຫຼີກເວັ້ນການຖິ້ມຂີ້ເຫຍື້ອຊະຊາຍ. ຂະຫຍາຍກົນໄກການປັບຕົວ ແລະ ຫຼຸດຜ່ອນຜົນກະທົບຈາກການປ່ຽນແປງດິນຟ້າອາກາດເຂດມີຄວາມສ່ຽງຢູ່ຂອບເຂດທົ່ວແຂວງ, ພ້ອມທັງສຶກສາຄວາມບອບບາງຕໍ່ການປ່ຽນແປງດິນຟ້າອາກາດ.

(2). **ວຽກງານແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ**: ຈັດຕັ້ງປະຕິບັດຄາດຫມາຍການຫຼຸດຜ່ອນທາດ ອາຍພິດເຮືອນແກ້ວ ເພື່ອປະກອບສ່ວນເຂົ້າໃນການບັນເທົາການປ່ຽນແປງສະພາບດິນຟ້າອາກາດ; ສົ່ງເສີມການນຳໃຊ້ເຕັກນິກ ແລະ ເຕັກໂນໂລຊີທີ່ທັນສະໄໝ ທີ່ສ້າງສິ່ງເສດເຫຼືອຫນ້ອຍ, ປະຢັດພະລັງງານ ແລະ

ນຳໃຊ້ພະລັງງານທີ່ສະອາດ-ເປັນມິດກັບສິ່ງແວດລ້ອມ ແລະ ສົ່ງເສີມການປົກປັກຮັກສາ ແລະ ຂະຫຍາຍແຫຼ່ງຊຶມຊັບທາດອາຍເຮືອນແກ້ວ ເປັນຕົ້ນ ປ່າໄມ້, ດິນ ແລະ ອື່ນໆ.

### 3. ແຜນວຽກຈຸດສຸມທີ 3: ການກຽມຄວາມພ້ອມຮັບມືຈາກໄພພິບັດ:

#### 3.1 ຄາດໝາຍ ແລະ ຕົວຊີ້ບອກ:

- ປັບປຸງ ແລະ ສ້າງລະບົບແຈ້ງເຕືອນໄພໃນຂອບເຂດທົ່ວແຂວງ ໃຫ້ໄດ້ 11 ຈຸດ.
- ສ້າງແຜນທີ່ຄວາມສ່ຽງໄພພິບັດ ແລະ ແຜນການກຽມພ້ອມຕອບໂຕ້ທີ່ມີຄວາມສ່ຽງຢູ່ 11 ເມືອງ.
- ສ້າງຄວາມເຂັ້ມແຂງວຽກງານຄຸ້ມຄອງໄພພິບັດ ໃຫ້ຄະນະກຳມະການຂັ້ນແຂວງ, ເມືອງ, ບ້ານ ແລະ ຝຶກຊ້ອມເຫດການຈຳລອງໄພພິບັດສຸກເສີນໃຫ້ໄດ້ 2 ຄັ້ງ.
- ສ້າງລະບົບສາງເກັບມ້ຽນເຄື່ອງ ເພື່ອປົກປັກຮັກສາ ພາຫະນະ, ອຸປະກອນ, ເຄື່ອງອຸປະໂພກ-ບໍລິໂພກ ໃຫ້ສາມາດນຳໃຊ້ໄດ້ຢ່າງຍາວນານ ແລະ ມີປະສິດທິຜົນ ໃຫ້ໄດ້ 1 ແຫ່ງ.
- ຂະຫຍາຍຄະນະກຳມະການຄຸ້ມຄອງໄພພິບັດຂັ້ນບ້ານໃຫ້ກວມເອົາ 80% ຂອງຈຳນວນບ້ານທັງໝົດພາຍໃນແຂວງ.

#### 3.2 ແຜນວຽກຈຸດສຸມ.

- ສ້າງຄວາມພ້ອມໃນການຮັບມື ແລະ ປ້ອງກັນໄພພິບັດ:ໂດຍການປະສານສົມທົບ ຂະແໜງການກ່ຽວຂ້ອງ ເພື່ອສ້າງແຜນຫຼຸດຜ່ອນຄວາມສ່ຽງ ຈາກໄພພິບັດ ແລະ ການປ່ຽນແປງດິນຟ້າອາກາດ ໃຫ້ໄດ້ 11 ເມືອງ ເພື່ອເຊື່ອມສານເຂົ້າກັບແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ, ຂອງເມືອງ ແລະ ສ້າງຄວາມເຂັ້ມແຂງ ຄວາມສາມາດຕອບໂຕ້ ແລະ ຫລີກລ້ຽງໄພພິບັດຈາກສະພາບການປ່ຽນແປງຂອງດິນຟ້າອາກາດ ໂດຍສະເພາະ ສ້າງແຜນຄວບຄຸມປ້ອງກັນ ແລະ ແຜນຕອບໂຕ້ໄພພິບັດຂອງແຕ່ລະເມືອງໃນທົ່ວແຂວງໃຫ້ສຳເລັດ, ສ້າງແຜນທີ່ຄວາມສ່ຽງແຕ່ລະເຂດ 11 ເມືອງທົ່ວແຂວງ ໂດຍເລັ່ງໃສ່ 3 ເມືອງທີ່ມີຄວາມສ່ຽງ ບອບບາງກວ່າໝູ່ເຊັ່ນ: ເມືອງຄອບ, ເມືອງທົ່ງມີໄຊ ແລະ ເມືອງບໍ່ແຕນ, ຝຶກຊ້ອມເຫດການຈຳລອງໄພພິບັດໃຫ້ໄດ້ 02 ຄັ້ງ, ຝຶກອົບຮົມຄວາມຮູ້ຄວາມສາມາດການຄຸ້ມຄອງປ້ອງກັນ ໃຫ້ແກ່ບ້ານ, ໂຮງຮຽນ, ກຳລັງຕ່າງໆ ໃນທົ່ວແຂວງ; ສ້າງຄວາມອາດສາມາດໃນການຕ້ານໄພນ້ຳຖ້ວມ, ໄພແຫ້ງແລ້ງ ແລະ ແຜ່ນດິນໄຫວ ຢູ່ໃນເຂດທີ່ມີຄວາມສ່ຽງໃນທົ່ວແຂວງ; ປັບປຸງ ແລະ ຄຸ້ມຄອງນຳໃຊ້ເຄື່ອງມືອຸຕຸນິຍົມ-ອຸທົກກະສາດທີ່ມີໃຫ້ເກີດປະໂຫຍດ ແລະ ຕິດຕັ້ງສະຖານີອຸຕຸກະເສດ 2 ແຫ່ງ, ສ້າງຫຼາວັດແທກນ້ຳໃຫ້ໄດ້ 11 ຈຸດ, ສ້າງສະຖານີອຸຕຸນິຍົມໃໝ່ 2 ແຫ່ງ (ເມືອງຊຽງຮ່ອນ ແລະ ເມືອງແກ່ນທ້າວ).
- ເພີ່ມທະວີການປ້ອງກັນ, ການຄວບຄຸມ ແລະ ການຟື້ນຟູຄືນ ຫຼັງໄພພິບັດ ໂດຍການສ້າງຄວາມເຂັ້ມແຂງໃຫ້ຄະນະກຳມະການຄຸ້ມຄອງໄພພິບັດ ຂັ້ນແຂວງ, ເມືອງ ແລະ ບ້ານ ໃນການຫຼຸດຜ່ອນຄວາມສ່ຽງ ແລະ ກະກຽມ ຄວາມພ້ອມຮັບມືກັບໄພພິບັດ; ສົ່ງເສີມການສ້າງຕັ້ງກອງທຶນຂອງຄັງແຮ່ຊ່ວຍເຫຼືອສຸກເສີນຂັ້ນແຂວງ, ເມືອງ ແລະ ບ້ານເພື່ອໃຫ້ສາມາດຊ່ວຍເຫຼືອບັນເທົາທຸກແກ່ຜູ້ປະສົບເຄາະຮ້າຍຈາກໄພພິບັດທຳມະຊາດໄດ້ຢ່າງທັນການ ແລະ ມີປະສິດທິຜົນສູງ, ເພີ່ມທະວີການປະສານງານລະຫວ່າງຂະແໜງການທີ່ກ່ຽວຂ້ອງຂັ້ນແຂວງ ແລະ ເມືອງ ໃນການຊ່ວຍເຫຼືອ ແລະ ແກ້ໄຂຜົນເສຍຫາຍຈາກໄພພິບັດ ຢ່າງມີປະສິດທິຜົນ. ສົ່ງເສີມ ການມີສ່ວນຮ່ວມຂອງທຸກພາກສ່ວນໃນສັງຄົມ ທັງພາຍໃນ ແລະ ຕ່າງປະເທດ.
- ປັບປຸງຄະນະກຳມະການຄຸ້ມຄອງໄພພິບັດຂັ້ນບ້ານ ທີ່ມີຢູ່ແລ້ວຄືນໃໝ່ ແລະ ສ້າງຕັ້ງຄະນະກຳມະການຄຸມຄອງໄພພິບັດ ໃນບັນດາບ້ານທີ່ຍັງຄ້າງ ພ້ອມທັງຝຶກອົບຮົມສິດໜ້າທີ່, ພາລະບົດບາດ ເພື່ອສ້າງຄວາມເຂັ້ມແຂງ ສາມາດແຈ້ງເຕືອນ, ເກັບກຳຂໍ້ມູນ, ລາຍງານຜົນກະທົບ ເພື່ອສະເໜີຂໍຊ່ວຍເຫຼືອບັນເທົາທຸກແກ່ຜູ້ປະສົບໄພພິບັດໄດ້ຢ່າງທັນການ ແລະ ມີປະສິດທິຜົນສູງ.

## ເປົ້າໝາຍທີ່ 05: ພັດທະນາຕາມທິດການຮ່ວມມື, ເຊື່ອມໂຍງ-ເຊື່ອມຈອດ ກັບບັນດາແຂວງ ແລະ ປະເທດໃກ້ຄຽງ.

### 1. ຄາດໝາຍ ແລະ ຕົວຊີ້ວັດ.

- ສູ້ຊົນສ້າງເສັ້ນທາງເຂົ້າເຖິງບ້ານໃຫ້ທຽວໄດ້ 2 ລະດູ ໃຫ້ກວມ 90% ຂອງຈໍານວນບ້ານທັງໝົດ.
- ສ້າງລະບົບສາງພັກສິນຄ້າ, ລະບົບໂລຈິດສະຕິກຕາມແລວທາງເສດຖະກິດ ຢູ່ດ່ານສາກົນໃຫ້ໄດ້ 4 ແຫ່ງ (ດ່ານສາກົນປາງມອນ, ນໍ້າເງິນ, ນໍ້າເຫືອງ ແລະ ພູດູ່).
- ສ້າງສະຖານີຂົນສົ່ງໂດຍສານ ໃຫ້ໄດ້ 6 ແຫ່ງ.
- ຍົກລະດັບເສັ້ນທາງປູຫີນເປັນທາງປູຢາງໃຫ້ເພີ່ມຂຶ້ນ 15% ຕໍ່ປີ.
- ສ້າງເຮືອທ່າບັກເຊື່ອມຕໍ່ແຂວງຕໍ່ແຂວງໃຫ້ໄດ້ 1 ແຫ່ງ (ບ້ານຜາລຽບ).
- ປັບປຸງຜັງເມືອງໃຫ້ໄດ້ 3 ເມືອງ (ເມືອງ ໄຊສະຖານ, ເມືອງພຽງ ແລະ ເມືອງເງິນ).
- ປັບປຸງຜັງບ້ານໃຫ້ໄດ້ 100%.
- ຂະຫຍາຍນໍ້າປະປາໃຫ້ໄດ້ 1 ເມືອງ ແລະ ນໍ້າປະປາຊຸມຊົນໃຫ້ໄດ້ 10 ພື້ນທີ່.
- ສູ້ຊົນສ້າງຈຸດສາກໝໍ້ໄຟລົດໄຟຟ້າ ໃຫ້ໄດ້ 2 ແຫ່ງ ຢູ່ໃນເທດສະບານແຂວງ.

**2. ແຜນວຽກຈຸດສຸມ.**

- ກໍ່ສ້າງສະຖານີຂົນສົ່ງໂດຍສານຂະໜາດໃຫຍ່ ແລະ ທັນສະໄໝ ເພື່ອເປີດການຂົນສົ່ງຜ່ານແດນ ເຊື່ອມຕໍ່ກັບປະເທດອ້ອມຂ້າງເຊັ່ນ: ພາກເໜືອຂອງປະເທດໄທ, ປະເທດຈີນ, ແລະ ຫວຽດນາມ, ຕາມແລວທາງເສດຖະກິດ, ກໍ່ສ້າງສະຖານີຂົນສົ່ງຂະໜາດກາງ, ຂະໜາດນ້ອຍ ຢູ່ບັນດາເມືອງ ແລະ ບັນດາຈຸດສຸມພັດທະນາຕ່າງໆຂອງແຂວງ, ພັດທະນາການບໍລິການຂົນສົ່ງ, ກໍ່ສ້າງລະບົບການຂົນສົ່ງມວນຊົນ ທີ່ທັນສະໄໝຢູ່ເທດສະບານແຂວງ ແລະ ເມືອງທີ່ມີເງື່ອນໄຂ ດ້ວຍລົດປະຢັດພະລັງງານ (ລົດໄຟຟ້າ) ຕາມຍຸດທະສາດສົ່ງເສີມການນໍາໃຊ້ພະລັງງານສະອາດ.

